Rural Development in Mountainous Areas of Northern Lao PDR
Component 3: Institutional Development



# Rights-Based Approaches to Gender and Livelihoods
## Implications for Programming

Rita Gebert (English report)
**Ny Luangkhot (Lao report)**

gtz

COOPERATION LAO PDR
FEDERAL REPUBLIC OF GERMANY

June 2007

## ສາລະບານ


**ຄຳຂອບໃຈ**

**ບົດລາຍງານຫຍໍ້**

**1. ພາກສະເໜີ**

1.1. ເຫດຜົນຂອງການປະເມີນ 1-6

1.2 ວິທີການປະເມີນ 7-8

1.3 ບົດບາດ ຍິງ-ຊາຍ ແລະ ສິດທິມະນຸດ 9

**2. ສະພາບການ ເລື້ອງ ບົດບາດ ຍິງ-ຊາຍ ໃນເຂດເປົ້າໝາຍ**

2.1 ການດຳລົງຊີວິດ (ວຽກການຜລິດ) 10-13

*2.1.1 ວຽກການຖະໜຸບຳລຸງຄົນໃນຄອບຄົວ*

2.2 ສະຖານະພາບຂອງແມ່ຍິງ ແລະ ສິດທິຂອງແມ່ຍິງ 14

*2.2.1 ຄວາມຮຸນແຮງໃນຄອບຄົວ* 17

2.3 ບົດບາດຂອງສະຫະພັນແມ່ຍິງຂັ້ນບ້ານ 19

**3. ວິທີການເຮັດວຽກຂອງແຜນງານ ຢູ່ຂັ້ນບ້ານ**

3.1 ກ່ຽວກັບ ສິດທິ ດ້ານເສດຖະກິດ 21

3.2 ກ່ຽວກັບ ສິດທິ ການມີສ່ວນຮ່ວມ ໃນການພັດທະນາຊົນນະບົດ 24-26

*3.2.1 ຂໍ້ສັງເກດ ກ່ຽວກັບ ພວກຜູ້ໃຫ້ການບໍລິການສັງຄົມ ຢູ່ຂັ້ນບ້ານ*

**4. ການເອົາ ບົດບາດ ຍິງ-ຊາຍ ເປັນກະແສຫລັກ ໃນແຜນງານ RLIP-RDMA**

**5. ຂໍ້ສະຫລຸບລວມ 27-29**

**6. ຂໍ້ແນະນຳ**

6.1 ຂໍ້ແນະນຳລວມ ສຳລັບ ແຜນງານ RLIP-RDMA 30-32

*6.1.1 ຂໍ້ແນະນໍາ ເພື່ອປະຕິບັດໂລດໃນຂັ້ນຕໍ່ໄປໃນມໍ່ໆນີ້*

6.2 ຂໍ້ສະເໜີ ກ່ຽວກັບ ຕໍາແໜ່ງຂອງທີ່ປຶກສາ ຂອງ DED 32-34

6.3 ຂໍ້ແນະນໍາ (ທີ່ປະຕິບັດເພື່ອໃຫ້ມີຜົນອອກແບບຍາວນານ) 35-37

**ເອກະສານຄັດຊ້ອນ:**

1 ຕາຕະລາງເວລາການເຮັດວຽກຂອງທີ່ປຶກສາ

2 ຊື່ ຜູ້ເຂົ້າຮ່ວມສົນທະນາໃນເວລາ ຜົນອອກ ຢູ່ ໄຊຍະບູລີ

## ບົດລາຍງານຫຍໍ້

ການຄົ້ນຄວ້າ ກ່ຽວກັບ ວິທີການເຮັດວຽກ ເລື້ອງບົດບາດ ຍິງ-ຊາຍ ທີ່ແນໃສ່ ການໃຊ້ສິດທິ ຂອງ ແມ່ຍິງ ໃນ ການດຳລົງຊີວິດຢູ່ຊົນນະບົດ, ໂດຍອີງຕາມຂອບເຂດພື້ນຖານຂອງ ສົນທິສັນຍາ ວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ[1], ແມ່ນການມອບໝາຍ ໂດຍ ອົງການ GTZ RDMA[2] ທີ່ສະໜັບສະໜູນການຊ່ວຍເຫລືອດ້ານວິຊາການແກ່ການປະຕິບັດໂຄງການ IFAD RLIP ຢູ່ແຂວງໄຊຍະບູລີ[3]. ການຄົ້ນຄວ້ານີ້ດຳເນີນຢູ່ 3 ໃນ 5 ເມືອງໂຄງການ, ແຂວງໄຊຍະບູລີ, ໃນໄລຍະເວລາ ວັນທີ 6 ຫາ 22 ມີຖຸນາ, 2007.

ສະພາບການລວມ ກ່ຽວກັບ ການດຳລົງຊີວິດຂອງ ແມ່ຍິງ ໃນເຂດປະຕິບັດແຜນງານ ໄດ້ມີການພັນລະນາລະອຽດໄວ້ຢູ່ໃນບົດລາຍງານ ການສຳຫລວດຂອງອົງການ IFAD 2004.[4] ເຖິງວ່າ ບົດລາຍງານການສຳຫລວດຂອງ IFAD ພັນລະນາລະອຽດ ກ່ຽວກັບ ຈຳນວນບ້ານໃນເຂດເປົ້າໝາຍຂອງໂຄງການຢູ່ແຂວງໄຊຍະບູລີກໍຕາມ, ແຕ່ຂໍ້ມູນເຫລົ່ານັ້ນກໍຢັ້ງຢືນຄືນຂໍ້ສະຫລຸບລວມທີ່ລັດຖະບານກຳນົດໄວ້ວ່າ ພວກແມ່ຍິງຊົນເຜົ່າ, ລວມທັງພວກຍິງໜຸ່ມ, ແມ່ນພວກຜູ້ດ້ອຍໂອກາດກວ່າໝູ່ໃນສັງຄົມລາວ. ພວກເຂົາເຈົ້າແມ່ນພວກຜູ້ທຸກຍາກກວ່າໝູ່ ແລະ ເປັນພວກສ່ຽງທີ່ສຸດ ແລະ ມີໂອກາດໜ້ອຍທີ່ສຸດທີ່ເປີດໃຫ້ພວກເຂົາເຈົ້າໄດ້ໃຊ້ສິດທິທາງສັງຄົມ, ເສດຖະກິດ, ການເມືອງ ແລະ ວັດທະນະທຳ ໂດຍບໍ່ມີການຈຳແນກ.

ຈາກຈຸດຢືນ ທີ່ເບິ່ງ ເລື້ອງສິດທິຂອງແມ່ຍິງ, ເນື້ອຫາຂອງເລື້ອງບົດບາດ ຍິງ-ຊາຍ ນັ້ນບໍ່ແມ່ນຈະເວົ້າ ເຖິງພຽງແຕ່ຈຳນວນວຽກທີ່ ແມ່ຍິງ ແລະ ຜູ້ຊາຍ ເຮັດ ທີ່ບໍ່ເທົ່າທຽມກັນ, ຫລື ການວ່າຈ້າງ ແມ່ຍິງ ແລະ ຜູ້ຊາຍ ແລະ ການຫາລາຍໄດ້ຂອງແມ່ຍິງເທົ່ານັ້ນ, ແຕ່ມັນແມ່ນເນື້ອຫາທີ່ຫລາຍກວ່ານັ້ນອີກຢ່າງກວ້າງຂວາງ. ມັນຍັງແມ່ນການເຮັດໃຫ້ແມ່ຍິງສາມາດໃຊ້ສິດທິທັງໝົດຂອງເຂົາເຈົ້າທີ່ຕ້ອງເທົ່າທຽມຢ່າງແທ້ຈິງກັບຜູ້ຊາຍ ໂດຍບໍ່ຈຳແນກວ່າ ເປັນແມ່ຍິງທີ່ມີຜົວ ຫລື ບໍ່ມີຜົວ, ເປັນເຊື້ອຊາດເຜົ່າໃດໜຶ່ງ ຫລື ມາຈາກພູມລຳເນົາໃດໜຶ່ງ. ລັດຖະບານເປັນລັດພາຄີ ຂອງສົນທະສັນຍາ ຊີດໍ ຕັ້ງແຕ່ປີ 1981 ກໍເຊັ່ນດຽວກັບລັດພາຄີທັງຫລາຍ ຮັບຮູ້ວ່າ "ຕ້ອງໃຫ້ມີ ການປ່ຽນແປງ ບົດບາດຂອງແມ່ຍິງ ແລະ ຂອງຜູ້ຊາຍ ໃນຄອບຄົວ ແລະ ໃນສັງຄົມ ທີ່ເປັນມາຕາມປະເພນີແຕ່ກ່ອນນັ້ນ, ແມ່ນ ເລື້ອງທີ່ຈຳເປັນ ເພື່ອບັນລຸຄວາມສະເໝີພາບທີ່ແທ້ຈິງລະຫວ່າງ ຍິງ-ຊາຍ ໄດ້ຢ່າງສົມບູນ" (ອ່ານພາກອະລຳພະບົດຂອງສົນທິສັນຍາ CEDAW). ລັດພາຄີທັງໝົດ ຖືເປັນພັນທະຂອງຕົນ ເພື່ອເຮັດໃຫ້ມີຄວາມສະເໝີພາບທີ່ແທ້ຈິງ ລະຫວ່າງ ຍິງ-ຊາຍ, ລວມທັງ ການນຳໃຊ້ ມາດຕະການພິເສດຊົ່ວຄາວເພື່ອເລັ່ງລັດເຮັດໃຫ້ເກີດຄວາມສະເໝີພາບທີ່ແທ້ຈິງ.

ສະພາບການ ເລື້ອງ ບົດບາດ ຍິງ-ຊາຍ ໃນເຂດເປົ້າໝາຍຂອງໂຄງການ ແຕກຕ່າງກັນຫລາຍ ລະຫວ່າງ ພວກຜູ້ຄົນທີ່ຢູ່ເຂດທົ່ງພຽງທີ່ມີການຈັດສັນເນື້ອທີ່ນາເປັນຢ່າງດີ (ໂດຍສະເພາະ ພວກລາວລຸ່ມ) ກັບ ພວກຜູ້ຄົນ ທີ່ຢູ່ເຂດເນີນສູງ ເຊິ່ງສວ່ນໃຫຍ່ ແມ່ນພວກຊົນເຜົ່າທີ່ຍົກຍ້າຍຈາກເຂດເນີນສູງກວ່າລົງມາຢູ່ເຂດຕ່ຳກວ່າເກົ່າ. ຢູ່ເຂດແບບ

---

[1] CEDAW stands for International Convention on the Elemination all forms of Descrimination Against Woman

[2] Gesellschaft für Technische Zusammenarbeit, Rural Development Programme in Mountainous Areas of Northern Laos.

[3] International Fund for Agricultural Development, Rural Livelihoods Improvement Programme.

[4] *Rural Livelihoods Improvement Programme in Attapeu and Sayaboury: Design Document Appraisal*, dated December 2004.

ນີ້, ບໍ່ມີຄວາມສາມາດຈະຈັດສັນໃຫ້ມີດິນນາໄດ້ເປັນຢ່າງດີ, ດັ່ງນັ້ນ ສະພາບການດຳລົງຊີວິດຂອງບ້ານທີ່ຍົກຍ້າຍເຫລົ່ານີ້, ໂດຍທົ່ວໄປ ຈຶ່ງຕົກຢູ່ໃນສະພາບການທີ່ບໍ່ແນ່ນອນ, ບໍ່ໝັ້ນຄົງທີ່ສຸດ. ເລື້ອງຂາດເຂົ້າກິນ ແມ່ນ ບັນຫາແບບດຽວກັນໝົດຢູ່ໝົດທຸກບ້ານເຫລົ່ານັ້ນ, ການດຳລົງຊີວິດຕາມແບບປະເພນີມາແຕ່ກ່ອນທີ່ອາໃສການ ປູກຝິ່ນ ແລະ ເຮັດໄຮ່ຢູ່ຫລາຍຕອນດິນນັ້ນເປັນແຫລ່ງຊັບສິນຂອງຄອບຄົວໆ, ແຕ່ດຽວນີ້ຖືກຢຸດເຊົານັ້ນ ຖືກປ່ຽນແທນດ້ວຍການຜລິດເຂົ້າທີ່ບໍ່ມີຜົນຜລິດສູງ (ບໍ່ຄຸ້ມຄ່າກັບການໃຊ້ເວລາເຮັດການຜລິດ). ສະຖານະພາບທາງສັງຄົມຂອງແມ່ຍິງຊົນເຜົ່າ ແລະ ຕຳແໜ່ງຂອງເຂົາເຈົ້າໃນຄອບຄົວ ແລະ ສັງຄົມ ຖືກກີດກັ້ນ ໃນການໃຊ້ສິດທິຂອງເຂົາເຈົ້າ, ດັ່ງນັ້ນ ພວກເຂົາເຈົ້າຈຶ່ງປະເຊີນກັບສະພາບການທີ່ມີຄວາມສ່ຽງສູງທີ່ຈະຕົກຢູ່ໃນຄວາມທຸກຈົນ, ໃນຄວາມທຸກຈົນທີ່ໜັກໜ່ວງທີ່ສຸດ, ຫລາຍກວ່າຜູ້ຊາຍ.

ແມ່ຍິງທຸກຊົນເຜົ່າໃນເຂດເປົ້າໝາຍ ແມ່ນ ຊາວກະສິກອນ ທີ່ເຮັດໄຮ່, ເຮັດນາ, ທີ່ໃຊ້ແຮງງານໃນຄອບຄົວຫລາຍທີ່ສຸດ. ການມີແຮງງານໃນແຕ່ລະຄົວເຮືອນມີຄວາມແຕກຕ່າງກັນ, ແລະ ໄດ້ຮັບຜົນກະທົບແຕກຕ່າງກັນຈາກການ ປະຕິບັດນະໂຍບາຍຕ່າງໆຢູ່ຂັ້ນບ້ານທີ່ເຮັດໃຫ້ແມ່ຍິງຊົນເຜົ່າມີຄວາມລຳບາກເພີ່ມຂຶ້ນ. ຕົວຢ່າງແມ່ຍິງຕ້ອງເຮັດ ວຽກເພີ່ມຂຶ້ນຫລາຍກວ່າເກົ່າ (ຫລົກຫຍ້າຕົບທີ່ມີຫລາຍຂຶ້ນ) ແຕ່ບໍ່ສາມາດຮັບປະກັນສະບຽງທີ່ຈຳເປັນສຳລັບ ຄອບຄົວ (ແມ່ຍິງມີສິດທິໜ້ອຍລົງທີ່ຈະຮັບປະກັນສະບຽງທີ່ຈຳເປັນໃຫ້ຄອບຄົວ). ມີຫລາຍສາເຫດທີ່ເຮັດໃຫ້ແມ່ຍິງມີສິດທິໜ້ອຍລົງໃນການດຳລົງຊີວິດຂອງເຂົາເຈົ້າ, ຕົວຢ່າງ ແມ່ຍິງ ມີສິດນຳໃຊ້ຊັບພະຍາກອນໜ້ອຍລົງ, ລວມ ທັງຕອນດິນທຳການຜລິດ.

ສາເຫດທີ່ກະທົບໃສ່ແມ່ຍິງໃຫ້ມີວຽກເຮັດຫລາຍຂຶ້ນ ແລະ ມີສິດໜ້ອຍລົງໃນການຮັບປະກັນສະບຽງໃຫ້ພຽງພໍ :

- ການຈັດສັນຕອນດິນທີ່ກຳນົດໃຫ້ແມ່ຍິງເຮັດໄຮ່ຢູ່ພຽງ 3 ຕອນດິນ ເຮັດໃຫ້ແມ່ຍິງຕ້ອງໝູນວຽນການໃຊ້ຕອນດິນໃນເວລາຮອບໝູນໜ້ອຍລົງ, ແຕ່ກ່ອນແມ່ນ 8-10 ປີ ຈຶ່ງກັບມາເຮັດໄຮ່ຢູ່ບ່ອນເກົ່າ, ແຕ່ດຽວນີ້ຕ້ອງ ກັບມາພາຍໃນ 3 ປີ.
- ການເຕົ້າໂຮມ "ບ້ານນ້ອຍ" ໃສ່ບ້ານໃຫຍ່ ໃຫ້ໄດ້ 50 ຫລັງຄາເຮືອນ ແລະ ການຈັດສຳປະທານ (ດິນປູກຕົ້ນໄມ້ອຸດສາຫະກຳ ແລະ ການຕັດໄມ້ທ່ອນ) ເຮັດໃຫ້ແມ່ຍິງ ມີດິນຜລິດ ທີ່ຢູ່ໄກ້ບ້ານໜ້ອຍລົງ.

ເມື່ອເບິ່ງ ການແບ່ງວຽກການຜລິດຂອງຄອບຄົວ ພວກເຮົາສາມາດເຫັນໄດ້ຈະແຈ້ງວ່າແມ່ຍິງໄດ້ຮັບຜົນກະທົບຈາກສາເຫດທີ່ກ່າວມານັ້ນ, ເຊັ່ນ (1) ຮອບໝູນວຽນເຮັດໄຮ່ຢູ່ພຽງ 3 ຕອນດິນ ເພີ່ມວຽກຫລົກຫຍ້າຂຶ້ນຫລາຍໃຫ້ແມ່ ຍິງ, (2) ເພີ່ມວຽກຕັດຕົ້ນໄມ້ນ້ອຍໃຫ້ແມ່ຍິງ, ຜູ້ຊາຍບໍ່ມີວຽກຕັດຕົ້ນໄມ້ໃຫຍ່ເພາະພາຍໃນ 3 ປີ ບໍ່ທັນ ມີຕົ້ນໄມ້ໃຫຍ່ຂຶ້ນ. ໃນເມື່ອ ແມ່ຍິງມີວຽກເຮັດຫລາຍຂຶ້ນແບບນີ້, ເຂົາເຈົ້າບໍ່ສາມາດເຮັດໄຮ່ຢູ່ເນື້ອທີ່ກວ້າງໄດ້ອີກ,, ເຂົາເຈົ້າຕ້ອງເຮັດໄຮ່ຢູ່ເນື້ອທີ່ໜ້ອຍລົງ. ການເຕົ້າໂຮມບ້ານເຮັດໃຫ້ ແມ່ຍິງ ແລະ ຜູ້ຊາຍ ຕ້ອງຍ່າງໄປໄກເພື່ອກັບ ຄືນໄປເຮັດການຜລິດຢູ່ບ້ານເກົ່າພຸ້ນເພາະດິນບໍ່ພໍກັນຢູ່ບ້ານໃໝ່. ແມ່ຍິງຕ້ອງເຈັ່ຽລູກໄປໄກກວ່າເກົ່າ ແລະ ຕາກ ແດດດິນກວ່າເກົ່າ, ຫລື ປະລູກນ້ອຍໄວ້ກັບລູກຜູ້ໃຫຍ່ ຫລື ແມ່ເຖົ້າ, ທັງໝົດນີ້ເປັນການກະທົບທາງລົບໃສ່ ສຸຂະພາບຂອງເດັກນ້ອຍ.

ການແບ່ງວຽກຄອບຄົວກໍມີຜົນກະທົບທາງລົບໃສ່ສິດທິຂອງແມ່ຍິງເຊັ່ນດຽວກັນ, ເຊັ່ນ ວຽກການຜລິດທີ່ໃຊ້ເວລາເພີ່ມຂຶ້ນຫລາຍເທົ່າຕົວນັ້ນເຮັດໃຫ້ແມ່ຍິງຕ້ອງແບ່ງວຽກຄອບຄົວ (ວຽກເຮືອນ) ໃຫ້ລູກສາວ ຫລື ແມ່ເຖົ້າເຮັດແທນ. ການແບ່ງແບບນີ້ ແມ່ນເຮັດໄດ້ງ່າຍກວ່າ ທີ່ຈະແມ່ຍິງຈະແບ່ງໃຫ້ຜູ້ຊາຍເຮັດເພາະແມ່ຍິງມີຖານະຕ່ຳກວ່າ (ບໍ່ມີ ສິດຕໍ່ລອງກັບຜູ້ຊາຍໃນຄອບຄົວ).

ການມອບໝາຍໃຫ້ລູກສາວເຮັດວຽກຄອບຄົວແທນແມ່ຜູ້ໄປເຮັດວຽກການ ຜລິດນັ້ນ, ເຊັ່ນ ຕັກນ້ຳ, ຕຳເຂົ້າຟັດເຂົ້າ, ເອົາຟືນແຕ່ງກິນ, ຊັກເຄື່ອງນຸ່ງ, ເອົານ້ອງ, ແລະ ອື່ນໆເຫລົ່ານັ້ນສາມາດເປັນການກະທົບເຮັດໃຫ້ລູກສາວບໍ່ມີເວລາໄປໂຮງຮຽນ.

ສະຖານະພາບທາງສັງຄົມ ແລະ ເສດຖະກິດ ຂອງແມ່ຍິງຊົນເຜົ່າ ຕ່ຳກວ່າ ຜູ້ຊາຍ, ໂດຍທົ່ວໄປ ຢູ່ເຂດເປົ້າໝາຍ, ນອກຈາກແມ່ຍິງລາວລຸ່ມທີ່ມີສະຖານະພາບດີກວ່າ. ມີການຍອມຮັບ ຫລື ຊຸກຍູ້ ໜ້ອຍ ໃຫ້ແມ່ຍິງໄດ້ມີສ່ວນຮ່ວມໃນເວທີສັງຄົມ. ມີຫລາຍປັດໃຈທາງສັງຄົມວັດທະນະທຳທີ່ກຳນົດສະຖານະພາບຂອງແມ່ຍິງ. ຕົວຢ່າງ : ການນັບຖືຜູ້ຊາຍເປັນໃຫຍ່ໃນການແບ່ງມູນ ແລະ ການສືບລົດ, ລວມທັງການໃຫ້ຄ່າແຕ່ງດອງ, ເຮັດໃຫ້ແມ່ຍິງຍິ່ງມີສະຖານະພາບຕົກຕ່ຳລົງຫລາຍກວ່າເກົ່າອີກຫລັງຈາກແຕ່ງງານແລ້ວ, ເພາະໂດຍທົ່ວໄປ, ມີການຖືວ່າຍິງສາວຖືກຊື້ມາຢູ່ ນຳຄອບຄົວຜົວເພື່ອເປັນແຮງງານພຽງເທົ່ານັ້ນ, ລວມທັງລູກສາວຜູ້ຈະເກີດມາເປັນຄົນລຸ່ນຕໍ່ໄປກໍຄືກັນ, ເມັ່ງມີ ຄຸນຄ່າພຽງໜ້ອຍດຽວ. ການໃຊ້ຄວາມຮຸນແຮງຂອງຜູ້ຊາຍຕໍ່ແມ່ຍິງຍັງມີຢູ່ທົ່ວໄປໃນທຸກຊົນເຜົ່າ.

ຕາມຄວາມເປັນຈິງໂດຍທົ່ວໄປ, ມີການໃຫ້ສິດທິແກ່ແມ່ຍິງ ແລະ ເດັກຍິງ ໃຫ້ເຂົ້າໂຮງຮຽນ ແລະ ເຂົ້າຮ່ວມຝຶກອົບຮົມ, ໂດຍສະເພາະການບໍລິການສຶກສາ ແລະ ຝຶກອົບຮົມຢູ່ກັບບ້ານ, ແຕ່ເຂົາເຈົ້າບໍ່ສາມາດໃຊ້ສິດເຫລົ່ານັ້ນຍ້ອນຫລາຍປັດໃຈກ່ຽວພັນກັນກັບສະຖານະພາບທີ່ຕ່ຳຕ້ອຍຂອງແມ່ຍິງ (ແມ່ຍິງຢູ່ບ້ານຊົນເຜົ່າໂດຍສະເພາະ), ເຊັ່ນ : ມີໂອກາດການສຶກສາໜ້ອຍ ແລະ ມີວຽກເຮັດຫລາຍໂພດ ເປັນສາເຫດ ເຮັດໃຫ້ແມ່ຍິງບໍ່ມີຄວາມໝັ້ນໃຈທີ່ຈະກ້າປາກກ້າເວົ້າໃນທີ່ຊຸມນຸມຊົນ, ດັ່ງນັ້ນ ເຂົາເຈົ້າຈິ່ງບໍ່ໄດ້ໃຊ້ສິດທິຂອງຕົນ, ດັ່ງທີ່ ກຳນົດ ໃນມາດຕາ 14 ຂອງສົນທິສັນຍາ CEDAW ກ່ຽວກັບ ສິດທິຂອງແມ່ຍິງມີສ່ວນຮ່ວມໃນການພັດທະນາຊົນນະບົດ.

ຍິ່ງໄປກວ່າ, ມີໂຊກບໍ່ດີຕື່ມອີກ, ທີ່ແມ່ນປັດໃຈພາຍນອກ, ທີ່ບໍ່ເກີດມາຈາກພາຍໃນຊົນເຜົ່າເອງ, ທີ່ເຮັດໃຫ້ຄວາມໂຕນກັນ ລະຫວ່າງ ສິດທິ ຂອງແມ່ຍິງ ແລະ ຜູ້ຊາຍ ຍິ່ງໂຕນກັນຫລາຍຂຶ້ນຕື່ມອີກ, ໂດຍສະເພາະໃນບ້ານຊົນເຜົ່າທັງຫລາຍ. ໜຶ່ງໃນປັດໃຈພາຍນອກແບບນັ້ນ ແມ່ນ ການມີສິດເປັນເຈົ້າກຳມະສິດນຳໃຊ້ທີ່ດິນ ແລະ ການຄຸ້ມຄອງສິດທິນັ້ນ, ຄື ການອອກໃບຕາດິນຖາວອນ (ແລະ ຊົ່ວຄາວ) ມີແຕ່ລະບຸຊື່ ຜົວ ເປັນເຈົ້າຂອງກຳມະສິດນຳໃຊ້;; ຊື່ເມັ່ງມີແຕ່ແຈ້ງໄວ້ໃນຖານະເປັນພັນລະຍາເທົ່ານັ້ນ; ມີພຽງແຕ່ຢູ່ 2 ບ້ານທີ່ໄປຢ້ຽມຢາມຢູ່ເມືອງໄຊຍະບູລີ ມີການລະບຸ ຊື່ ຜົວ ແລະ ເມັ່ງ, ສ່ວນຢູ່ເມືອງອື່ນບໍ່ເຫັນມີຊື່ຜົວ ແລະ ເມັ່ງ, ເຫດການນີ້ເປັນການບົ່ງບອກວ່າ ການສະໜັບສະໜູນຂອງແຜນງານ RLIP – RDMA ໃນເລື້ອງນີ້ບໍ່ໄດ້ປະຕິບັດຢ່າງເປັນລະບົບ.

ເອກະສານທັງຫລາຍຂອງ ແຜນງານ RLIP – RDMA, ເຊັ່ນ ບົດລາຍງານການສຳຫລວດຂອງອົງການ IFAD, ເອກະສານແນວຄວາມຄິດການພັດທະນາ ຂອງ BMZ ແລະ ເອກະສານສະເໜີໃຫ້ການສະໜັບສະໜູນຂອງ GTZ, ໄດ້ໃຫ້ຄວາມສຳຄັນສູງຕໍ່ເລື້ອງບົດບາດ ຍິງ-ຊາຍ ທີ່ຕ້ອງນຳເຂົ້າເປັນກະແສຫລັກ ເພື່ອຮັບປະກັນໃຫ້ແມ່ຍິງໄດ້ຮັບຜົນປະໂຫຍດ. ແຕ່ໜ້າເສັຍດາຍ, ເວລາຄົ້ນຄວ້າເລື້ອງ ບົດບາດ ຍິງ-ຊາຍ ໃນອົງການຈັດຕັ້ງຂອງໂຄງການ ເຫັນວ່າ ເລື້ອງບົດບາດ ຍິງ-ຊາຍ ຖືກວາງໄວ້ທາງຂ້າງນອກຫລາຍກວ່າ, ຍັງເຫັນອີກວ່າ ມີຄວາມບໍ່ເກາະກ່າຍກັນຢູ່ໃນເອກະສານທັງຫລາຍຂອງໂຄງການທີ່ກ່ຽວຂ້ອງກັບເລື້ອງນີ້, ລວມທັງ ວິທີການວາງແຜນກິດຈະກຳ, ການປະຕິບັດ ແລະ ການຕິດຕາມດູແລ. ພະນັກງານທີ່ປຶກສາດ້ານວິຊາການທັງຫລາຍ ຄິດວ່າຕ້ອງ ແມ່ນ ຄວາມຮັບຜິດຊອບຂອງ ວິຊາການ ບົດບາດ ຍິງ-ຊາຍ (ຄົນໜຶ່ງ) ທີ່ຕ້ອງເຮັດເລື້ອງນີ້, ແລະ ພະນັກງານສາຍຂະແໜງການກໍບໍ່ເຂົ້າໃຈວ່າຈະເອົາ ບົດບາດ ຍິງ-ຊາຍ ເຂົ້າໃສ່ໃນວຽກຂອງຕົນເອງໄດ້ແນວໃດ. ອົງການຈັດຕັ້ງສະຫະພັນແມ່ຍິງມີຂໍ້ອ້າງວ່າໄດ້ເຮັດບາງຢ່າງຢູ່ຂັ້ນບ້ານ, ແຕ່ກໍຍັງມີອັນຄົງຄ້າງ, ແລະ ຍັງເຮັດໃຫ້ບົດບາດ ຍິງ-ຊາຍ ຖືກຕີ

ຖອຍລົງອີກຊ້ຳ. ຍິ່ງໄປກວ່ານັ້ນ, ບໍ່ໄດ້ເຮັດເລື້ອງທີ່ເວົ້າເຖິງສິດທິຂອງແມ່ຍິງ ຫລື ເລື້ອງສະຖານະພາບທາງສັງຄົມຂອງແມ່ຍິງ.

ແມ່ຍິງຊົນເຜົ່າທີ່ທຸກຈົນຖືກກີດກັ້ນດ້ວຍ 3 ແອກ ຍ້ອນ ຄວາມທຸກຈົນ, ຄວາມເປັນແມ່ຍິງ, ແລະ ຄວາມເປັນຊົນເຜົ່າ. ເຂົາເຈົ້າຖືກຈຳແນກໂດຍກົງ ແລະ ບໍ່ໂດຍກົງ, ໃນເອກະສານ ການຫລຸດຜ່ອນຄວາມທຸກຈົນ ຂອງລັດຖະບານ ສປປ ລາວ ຊີ້ບອກວ່າ ແມ່ຍິງຊົນເຜົ່າ ແມ່ນ ຜູ້ທຸກຈົນກວ່າໝູ່ໃນຈຳນວນພວກທຸກຈົນທັງຫລາຍ. ຖ້າໂຄງການບໍ່ມີການດຳເນີນປະຕິບັດທີ່ແຂງແຮງພຽງພໍເພື່ອປົດ 3 ແອກນີ້ໃຫ້ແມ່ຍິງ, ມັນກໍເປັນການສ່ຽງວ່າ ເວລາໂຄງການສິ້ນສຸດລົງແລ້ວແມ່ຍິງຈະໄດ້ປັບປຸງຄວາມສາມາດ (ຮູ້) ຂອງເຂົາເຈົ້າໃນການໃຊ້ສິດທິຂອງເຂົາເຈົ້າບໍ່, ຍັງຖືກຈຳແນກຄືແຕ່ກອ່ນ ຫລື ບໍ່. ຖ້າບໍ່ມີການປ່ຽນແປງໃນທິດທາງຂອງໂຄງການທີ່ມີຢູ່ໃນປັດຈຸບັນນີ້, ຜົນອອກສຸດທ້າຍຂອງໂຄງການກໍຈະເປັນອັນວ່າບໍ່ໄດ້ມີຂັ້ນຕອນລິ່ເລີ່ມການນຳເອົາເລື້ອງ ບົດບາດ ຍິງ-ຊາຍ ເປັນກະແສຫລັກ, ແລະ ໃນທີ່ສຸດໂຄງການຈະບໍ່ບັນລຸເປົ້າໝາຍຂອງຕົນເອງທີ່ວາງໄວ້.

ຂໍ້ສະຫລຸບສຸດທ້າຍ ຈາກ ການຄົ້ນຄວ້ານີ້ ແມ່ນ ແມ່ຍິງບໍ່ໄດ້ຝຶກແອບການນຳໃຊ້ສິດທິຂອງເຂົາເຈົ້າ, ໂດຍສະເພາະ ແມ່ຍິງຊົນເຜົ່າ, ຍ້ອນນະໂຍບາຍຕ່າງໆ ແລະ ຍ້ອນແຜນງານ, ລວມທັງສະຫະພັນແມ່ຍິງ, ບໍ່ມີວິທີການເຮັດວຽກ ທີ່ເໝາະສົມທີ່ປະຕິບັດຢູ່ຂັ້ນບ້ານ. ການສຸມໃສ່ເຮັດວຽກ (ກິດຈະກຳຕ່າງໆ) ກັບແມ່ຍິງຢູ່ຂັ້ນບ້ານຍັງເປັນແບບ ຄອງເດີມ (ເຮັດໃຫ້ແມ່ຍິງຍັງຢູ່ໃນຖານະຕ່ຳກວ່າຜູ້ຊາຍ), ແທນທີ່ຈະສຸມໃສ່ເຮັດໃຫ້ແມ່ຍິງຮູ້ສິດທິຂອງເຂົາເຈົ້າທີ່ ເປັນມະນຸດຢ່າງເທົ່າທຽມກັນກັບຜູ້ຊາຍ. ເຫັນວ່າ ແມ່ຍິງບໍ່ໄດ້ຖືກຈັດໃຫ້ໄດ້ຮັບການພັດທະນາຄວາມຊຳນານ ຂອງເຂົາເຈົ້າໂດຍບໍ່ຮ່ວມກັບ ແລະ ບໍ່ຂຶ້ນກັບ ຜູ້ຊາຍ. ບໍ່ມີເວທີໃຫ້ແມ່ຍິງໄດ້ສົນທະນາກັນ ກ່ຽວກັບ ບັນຫາຂອງ ພວກເຂົາເຈົ້າ ແລະ ຊອກຫາການແກ້ໃຂໂດຍເຂົາເຈົ້າເອງ. ຍິ່ງໄປກວ່ານັ້ນ, ໃນຂະນະທີ່ຂາດມາດຕະການທີ່ສະ ໜັບສະໜູນ, ຊ້ຳພັດມີຄວາມຫວັງສູງໂພດ ທີ່ຢາກໃຫ້ແມ່ຍິງສາມາດປະຕິບັດກິດຈະກຳໂຄງການໄດ້ຢ່າງເທົ່າທຽມ ກັບຜູ້ຊາຍໃນເວລາທີ່ເຂົາເຈົ້າເປັນຄະນະກຳມະການຕ່າງໆ ແລະ ໃນເວລາປະຊຸມ.

ອີງຕາມ ເຫດການຕົວຈິງທັງຫລາຍທີ່ກ່າວໃນບົດລາຍງານນີ້, ທີມການຄົ້ນຄ້ວາ ສະຫລຸບວ່າ ມີຄວາມຈຳເປັນອັນຮີບດວ່ນທີ່ RLIP-RDMA ຕ້ອງວ່າຈ້າງ ທີ່ປຶກສາ DED ຕື່ມອີກເພື່ອເຮັດວຽກ ການເອົາ ບົດບາດ ຍິງ-ຊາຍ ເຂົ້າເປັນກະແສຫລັກໃນວຽກໂຄງການຕາມຂະແໜງການທັງຫລາຍ ແລະ ໃນວຽກສະຫະພັນແມ່ຍິງ, ແລະ ຖືເອົາເປັນມາດຕະການພິເສດ (ຄຳສັບມາດຕະການພິເສດ ມີລະບຸໄວ້ ໃນສົນທະສັນຍາ ຊີດໍ). ທີມການຄົ້ນຄວ້າ ຍັງສະຫລຸບອີກວ່າ ຕຳແໜ່ງທີ່ປຶກສາ ສຳລັບໄລຍະສັ້ນນັ້ນ ບໍ່ພຽງພໍ ເພື່ອຮັບປະກັນວ່າແມ່ຍິງໄດ້ຮັບຜົນປະໂຫຍດ ແລະ ມີຜົນກະທົບທາງບວກ. ຈຳນວນຂໍ້ແນະນຳທັງຫລາຍທີ່ເວົ້າລະອຽດມີຢູ່ໃນຫົວຂໍ້ທີ 6 ຂອງບົດລາຍງານນີ້.

## I. ພາກສະເໜີ

### 1.1. ເຫດຜົນຂອງການປະເມີນ :

ແຜນງານ "ການພັດທະນາຊົນນະບົດເຂດພູດອຍ ຢູ່ພາກເໜືອຂອງ ສປປ ລາວ (**RDMA**)" ປັດຈຸບັນນີ້ ດຳເນີນການຢູ່ 300 ບ້ານ, 11 ເມືອງ, ຂອງ 3 ແຂວງ ຄື ບໍ່ແກ້ວ, ຫຼວງນ້ຳທາ ແລະ ໄຊຍະບູລີ. ບ້ານ ແລະ ເມືອງທີ່ເປັນເປົ້າໝາຍຂອງແຜນງານ ແມ່ນເຂດທຸກຍາກ ແລະ ບໍ່ມີສະບຽງ ອາຫານທີ່ຮັບປະກັນພຽງພໍ. ເປັນເຂດທີ່ບໍ່ມີການພັດທະນາເສດຖະກິດ ຫຼື ມີໜ້ອຍ, ແລະ ບໍ່ມີການ ບໍລິການຂອງລັດໄປຮອດຢ່າງເໝາະສົມ. ເວົ້າໂດຍລວມ, ແຜນງານ **RDMA** ມີເປົ້າໝາຍລວມ ດັ່ງ ນີ້: ສະໜັບສະໜູນ ໃຫ້ແກ່ອຳນາດການປົກຄອງຂັ້ນແຂວງ ແລະ ເມືອງ, ເພື່ອຊ່ວຍເຫຼືອພົນລະ ເມືອງໃນເຂດເປົ້າໝາຍໃນການປັບປຸງເງື່ອນໄຂການດຳລົງຊີວິດທາງດ້ານເສດຖະກິດ ແລະ ສັງຄົມ ຂອງເຂົາເຈົ້າ.

ແຂວງ ໄຊຍະບູລີ, ແຜນງານ (**RLIP**) ນີ້ ໄດ້ຮັບການຮ່ວມມືທາງດ້ານທຶນຮອນຈາກກອງທຶນ **IFAD (International Fund for Agricultural Development)** ແລະ ປະຕິບັດໂດຍພາກສ່ວນລັດຖະ ບານ ສປປ ລາວ.

ແຜນງານຮ່ວມກັນຂອງ **RLIP-RDMA** ແນໃສ່ 3 ອົງປະກອບໃຫຍ່, ຄື: (1) ການນຳໃຊ້ແບບ ຍືນຍົງຊັບພະຍາກອນທຳມະຊາດ ແລະ ສົ່ງເສີມເສດຖະກິດຂອງທ້ອງຖິ່ນ, (2) ສ້າງຂີດຄວາມສາ ມາດໃນການຊ່ວຍເຫຼືອຕົນເອງໄດ້ໃຫ້ແກ່ອົງການຈັດຕັ້ງຂັ້ນບ້ານ ແລະ ຈັດໃຫ້ມີການບໍລິການ ທາງ ສັງຄົມໃຫ້ແກ່ເຂົາເຈົ້າ (3) ສ້າງຂີດຄວາມສາມາດໃນການວາງແຜນພັດທະນາໃຫ້ຂັ້ນແຂວງ ແລະ ເມືອງ ດ້ວຍການນຳໃຊ້ປະສົບການຈາກແຜນງານຂັ້ນສູນກາງ.

### ເລື່ອງບົດບາດຍິງ-ຊາຍ:

ແຜນງານ RLIP-RDMA ຂຽນໄວ້ໃນເອກະສານຂອງຕົນເອງ ກ່ຽວກັບ ເລື່ອງບົດບາດ ຍິງ-ຊາຍ ແລະ ຄວາມທຸກຈົນ ດ້ວຍເນື້ອໃນທີ່ມີຕໍ່ໄປນີ້ : ແມ່ຍິງລາວໃນກຸ່ມຊົນເຜົ່າໜ້ອຍທັງຫຼາຍ ເກືອບທັງ ໝົດ ເປັນຜູ້ດ້ອຍໂອກາດກວ່າໝູ່ ໃນສັງຄົມລາວ. ແມ່ຍິງເຫຼົ່ານີ້ ເຮັດວຽກຫຼາຍຊົ່ວໂມງ ລື່ນຜູ້ຊາຍ ຢູ່ໃນແຕ່ລະມື້; ພວກເຂົາເຈົ້າເຮັດວຽກເຖິງ 70% ຂອງວຽກການຜລິດກະສິກຳທັງໝົດ, ວຽກເຮືອນ, ແລະ ລ້ຽງລູກ. ພວກແມ່ຍິງມີການສຶກສາພຽງ 54% ໂດຍສົມທຽບໃສ່ພວກຜູ້ຊາຍ ແມ່ນ 77%. ພວກແມ່ຍິງຊົນເຜົ່າໜ້ອຍບໍ່ຮູ້ໜັງສືມີ 70%. ເດັກຍິງຊົນເຜົ່າສ່ວນຫຼາຍອອກໂຮງຮຽນ ຫຼັງຈາກຈົບ ປ1, ປ2. ຍ້ອນດັ່ງນັ້ນ, ພວກແມ່ຍິງຊົນເຜົ່າສ່ວນຫຼາຍ ກໍ່ຮູ້ແຕ່ພາສາຂອງຕົນເອງ, ບໍ່ສາມາດປາກ ເວົ້າພາສາລາວໄດ້ດີ; ມີແມ່ຍິງຊົນເຜົ່າພຽງໜ້ອຍດຽວ ທີ່ເປັນພະນັກງານວິຊາການ ໃນຂະແໜງ

ການຂອງລັດ. ພວກແມ່ຍິງຊົນເຜົ່າໃນເຂດຊົນນະບົດ ໄດ້ຮັບຜົນກະທົບຈາກຄວາມທຸກຍາກຫຼາຍກວ່າແມ່ຍິງໃນຕົວເມືອງ, ແລະ ໂດຍສະເພາະພວກແມ່ຍິງຊົນເຜົ່າຢູ່ເຂດພູດອຍ.

ແຜນການ **RDMA-RDMA** ຮັບຮອງເອົາເລື່ອງບົດບາດ ຍິງ-ຊາຍ ເປັນເລື່ອງທີ່ນອນຢູ່ໃນວຽກຂອງທຸກໆຂະແໜງການ (**cross-cutting issue**), ເປັນພາກສ່ວນໜຶ່ງທີ່ບໍ່ແຍກອອກເປັນເລື່ອງສະເພາະ ຫຼື ເປັນ ເລື່ອງປິ່ນອ້ອມ (ຫຼື ເປັນເລື່ອງສຳຮອງ) ໃດໆທັງສິ້ນໃນແຕ່ລະກິດຈະກຳທັງໝົດ ທີ່ແຜນງານນີ້ສະໜັບສະໜູນ, ເອົາເລື່ອງບົດບາດ ຍິງ-ຊາຍ ເປັນເລື່ອງກະແສຫຼັກ (**mainstream**) ຢູ່ໃນວຽກ ງານ, ກິດຈະກຳ, ຂອງແຕ່ລະຂະແໜງ.

ໃນເອກະສານການສຳຫຼວດຂອງແຜນງານ **RLIP-RDMA** ທີ່ສະໜັບສະໜູນໂດຍ **IFAD**, ຢູ່ແຂວງໄຊຍະບູລີ, ມີຂໍ້ມູນໃຫ້ ກ່ຽວກັບ ການວິເຄາະສະພາບເລື່ອງ ບົດບາດ ຍິງ-ຊາຍ ໃນເຂດເປົ້າໝາຍ ຂອງແຜນງານ **RLIP-RDMA** ໂດຍລວມ.

ກ່ອນໜ້ານີ້, ຢູ່ເຂດຊົນນະບົດພາກເໜືອຂອງແຂວງ ໄຊຍະບູລີ ກໍມີແຜນງານ **NSRDP** ໄດ້ປະຕິບັດແຜນງານຜ່ານມາ, ແລະ ໄດ້ສັງລວມບົດຮຽນທີ່ຖອດຖອນໄດ້ ກ່ຽວກັບ ເລື່ອງ ບົດບາດ ຍິງ-ຊາຍ ໄວ້ໃນເອກະສານຂອງແຜນງານ **NSRDP**.

ໂດຍອີງຕາມການສຳຫຼວດຂອງ **IFAD** ໃນເບື້ອງຕົ້ນ, ແລະ ເອກະສານສັງລວມບົດຮຽນຂອງ **NDRDP** ເຫຼົ່ານັ້ນ, ແຜນງານ **RLIP-RDMA** ກໍ່ໄດ້ກຳນົດອອກວ່າ ເລື່ອງບົດບາດຍິງ-ຊາຍ ໃນຂອບເຂດແຜນງານຂອງເຂົາເຈົ້າ ຕ້ອງພິຈາລະນາບັນຫາທີ່ກ່າວຕໍ່ໄປຢູ່ລຸ່ມນີ້, ແລະ ໄດ້ກຳນົດຂໍ້ແນະນຳໃຫ້ມີການດຳເນີນການທີ່ກ່ຽວຂ້ອງເຊັ່ນດຽວກັນ (ເບິ່ງເອກະສານ **Appraise Report** ຂອງ **IFAD/ RDMA**) ດັ່ງຕໍ່ໄປນີ້ :

### *ບັນຫາ ບົດບາດ ຍິງ-ຊາຍ :*

- ຂາດການມີສ່ວນຮ່ວມຂອງແມ່ຍິງໃນການເຮັດການຕັດສິນໃຈຢູ່ໃນຂັ້ນບ້ານ;
- ຂາດການມີສ່ວນຮ່ວມຂອງແມ່ຍິງໃນການຝຶກອົບຮົມດ້ານວິຊາການຕ່າງໆ;
- ແມ່ຍິງກືກໜັງສືຍັງມີຫຼາຍ (ໃນລະດັບສູງ);
- ມີພະນັກງານແມ່ຍິງຈຳນວນໜ້ອຍໃນວຽກງານບໍລິການສົ່ງເສີມຊາວບ້ານ; ແລະ ໃນວຽກງານການບໍລິຫານແຜນງານ;
- ແມ່ຍິງມີຈຳນວນວຽກທີ່ເຮັດຫຼາຍໂພດ ແລະ ໃຊ້ເວລາຫຼາຍຊົ່ວໂມງ ເພື່ອເຮັດວຽກການຜະລິດໃນເຮືອນຊານ ເພື່ອຮັບປະກັນການກິນຢູ່ຂອງຄອບຄົວ (ວຽກຈະເລີນພັນມະນຸດ ຫລື ເວົ້າອີກຄວາມໜຶ່ງວ່າ ວຽກຖະນຸບຳລຸງມະນຸດ **reproductive work;** ແລະ ວຽກການຜະລິດ **productive work**).

*ແຜນງານ **RLIP-RDMA** ໄດ້ກຳນົດຂໍ້ແນະນຳໄວ້ວ່າ ແຜນງານຈະປະຕິບັດດັ່ງນີ້:*

- ຮັບປະກັນໃຫ້ສະຫະພັນແມ່ຍິງບ້ານ ໄດ້ເປັນຄະນະອຳນາດການປົກຄອງບ້ານ ແລະ ມີສ່ວນຮ່ວມໃນການປະເມີນຜົນກະທົບທັງຫຼາຍຂອງໂຄງການ;
- ສົ່ງເສີມກິດຈະກຳການສ້າງລາຍຮັບໃຫ້ແກ່ແມ່ຍິງກຸ່ມເປົ້າໝາຍສະເພາະ ເພື່ອປ່ຽນແປງສາຍພົວພັນ ລະຫວ່າງ ຍິງ-ຊາຍ ພາຍໃນຄອບຄົວ;
- ໃຫ້ໂອກາດທີ່ເທົ່າທຽມກັນຢ່າງແທ້ຈິງແກ່ແມ່ຍິງ ເພື່ອໃຫ້ເຂົາເຈົ້າໄດ້ເຂົ້າຮ່ວມການຝຶກອົບ ຮົມ, ໄດ້ຮັບການຊ່ວຍເຫຼືອດ້ານວິຊາການ ແລະ ໄດ້ຮັບການບໍລິການທາງດ້ານສັງຄົມ (ການ ສຶກສາ ແລະ ການຮັກສາສຸຂະພາບ) ຈາກພາກສ່ວນຂອງລັດ ແລະ ຂອງໂຄງການ;
- ສະໜອງການຝຶກອົບຮົມໃຫ້ແມ່ຍິງຊົນນະບົດ ແລະ ຊົນເຜົ່າໄດ້ຮຽນໜັງສື;
- ສະໜອງການຝຶກອົບຮົມໃຫ້ແມ່ຍິງ ເພື່ອໃຫ້ເຂົາເຈົ້າສາມາດກາຍເປັນຜູ້ເຮັດວຽກສະໜອງນ້ຳສະອາດ ຢູ່ໃນບ້ານຂອງເຂົາເຈົ້າ;
- ຢູ່ບ່ອນໃດ, ທີ່ສາມາດເປັນໄປໄດ້, ຕ້ອງວ່າຈ້າງພະນັກງານແມ່ຍິງ ແລະ ໃຫ້ແມ່ຍິງເປັນຄະນະບໍລິຫານແຜນງານ, ແລະ ບໍລິຫານກິດຈະກຳທັງຫຼາຍຂອງແຜນງານ;
- ສະໜັບສະໜູນໃຫ້ສະຫະພັນແມ່ຍິງ ມີບົດບາດນຳພາ ໃນການປະຕິບັດທີ່ຈະເຮັດໃຫ້ເລື່ອງບົດບາດ ຍິງ-ຊາຍ ເປັນກະແສຫຼັກ (**mainstream**) ໃນວຽກງານຂອງແຜນງານ; ໃນການປູກຈິດສຳນຶກ ກ່ຽວກັບ ການລະເມີດສິດທິຂອງແມ່ຍິງໃນເວລາມີການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນຄອບຄົວ; ກ່ຽວກັບ ການແຜ່ລາມຂອງພະຍາດໂລກເອດ ແລະ ພະຍາດຊຶມເຊື້ອທາງເພດສຳພັນ; ກ່ຽວກັບ ການຫຼຸດຜ່ອນຈຳນວນວຽກຂອງແມ່ຍິງທີ່ມີຫຼາຍໂພດ; ກ່ຽວກັບ ການສົ່ງເສີມ ສິດທິ ຂອງແມ່ຍິງໃນເລື່ອງການຮັກສາສຸຂະພາບຈະເລີນພັນ ແລະ ໃນການຮັບບໍລິການດ້ານນີ້ ທີ່ຈັດໃຫ້ມີສະເພາະແມ່ຍິງ;
- ຈັດຝຶກອົບຮົມການປູກຈິດສຳນຶກ ເລື່ອງບົດບາດ ຍິງ-ຊາຍ ໃຫ້ພະນັກງານທັງໝົດ; ແລະ ຈັດໃຫ້ມີການປູກຈິດສຳນຶກ ເລື່ອງ ບົດບາດ ຍິງ-ຊາຍ ຢູ່ໃນການຝຶກອົບຮົມຕ່າງໆທັງໝົດ ທີ່ແຜນງານສະໜອງໃຫ້ແກ່ຊາວນາໃນເຂດເປົ້າໝາຍຂອງແຜນງານ; ນຳເອົາທຸກເລື່ອງບັນຫາບົດບາດ ຍິງ-ຊາຍ ທີ່ຄົງຄ້າງເຂົ້າເປັນກະແສຫຼັກໃນການດຳເນີນງານທຸກວຽກງານ ແລະ ທຸກການປະຕິບັດຂອງແຜນງານ;

**ແຜນງານ RLIP-RDMA ໄດ້ກຳນົດໄວ້ວ່າ ຈະຕ້ອງດຳເນີນການ ດັ່ງຕໍ່ໄປນີ້ ເພື່ອປະ ຕິບັດໃຫ້ເລື່ອງ ບົດບາດ ຍິງ-ຊາຍ ສາມາດເປັນກະແສຫຼັກ ໃນວຽກງານຂອງແຜນ ງານທັງໝົດ :**

*ຢູ່ຂັ້ນບ້ານ:*

1. ຈະຈັດຝຶກອົບຮົມເພື່ອປູກຈິດສໍານຶກໃຫ້ແກ່ຊາວບ້ານ ແລະ ອໍານາດການປົກຄອງບ້ານ;
2. ສະຫະພັນແມ່ຍິງ ຈະເປັນຜູ້ສະໜອງການຝຶກອົບຮົມນີ້ ໂດຍອອກແບບການຝຶກອົບຮົມ ທີ່ແນໃສ່ເພື່ອສ້າງຂີດຄວາມສາມາດໃຫ້ແມ່ຍິງມີບົດບາດຂຶ້ນ ໃນການເຮັດການຕັດສິນໃຈ ໃນຄອບຄົວ ແລະ ໃນຊຸມຊົນ;
3. ຈະໃຫ້ແມ່ຍິງໄດ້ເຂົ້າຮ່ວມຢ່າງເທົ່າທຽມກັນຢ່າງແທ້ຈິງກັບຜູ້ຊາຍ ໃນການຝຶກອົບຮົມດ້ານວິຊາການທັງຫຼາຍ ທີ່ແຜນງານຈັດສະໜອງໃຫ້;
4. ຈະສະໜັບສະໜູນກິດຈະກໍາການສ້າງລາຍຮັບຂອງແມ່ຍິງໂດຍສະເພາະ;
5. ຈະຕິດຕາມການອອກໃບຕາດິນ ທີ່ຕ້ອງລະບຸຊື່ຂອງ ຜົວ ແລະ ເມັຽ;
6. ຈະປູກຈິດສໍານຶກໃນເລື່ອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງພາຍໃນຄອບຄົວ; ກ່ຽວກັບ ພະຍາດໂລກເອດ ແລະ ພະຍາດຕິດຕໍ່ທາງເພດສໍາພັນ; ກ່ຽວກັບ ຄວາມຈໍາເປັນຕ້ອງຫຼຸດຜ່ອນວຽກຂອງແມ່ຍິງທີ່ມີຫຼາຍໂພດ;
7. ສະຫະພັນແມ່ຍິງ ແລະ ພະນັກງານຊຸມຊົນຢູ່ຂັ້ນເມືອງ ແລະ ຂັ້ນບ້ານ ຈະເປັນຜູ້ສະໜອງການຝຶກອົບຮົມເລື່ອງບົດບາດ ຍິງ-ຊາຍ ຢູ່ຂັ້ນບ້ານ, ແລະ ສ້າງຂະບວນການປູກຈິດສໍານຶກໃນເລື່ອງນີ້ໃຫ້ເຕີບໃຫຍ່ຂຶ້ນເລື້ອຍໆຢູ່ຂັ້ນບ້ານ;
8. ພະນັກງານວິຊາການໃນຂະແໜງການທັງຫຼາຍ, ໃນເວລາຈັດຝຶກອົບຮົມ ແລະ ເວລາເຮັດວຽກສົ່ງເສີມຈະກໍານົດກຸ່ມເປົ້າໝາຍໃຫ້ຖືກຕ້ອງ ໂດຍອີງຕາມກິດຈະກໍາທີ່ຈະເຮັດ (ວ່າ ແມ່ນໃຜເປັນຜູ້ເຮັດ), ເຊິ່ງຕ້ອງພິຈາລະນາວ່າ ແມ່ນ ກິດຈະກໍາໃດ ທີ່ແມ່ຍິງ ຫຼື ຜູ້ຊາຍເຮັດ; ວິທີທາງແບບນີ້ຈະເຮັດໃຫ້ບົດບາດຂອງແມ່ຍິງ ມີການປ່ຽນແປງດີຂຶ້ນ ແລະ ການປ່ຽນແປງແບບນີ້ ຈະປ່ຽນແປງສາຍພົວພັນກັນ ລະຫວ່າງ ຍິງ-ຊາຍ ໃຫ້ເປັນໄປໄດ້ໃນທາງທີ່ດີກວ່າໃນຂັ້ນຕອນການພັດທະນາ ເສດຖະກິດ-ສັງຄົມ;
9. ແຜນງານຈະສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງໃນຂັ້ນຕອນການເຮັດການຕັດສິນໃຈຮ່ວມກັບຊຸມຊົນຢູ່ທ້ອງຖິ່ນ (ຂັ້ນບ້ານ) ໂດຍຮັບປະກັນວ່າ ສະຫະພັນແມ່ຍິງ ຈະເປັນຜູ້ມີບົດບາດຕົ້ນຕໍໃນຄະນະອໍານາດການປົກຄອງຢູ່ຂັ້ນບ້ານ, ຂັ້ນເມືອງ ແລະ ຂັ້ນແຂວງ. ພວກແມ່ຍິງຈະໄດ້ຮັບການຊຸກຍູ້ໃຫ້ເປັນອາສາສະໝັກບ້ານ ແລະ ເປັນນັກສົ່ງເສີມຂັ້ນບ້ານ.
10. ໃນທີ່ສຸດ, ສະຫະພັນແມ່ຍິງ ຈະເປັນຜູ້ສະໜັບສະໜູນເຮັດໃຫ້ແຜນງານການຝຶກອົບຮົມຂອງທຸກຂະແໜງການທັງໝົດຂອງແຜນງານໄດ້ຮັບຮູ້ ເລື່ອງ ບົດບາດ ຍິງ-ຊາຍ.

**ແຜນງານ RLIP-RDMA ໄດ້ໃຫ້ອົງການ UNOP'S ປະເມີນຜົນການປະຕິບັດຂອງແຜນງານແລ້ວໜຶ່ງຄັ້ງ, ໃນເດືອນ ຕຸລາ ປີ 2006, ການປະເມີນຜົນຂອງ UNOP'S ໄດ້ມີ 3 ຂໍ້ແນະນໍາ ໄວ້ກ່ຽວກັບ ເລື່ອງບົດບາດ ຍິງ-ຊາຍ ເຊັ່ນ:**

- ແຕ່ລະຂະແໜງການຕ້ອງເອົາໃຈໃສ່ຢ່າງແຂງແຮງ ກ່ຽວກັບ ເລື່ອງບົດບາດ ຍິງ-ຊາຍ ແລະ ຕ້ອງເອົາເລື່ອງນີ້ເປັນເລື່ອງພິເສດສະເພາະ ເພື່ອເອົາເຂົ້າໃສ່ໃນບົດລາຍງານທັງຫຼາຍ;
- ຈຳນວນສະມາຊິກຂອງທະນາຄານບ້ານ ຕ້ອງແມ່ນແມ່ຍິງຈຳນວນສ່ວນໃຫຍ່, ແລະ ຄະນະ ກຳມະການທະນາຄານບ້ານ ຕ້ອງມີແມ່ຍິງເພີ້ມຂື້ນຢູ່ເລື້ອຍໆ;
- ສະຫະພັນແມ່ຍິງຕ້ອງໄດ້ຮັບການຝຶກອົບຮົມ ເພື່ອໃຫ້ເຂົາເຈົ້າສາມາດເຮັດການດູແລຕິດຕາມ (**monitoring**) ແລະ ປະເມີນຜົນແຜນງານຂອງແຕ່ລະຂະແໜງການ ເພື່ອໃຫ້ຮູ້ວ່າ ແມ່ຍິງ ໄດ້ຮັບຜົນປະໂຫຍດ ແລະ ໄດ້ຮັບຜົນກະທົບ ແນວໃດ ຈາກ ການປະຕິບັດແຜນງານທັງໝົດ;

## *ການປະເມີນ ຂອງທີ່ປຶກສາ ໄລຍະສັ້ນ ເລື້ອງບົດບາດ ຍິງ-ຊາຍ :*

ເຖິງວ່າແຜນງານ **RLIP-RDMA** ມີເຈດຕະນາເພື່ອສົ່ງເສີມເລື່ອງບົດບາດຍິງ-ຊາຍ ໃນວຽກງານທັງ ໝົດຂອງແຜນງານກໍ່ຕາມ, ແລະ ມີຂໍ້ກຳນົດຈຳນວນໜຶ່ງກຳນົດໄວ້ດັ່ງທີ່ກ່າວຢູ່ຂ້າງເທິງນີ້ແລ້ວນັ້ນ ກໍ່ ຕາມ, ໃນຕົວຈິງແລ້ວແຜນງານກໍ່ຍັງບໍ່ສາມາດສຸມຄວາມເອົາໃຈໃສ່ຕໍ່ເລື່ອງບົດບາດ ຍິງ-ຊາຍ ຍ້ອນ ຂາດບຸກຄະລາກອນສະເພາະດ້ານນີ້, ຈົນໃນທີ່ສຸດ ເມື່ອເດືອນ ມິຖຸນາ 2007 ແຜນງານ **RLIP-RDMA** ຈຶ່ງໄດ້ມອບໝາຍໃຫ້ມີທີ່ປຶກສາຈາກພາຍນອກ, ຈຳນວນ 2 ທ່ານ, ມາດຳເນີນວຽກໃນໄລ ຍະສັ້ນ ເພື່ອປະເມີນ ແລະ ປະກອບຄຳຄິດເຫັນ ແລະ ແນະນຳເພີ່ມເຕີມໃຫ້ແກ່ແຜນງານ **RLIP-RAMA** ເພື່ອສາມາດຈະບັນລຸຕາມຈຸດປະສົງດັ່ງຕໍ່ໄປນີ້:

- ໃຫ້ແມ່ຍິງໄດ້ຮັບຜົນປະໂຫຍດ ຈາກ ການບໍລິການທັງໝົດຂອງແຜນງານຢ່າງເທົ່າທຽມກັບຜູ້ ຊາຍ (ເປັນຜົນປະໂຫຍດໂດຍກົງ);
- ແມ່ຍິງມີຕຳແໜ່ງນຳພາ ແລະ ເຮັດການຕັດສິນໃຈໃນອຳນາດການປົກຄອງບ້ານ, ແລະ ໃນ ຄະນະກຳມະການອື່ນໆຢູ່ຂັ້ນບ້ານ (ເປັນຜົນປະໂຫຍດຈາກກິດຈະກຳ/ຈາກ ການບໍລິຫານ ຂອງໂຄງການ);
- ເລື່ອງບົດບາດ ຍິງ-ຊາຍ ຖືກຍົກຂື້ນຄົ້ນຄວ້າຢູ່ໃນທຸກກິດຈະກຳທັງໝົດຢູ່ຂັ້ນບ້ານ, ເມືອງ ແລະ ແຂວງ, ແລະ ຢູ່ໃນການບໍລິຫານແຜນງານ (ເປັນຜົນອອກ ທີ່ໄດ້ຮັບໃນເລື່ອງ ບົດບາດ ຍິງ-ຊາຍ).

## *ໜ້າວຽກສະເພາະຂອງທີ່ປຶກສາຈາກພາຍນອກ (ໄລຍະສັ້ນ) ຄັ້ງນີ້ມີຄື:*

1. ດຳເນີນການວິເຄາະການດຳລົງຊີວິດຂອງຊາວບ້ານໃນແງ່ ບົດບາດ ຍິງ-ຊາຍ, ຢູ່ບ້ານເປົ້າ ໝາຍຂອງແຜນງານ **RLIP-RDMA** ທີ່ມີຊົນເຜົ່າຕ່າງໆອາໃສຢູ່, ແລະ ມີສະພາບການເສດ ຖະກິດແຕກຕ່າງກັນ; ດຳເນີນການວິເຄາະນີ້ຢູ່ 3 ເມືອງ ໃນຈຳນວນ 5 ເມືອງທັງ ໝົດຂອງ ແຜນງານ.

2. ດຳເນີນການຄົ້ນຄວ້າ, ແບບມີສ່ວນຮ່ວມ, ກ່ຽວກັບ ສະພາບການເປັນຢູ່, ກ່ຽວກັບ ການສ່ຽງ ຂອງກຸ່ມສະເພາະໃດໜຶ່ງ. ດຳເນີນການຄົ້ນຄວ້າດ້ວຍວິທີການແບບໃດໜຶ່ງໃນເລື່ອງ ບົດ ບາດ ຍິງ-ຊາຍ, ເພື່ອເຮັດໃຫ້ເລື່ອງ ບົດບາດ ຍິງ-ຊາຍ ຖືກຮັບຮອງໃນການວາງແຜນການ ຕ່າງໆ.
3. ສຳຫຼວດການປະຕິບັດທີ່ເປັນປະເພນີຕໍ່ແມ່ຍິງ, ເຊິ່ງເປັນອຸປະສັກຕໍ່ການພັດທະນາແມ່ຍິງ, ຕໍ່ ຄວາມກ້າວໜ້າຂອງແມ່ຍິງໃນສັງຄົມເນື່ອງຈາກວັດທະນາທຳຂອງຊົນເຜົ່າ, ຄວາມເຊື່ອຖື, ແບບແຜນຂອງຄອບຄົວ, ແລະ ອື່ນໆ .
4. ທົບທວນຄືນ (ກວດຄືນເບິ່ງ) ແລະ ໃຫ້ຄຳປຶກສາແກ່ແຜນງານ **RLIP-RDMA** ກ່ຽວກັບ ວິທີ ການເຮັດວຽກທີ່ມີຄວາມຕະໜັກ (ສະດຸ້ງ) ໃນເລື່ອງ ບົດບາດ ຍິງ-ຊາຍ.
5. ແນະນຳໃຫ້ຮູ້ຂໍ້ມູນ ຫຼື ອົງການຈັດຕັ້ງອື່ນ ທີ່ປະຕິບັດແຜນງານດ້ວຍວິທີການເອົາເລື່ອງ ບົດ ບາດ ຍິງ-ຊາຍ ເປັນກະແສຫຼັກໃນວຽກງານຂອງເຂົາເຈົ້າ.

## *ຜົນອອກຂອງວຽກທີ່ປຶກສາ :*

- ກຳນົດຂອບເຂດແຜນງານ ບົດບາດ ຍິງ-ຊາຍ ໃຫ້ແຜນງານ **RLIP-RDMA**; ເຊິ່ງແຜນງານ ນັ້ນ ຄວນ ເປັນແຜນງານແບບຊັກຊວນ ແລະ ສ້າງໃຫ້ມີບຸກຄະລາກອນ ກ່ຽວກັບ ການ ປະຕິ ບັດຕໍ່ສິດທິ ຂອງ ແມ່ຍິງ, ທີ່ສະທ້ອນໃຫ້ເຫັນ ການຮັບຮູ້ຕາມສົນທິສັນຍາ ຊີດໍ (ສົນທິສັນ ຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ, ທີ່ລັດຖະບານ ສປປ ລາວ ກໍ່ເປັນ ປະເທດພາຄີໜຶ່ງ).
- ໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບ ບົດບາດຂອງສະຫະພັນແມ່ຍິງ ແລະ ພາກສ່ວນກ່ຽວຂ້ອງ ທັງຫຼາຍ ໃນການພິຈາລະນາເລື່ອງ ບົດບາດ ຍິງ-ຊາຍ ເປັນກະແສຫຼັກ; ແລະ ສຳຫຼວດເບິ່ງ ຂີດຄວາມສາມາດຂອງສະຫະພັນແມ່ຍິງໃນລະດັບແຂວງ, ເມືອງ, ບ້ານ.
- ໃຫ້ຄຳຄິດເຫັນ ເພື່ອປັບປຸງ ຫຼັກສູດການຝຶກອົບຮົມ ຂອງສະຫະພັນແມ່ຍິງ ເພື່ອຊ່ວຍໃຫ້ ສະຫະພັນແມ່ຍິງສາມາດ :

  1. ຊັກຊວນ ແລະ ສ້າງ ຂະບວນການ ເພື່ອເອົາ ເລື່ອງ ບົດບາດ ຍິງ-ຊາຍ ເປັນກະແສ ຫຼັກຂອງວຽກແຜນງານຢູ່ຂັ້ນບ້ານ, ເພື່ອຮັບປະກັນ:

  1.1. ໃຫ້ແມ່ຍິງໄດ້ເຂົ້າຮ່ວມການຝຶກອົບຮົມເທົ່າທຽມກັບຜູ້ຊາຍ;

  1.2. ຮັບປະກັນໃຫ້ແມ່ຍິງກຸ່ມເປົ້າໝາຍສະເພາະມີກິດຈະກຳການສ້າງລາຍຮັບ;

  1.3. ໃຫ້ຄວາມຮູ້ແກ່ແມ່ຍິງ ກ່ຽວກັບ ສິດທິຂອງແມ່ຍິງໃນການມີໃບຕາດິນ ເພື່ອນຳໃຊ້ ດິນ;

  1.4. ປູກຈິດສຳນຶກໃຫ້ຊຸມຊົນ, ໂດຍສະເພາະແມ່ຍິງ, ຮູ້ ກ່ຽວກັບ ການໃຊ້ຄວາມຮຸນ ແຮງ ຕໍ່ແມ່ຍິງ, ໂລກເອດ, ແລະ ການທີ່ແມ່ຍິງເຮັດວຽກຫຼາຍໂພດ.

  2. ຊັກຊວນ ແລະ ສ້າງຂະບວນການ ເພື່ອເອົາ ເລື່ອງ ບົດບາດ ຍິງ-ຊາຍ ເປັນກະແສ ຫຼັກ ໃນວຽກງານຢູ່ຂັ້ນເມືອງ, ແຂວງ, ດ້ວຍວິທີການ:

2.1. ຈັດສໍາມະນາ ຫຼື ປະຊຸມ ເພື່ອປູກຈິດສໍານຶກ ເລື່ອງ ບົດບາດ ຍິງ-ຊາຍ ໃຫ້ແກ່ພະນັກງານ;
2.2. ຈັດປະຊຸມສະເພາະເພື່ອຄົ້ນຄວ້າສົນທະນາຈໍາກັບບັນຫາສະເພາະທີ່ມີ. ເອົາເລື່ອງບົດບາດຍິງ-ຊາຍເປັນກະແສຫຼັກຢູ່ໃນທຸກການຝຶກອົບຮົມທັງໝົດຂອງແຜນງານ.

- ຮ່າງໜ້າວຽກ (**TOR**) ໃຫ້ແກ່ພະນັກງານທີ່ປຶກສາຂອງອົງການ **DED** ທີ່ຈະມາປະຈໍາ ຢູ່ ແຜນງານ (ປະມານ 8-10 ເດືອນ) ເພື່ອສ້າງຂີດຄວາມສາມາດໃຫ້ແກ່ສະຫະພັນແມ່ຍິງ ຂັ້ນ ແຂວງ, ເມືອງ, ແລະ ບ້ານ.

## 1.2. ວິທີການປະເມີນສະເພາະຂອງທີ່ປຶກສາໄລຍະສັ້ນຄັ້ງນີ້:

1. ຄົ້ນຄວ້າຕາມເອກະສານຂອງ **IFAD, RLIP-RDMA, UNOP'S,** ແລະ ບົດຄວາມ, ບົດລາຍງານອື່ນໆທີ່ກ່ຽວຂ້ອງທີ່ມີ;

2. ພົບພໍ້ ແລະ ສົນທະນານໍາພາກສ່ວນ, ກຸ່ມຄົນ ແລະ ບຸກຄົນທີ່ກ່ຽວຂ້ອງທັງຫຼາຍຢູ່ຂັ້ນ ແຂວງ, ເມືອງ ບ້ານ, ເຊັ່ນ:
    - ພົບພໍ້ ກັບສະຫະພັນແມ່ຍິງຂັ້ນແຂວງ, ແລະ ສະຫະພັນແມ່ຍິງຂອງ 5 ເມືອງ ທີ່ປະຕິບັດແຜນງານ;
    - ພົບພໍ້ກັບຄະນະປະສານງານການບໍລິຫານແຜນງານຂັ້ນແຂວງ, ເມືອງ, ແລະ ທີ່ປຶກສາດ້ານວິຊາການຂອງແຜນງານ;
    - ພົບພໍ້ກັບຄະນະອໍານາດການປົກຄອງບ້ານ, ສະຫະພັນແມ່ຍິງບ້ານ, ກຸ່ມແມ່ຍິງເກົ່າ, ແລະ ແມ່ຍິງມີບັນຫາ ແລະ ທຸກຈົນຢູ່ຂັ້ນບ້ານ, ທີ່ພະນັກງານຊຸມຊົນຂອງແຜນງານ ໄດ້ຈັດໃຫ້;
    - ບ້ານທີ່ໄປຢ້ຽມຢາມທັງໝົດມີ 7 ບ້ານ (ບ້ານລາວລຸ່ມ 2, ບ້ານເຜົ່າມົ້ງ 2, ບ້ານເຜົ່າ ຢ້າວ 1, ບ້ານເຜົ່າໄປຣ 1, ບ້ານເຜົ່າຂະມຸ 1);
    - ວາງແຜນໄວ້ວ່າຈະໄປຊົນເຜົ່າຂະມຸ 2 ບ້ານ, ແຕ່ຍ້ອນເສັ້ນທາງບໍ່ສະດວກ ຈຶ່ງໄປພຽງ 1 ບ້ານ.
3. ວິເຄາະ ແລະ ສັງລວມຫົວຂໍ້ເລື່ອງບັນຫາທີ່ຄົ້ນພົບຈາກການປະເມີນຢູ່ຂັ້ນແຂວງ, ເມືອງ ແລະ ບ້ານ; ແລ້ວຈັດການປະຊຸມສະເໜີເລື່ອງທີ່ຄົ້ນພົບໃຫ້ພາກສ່ວນທີ່ກ່ຽວຂ້ອງທັງຫຼາຍຮ່ວມກັນສົນທະນາ; ການສະເໜີຄັ້ງທີ 1 ຢູ່ແຂວງ ໄຊຍະບູລີ; ມີຜູ້ເຂົ້າຮ່ວມຈາກພາກສ່ວນຕ່າງໆເກືອບ 60 ຄົນ, ຄືຈາກພາກສ່ວນ: ຄະນະຊີ້ນໍາການປະຕິບັດແຜນງານຂັ້ນແຂວງ, ຄະນະບໍລິຫານແຜນງານຂັ້ນແຂວງ, ຂັ້ນເມືອງ, ທີ່ປຶກສາດ້ານວິຊາການແຜນງານ, ພະນັກງານຊຸມຊົນຂັ້ນເມືອງ, ແລະ ຕາງໜ້າພະນັກງານຊຸມຊົນຈາກແຕ່ລະເມືອງ.

4. ນຳສະເໜີເລື່ອງທີ່ຄົ້ນພົບ, ຢູ່ ວຽງຈັນ, ໃຫ້ແກ່ ຫົວໜ້າຄະນະບໍລິຫານແຜນງານ ລະດັບ ສູນກາງ, ແລະ ຫົວໜ້າຄະນະທີ່ປຶກສາດ້ານວິຊາການ, ຢູ່ທີ່ຫ້ອງການຂອງ GTZ[1];
5. ຂຽນບົດລາຍງານເປັນ 2 ພາສາ, ພາສາລາວ ຂຽນໂດຍທີ່ປຶກສາທີ່ເປັນຄົນລາວ, ພາສາ ອັງກິດ ຂຽນໂດຍທີ່ປຶກສາທີ່ເປັນຄົນ ເຢັຽລະມັນ. ບົດລາຍງານທັງ 2 ລະບົບ ມີເນື້ອໃນ ແລະ ຂໍ້ແນະນຳ ຄ້າຍຄືກັນ; ແຕ່ບໍ່ໝາຍຄວາມວ່າ ບົດລາຍງານທັງສອງ ແມ່ນແປມາຈາກ ພາສາ ອັງກິດ ຫລື ຈາກພາສາລາວ.

## 1.3. ຄວາມເຂົ້າໃຈ (ແບບຫຍໍ້ໆ) : ບົດບາດ ຍິງ-ຊາຍ ແລະ ສິດທິມະນຸດ

ເວລາເວົ້າເຖິງ ບົດບາດ ຍິງ-ຊາຍ ບໍ່ແມ່ນ ການເວົ້າເຖິງ ແມ່ຍິງ ໂດຍສະເພາະ, ແຕ່ແມ່ນການເວົ້າເຖິງສັງຄົມ ທັງໝົດ ຂອງຊາດໜຶ່ງ, ປະເທດໜຶ່ງ, ທີ່ປະກອບມີ ວັດທະນະທຳ, ເສດຖະກິດ, ການປົກຄອງ/ການເມືອງ, ກົດໝາຍ, ຮີດຄອງປະເພນີ ແລະ ວິຖີການດຳລົງຊີວິດຂອງຜູ້ຄົນ (ແມ່ຍິງ ແລະ ຜູ້ຊາຍ) ໃນສັງຄົມ.

ດັ່ງນັ້ນ, ຖ້າແມ່ຍິງຍັງມີສະຖານະພາບທາງສັງຄົມຕ່ຳກວ່າຜູ້ຊາຍ, ແມ່ຍິງຍັງບໍ່ສາມາດ ໃຊ້ສິດທິຂອງຕົນເອງ, ເຊັ່ນ ສິດທິ ທາງເສດຖະກິດ, ທາງສັງຄົມ, ທາງການເມືອງ (ສິດໃນການອອກສຽງ) ເທົ່າທຽມກັບຜູ້ຊາຍ, ມັນກໍໝາຍຄວາມວ່າ ສັງຄົມທັງໝົດຍັງດ້ອຍພັດທະນາ, ລວມທັງ ຄົນລຸ້ນຕໍ່ໄປ (ຍິງ ແລະ ຊາຍ) ກໍຈະດ້ອຍພັດທະນາຕໍ່ໄປ.

ບົດບາດ ຍິງ-ຊາຍ ມີຄວາມໝາຍຫລາຍກວ່າການຍົກບັນຫາຂຶ້ນມາເວົ້າເລື້ອງການແບ່ງວຽກ ທີ່ບໍ່ສະເໝີພາບກັນ ລະຫວ່າງ ຍິງ-ຊາຍ ຫລື ເວົ້າເຖິງການສ້າງລາຍຮັບຂອງແມ່ຍິງພຽງເທົ່ານັ້ນ, ມັນໝາຍເຖິງຫລາຍກວ່ານັ້ນ ຄື ໝາຍເຖິງການເຮັດໃຫ້ແມ່ຍິງສາມາດໃຊ້ສິດທິທັງໝົດຂອງເຂົາເຈົ້າໂດຍປັດສະຈາກ ທຸກຮູບແບບການຈຳແນກແມ່ຍິງ. ຍິ່ງໄປກວ່ານີ້ ສິດທິແມ່ຍິງ ແມ່ນ ສິດທິມະນຸດ ແລະ ບໍ່ແມ່ນສິດທິ ທີ່ຕ້ອງວາງໄວ້ຂ້າງຂອກໃດໜຶ່ງ.

ລັດຖະບານລາວໄດ້ເຊັນສັນຍາເປັນລັດພາຄີ ຂອງສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ(CEDAW) ແຕ່ປີ 1981, ແລະ ສົນທິສັນຍາວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ ແລະ

[1] *(ຕາຕະລາງເຮັດວຽກຂອງທີ່ປຶກສາ; ລາຍຊື່ຜູ້ເຂົ້າຮ່ວມການນຳສະເໜີ, ມີຢູ່ເອກະສານ ຄັດຕິດ, ໃນພາກສຸດທ້າຍ ຂອງບົດລາຍງານນີ້).*

ວັດທະນະທຳ (CESCR) ແຕ່ປີ 2000, ແລະ ສົນທິສັນຍາວ່າດ້ວຍການລົບລ້າງທຸກການຈຳ ແນກສີຜິວ (ເຊື້ອຊາດ) (CERD) ແຕ່ປີ 2000[2].

## 2. ສະພາບການຂອງເລື້ອງ ບົດບາດ ຍິງ-ຊາຍ ຢູ່ເຂດເປົ້າໝາຍຂອງແຜນງານ: (ຢູ່ຂັ້ນບ້ານ)

### *2.1. ການດຳລົງຊີວິດ, ການປູກຝັງ, ການລ້ຽງສັດ ແລະ ການຕະຫລາດ (ວຽກການ ຜລິດ)*

<u>ແມ່ຍິງ ເປັນ ຊາວກະສິກອນ</u> : ແມ່ຍິງທຸກຊົນເຜົ່າທັງໝົດ ດຳລົງຊີວິດ ຢູ່ເຂດເນີນສູງ ແລະ ເຂດດິນ ພຽງ, ເຮັດການ ປູກຝັງ, ລ້ຽງສັດ ເປັນຫລັກ. ປູກເຂົ້າ (ໄຮ່ ແລະ ນາ). ແຜນງານ RLIP/RDMA ກໍ ພົບໃນບົດລາຍງານການສຳຫລວດ ວ່າ ແມ່ຍິງ ມີວຽກເຮັດຫລາຍໂພດ, ແລະ ເຮັດວຽກຫລາຍ ຊົ່ວ ໂມງກວ່າຜູ້ຊາຍໃນການດຳລົງຊີວິດປະຈຳວັນ.

*ວຽກການຜລິດ / ການປູກຝັງ :*

ວຽກການຜລິດສ່ວນຫລາຍເປັນວຽກທີ່ແມ່ຍິງ ແລະ ຜູ້ຊາຍເຮັດຮ່ວມກັນ, ແຕ່ :

- ແມ່ຍິງ ຮັບຜິດຊອບວຽກຕົ້ນຕໍຫລາຍກວ່າຜູ້ຊາຍ, ໂດຍສະເພາະວຽກ ທີ່ຕ້ອງ ໃຊ້ເວລາເຮັດ ຫລາຍຊົ່ວໂມງ, ເຊັ່ນ : ຖາງປ່າ, ເສັຽຫຍ້າ, ຫົດນ້ຳ, ເລືອກແນວປູກ.
- ແມ່ຍິງ ຮັບຜິດຊອບໜ້ອຍກວ່າ ຜູ້ຊາຍ ໃນວຽກການຜລິດ, ມີວຽກ ໄຖດິນ ແລະ ຕັດຕົ້ນໄມ້ໃຫຍ່;
- ແມ່ຍິງຮັບຜິດຊອບຫລາຍວຽກກວ່າຜູ້ຊາຍ ໃນວຽກການປູກພືດຫລາຍຢ່າງ, ລວມທັງ ປູກຜັກ (ໂດຍສະເພາະ ວຽກຫົດນ້ຳ, ແລະ ເສັຽຫຍ້າ).
- ແມ່ຍິງ ຮູ້ດີວ່າ ຕົນເອງເປັນຜູ້ນຳພາໃນວຽກການຜລິດ; ທັງ ຍິງ ແລະ ຊາຍ ຮັບຮູ້ວ່າ ແມ່ຍິງມີວຽກເຮັດຫລາຍກວ່າຜູ້ຊາຍ.

ປັດຈຸບັນນີ້ ແມ່ຍິງມີວຽກເຮັດຫລາຍໂພດເພີ່ມຂຶ້ນຫລາຍເທົ່າຕົວ, ແຕ່ແມ່ຍິງມີສິດໜ້ອຍລົງໃນການ ຮັບປະກັນສະບຽງອາຫານສຳລັບການດຳລົງຊີວິດ. ແມ່ຍິງບອກວ່າບັນຫາຫຍຸ້ງຍາກທີ່ສຸດໃນການດຳ ລົງຊີວິດຂອງເຂົາເຈົ້າ ແມ່ນເນື່ອງມາຈາກ ສາເຫດ, ເຊັ່ນ :

---

[2] CEDAW : Convention on the Elimination of all forms of Descrimination Against Women; CESCR Intenational Covenant on Economic,Social and Cultural Rights; CERD Convention on the elimination of all forms of Racial Discrimination; CCPR : International Covenant on Civil and Political Rights.

1. ນະໂຍບາຍການແບ່ງດິນແບ່ງປ່າ ອະນຸຍາດໃຫ້ເຂົາເຈົ້າເຮັດໄຮ່ ໝູນ ວຽນ ຢູ່ພຽງ 3 ຕອນດິນ ນັ້ນເຮັດໃຫ້ ມີຫຍ້າຕົບຂຶ້ນຫລາຍ, ຕ້ອງເສັຽຫຍ້າຫລາຍ, ເສັຽຫຍ້າ ຫລາຍຄັ້ງ ໃນໜຶ່ງລະດູ, ແລະ ຕ້ອງການ ໃຊ້ເວລາຫລາຍຊົ່ວໂມງຕໍ່ມື້, ໃຊ້ເວລາຫລາຍມື້ຕໍ່ຄັ້ງ. ແຕ່

ວ່າ ຜົນຜລິດໄດ້ໜ້ອຍລົງ, ບໍ່ກຸ້ມກິນ. *"ແມ່ຍິງຄົນທຸກຜູ້ໜຶ່ງ ບອກວ່າ ລາວທຸກຍາກ ຍ້ອນ ຜົນຜລິດບໍ່ໄດ້ຫລາຍ, ໄຮ່ກໍ່ຢູ່ໄກ, ຫຍ້າກໍຫລາຍ, ທັງສອງຜົວເມັຽ ຈົນບໍ່ຢາກເຮັດຫຍັງຢູ່ເຮັດ ຫຍັງ ກິນອີກແລ້ວ, ເພາະ ເຮັດຫລາຍທໍ່ໃດກໍບໍ່ພໍກິນ".*

2. ນະໂຍບາຍການເຕົ້າໂຮມບ້ານແຕ່ລະບ້ານໃຫ້ໄດ້ 50 ຫລັງຄາເຮືອນ ປ່ຽນແປງ ການ ດຳລົງຊີວິດ ຂອງແມ່ຍິງໃຫ້ມີຄວາມຫຍຸ້ງຍາກຂຶ້ນອີກ, ເຊັ່ນ : ແມ່ຍິງ ຕ້ອງຍ່າງກັບໄປ ເຮັດ ໄຮ່ ຫລື ໄປ ເຮັດນາ (ບາງບ່ອນມີຊົນລະປະທານແລ້ວ) ຢູ່ເຂດການຜລິດຂອງບ້ານເກົ່າພຸ້ນ (ບາງບ່ອນໄກເຖິງ 10 ກິໂລແມັດ) ; ແລະ ບາງບ່ອນ ຍັງຕ້ອງກັບໄປຕັກນ້ຳໃຊ້ຢູ່ ບ້ານ ເກົ່າ ພຸ້ນ, ອັນນີ້ ເຮັດໃຫ້ແມ່ຍິງ ມີເວລາເຮັດວຽກ ການຜລິດໜ້ອຍລົງຕື່ມອີກໃນແຕ່ລະມື້;

3. ການສຳປະທານດິນຂະໜາດໃຫຍ່ ຢູ່ບາງບ່ອນ ເຮັດໃຫ້ ແມ່ຍິງ ມີດິນບ່ອນເຮັດການຜລິດ ຢູ່ໃກ້ ບ້ານມີໜ້ອຍລົງ.

<u>ສາເຫດເຫລົ່ານີ້ ສົ່ງຜົນສະທ້ອນໃສ່ແມ່ຍິງ :</u>

- ຜົນສະທ້ອນທີ່ກະທົບໃສ່ເຂົາເຈົ້າ ຄື ເຂົາເຈົ້າຖືກກົດດັນ, ຍ້ອນວ່າ ເຮັດວຽກຫລາຍຂຶ້ນກວ່າ ເດີມຫລາຍເທົ່າ, ແຕ່ ຜົນຜລິດໄດ້ໜ້ອຍລົງ, ແມ່ຍິງມີສິດໜ້ອຍລົງໃນການຮັບປະກັນສະ ບຽງອາຫານໃຫ້ຄອບຄົວ (ໂດຍສະເພາະ ສຳລັບ ແມ່ຍິງ ແລະ ເດັກນ້ອຍ);
- ເຮັດໄຮ່ໝູນວຽນຢູ່ພຽງ 3 ຕອນດິນນັ້ນເຮັດໃຫ້ຕອນດິນທີ່ໝູນວຽນນັ້ນ ບໍ່ທັນມີຕົ້ນໄມ້ໃຫຍ່ ໄດ້, ມີແຕ່ຕົ້ນໄມ້ນ້ອຍເກີດຂຶ້ນ, ແລະ ການຕັດຕົ້ນໄມ້ນ້ອຍກໍກາຍເປັນວຽກທີ່ແມ່ຍິງເຮັດ ໄດ້, ຜົນສະທ້ອນກໍ ແມ່ນແມ່ຍິງມີວຽກຫລາຍຂຶ້ນອີກຕື່ມ.
- ໃນເມື່ອຕ້ອງໃຊ້ວລາເຮັດຫລາຍວຽກເພີ່ມຂຶ້ນອີກໃນການເຮັດໄຮ່, ແມ່ຍິງຈຳເປັນຕ້ອງເຮັດ ໄຮ່ຢູ່ເນື້ອທີ່ນ້ອຍລົງເພາະບໍ່ມີເວລາຈະເຮັດໄດ້ຫລາຍ, ຜົນສະທ້ອນກໍ ແມ່ນ ມີຜົນຜລິດໄດ້ ໜ້ອຍກວ່າເກົ່າຕື່ມອີກ.
- ການຍ້າຍບ້ານມາຢູ່ບ່ອນເຕົ້າໂຮມກັນໃໝ່ (ລວມທັງການສຳປະທານດິນບາງບ່ອນ) ນັ້ນດິນ ບ່ອນໃໝ່ ເພື່ອທຳການຜລິດ ສ່ວນຫລາຍກໍບໍ່ເໝາະສົມ (ບາງບ່ອນກໍບໍ່ພຽງພໍ) ແມ່ຍິງ (ແລະ ຜູ້ຊາຍ) ຕ້ອງກັບໄປເຮັດການຜລິດຢູ່ບ້ານເກົ່າ, ຜົນສະທ້ອນ ຕ້ອງຍ່າງໄປໄກກວ່າ ເກົ່າ, ຕ້ອງເປ້ຕ້ອງເຈັ້ຽລູກນ້ອຍໄປນຳ, ຜົນສະທ້ອນໃສ່ ລູກນ້ອຍກໍ ແມ່ນເຮັດໃຫ້ລູກນ້ອຍ ຂອງເຂົາເຈົ້າຕ້ອງຖືກຕາກແດດໄປໄກກວ່າເກົ່າ ແລະ ດົນກວ່າເກົ່າ. ແມ່ຍິງ ອິດເມື່ອຍ

ຫລາຍກວ່າເກົ່າ (ເສັ່ງສຸກຂະພາບ), ເຂົາເຈົ້າບໍ່ມີເວລາສຳລັບຄອບຄົວ (ມີໜ້ອຍລົງ) ແມ່ຍິງ ຈຳເປັນຕ້ອງມອບວຽກຄອບຄົວໃຫ້ລູກສາວແຕ່ອາຍຸຍັງນ້ອຍເຮັດແທນ.

- ການຍ້າຍມາເຕົ້າໂຮມກັນຢູ່ບ້ານໃໝ່ ທີ່ມີຫລາຍຫລັງຄາເຮືອນເພີ່ມຂຶ້ນ ນັ້ນ ເຮັດໃຫ້ການ ບໍລິການບໍ່ມີພຽງພໍ, ເຊັ່ນ: ນ້ຳໃຊ້ບໍ່ພຽງພໍ (ແມ່ຍິງ, ບາງບ່ອນ, ຕ້ອງຍ່າງກັບ ໄປຕັກນ້ຳ ຢູ່ ບ້ານເກົ່າພຸ້ນ, ບໍ່ວ່າຈະໄກ້ ຫລື ໄກ), ໂຮງຮຽນບໍ່ພໍສຳລັບເດັກນ້ອຍ.
- ແມ່ຍິງ ຍັງຖືກກົດດັນອີກ ໃນການດຳລົງຊີວິດ ເຊັ່ນ : "ແມ່ຍິງຕ້ອງຂາຍໝາກສາລີ (ແລະ ພືດອື່ນ) ຕາມລາຄາຜູ້ຊື້ບັງຄັບໃຫ້ຂາຍ". ວຽກການເຮັດໄຮ່ປູກເຂົ້າເຮັດໃຫ້ ແມ່ຍິງລຳບາກ ຫລາຍເພີ່ມຂຶ້ນກວ່າເດີມ, ແຕ່ຜົນຜລິດໄດ້ໜ້ອຍລົງ. ແມ່ຍິງຈຶ່ງພະຍາຍາມປູກສາລີ, ໝາກ ເດືອຍ, ຂີງ, ເພື່ອຂາຍໃຫ້ໄດ້ເງິນໄວ້ຊື້ສະບຽງອາຫານເພີ່ມໃຫ້ຄອບຄົວ ແລະ ໃຫ້ຕົນເອງ; ແຕ່ ແມ່ຍິງ ກໍບໍ່ປະສົບຄວາມຫວັງດັ່ງທີ່ຕັ້ງໃຈເຮັດວຽກຫລາຍໃນການປູກພືດສຳຮອງເຫລົ່າ ນັ້ນເພື່ອຂາຍເອົາເງິນ. ເຂົາເຈົ້າຜິດຫວັງ ເພາະເຂົາເຈົ້າ ບໍ່ມີສິດທີ່ຈະຂາຍໄດ້ຕາມລາຄາທີ່ ພໍຂາຍໄດ້ ທົ່ວໄປຢູ່ຕາມແຫ່ງຕ່າງໆ,ເພາະເຂົາເຈົ້າຕ້ອງຂາຍໃຫ້ສະເພາະ ແຕ່ພໍ່ຄ້າຜູ້ທີ່ໄດ້ ຮັບອະນຸມັດໃຫ້ເກັບຊື້ພືດ ທີ່ເປັນສິນຄ້າ ຈາກຊາວນາໃນເຂດ ສະເພາະເທົ່ານັ້ນ, ເຊິ່ງພວກ ພໍ່ຄ້າເຫລົ່ານີ້ສວຍໂອກາດໃຊ້ສິດ ກົດ ລາຄາ ຕາມລຳພັງຝ່າຍດຽວ.

*"ຢູ່ບ້ານໜຶ່ງ ແມ່ຍິງບອກວ່າ ປີທຳອິດ ພວກພໍ່ຄ້າເວົ້າວ່າ ຊາວນາຕ້ອງມີໃບຕາດິນເສັ່ຽກ່ອນ ຈຶ່ງຈະ ມີສິດ ຂາຍໝາກສາລີ ໃນລາຄາດີໄດ້ (5000 ກີບຕໍ່ກິໂລ). ມາດຽວນີ້ ຊາວນາໄດ້ ຮັບໃບຕາດິນ ຢ່າງ ຖືກຕ້ອງແລ້ວ, ພວກພໍ່ຄ້າຊໍ້າພັດບອກ ວ່າ ຖ້າຈະໃຫ້ຊື້ສາລີ ໃນລາຄາດີ (5000 ກີບ) ຕໍ່ກິໂລ ນັ້ນ, ພວກພໍ່ຄ້າຈະ ຫັກເອົາ ຄ່າລົດ ອອກອີກ, ສາລີກໍຕົກເປັນລາຄາ ຖືກຢູ່ຄືເກົ່າ. ໃນຂະນະດຽວ ກັນແມ່ຍິງ ຢາກເອົາໄປຂາຍຢູ່ບ່ອນ ອື່ນ (ເຂດອື່ນ) ແຕ່ກໍບໍ່ ໄດ້ຮັບອະນຸຍາດ ເພາະລາວຕ້ອງຂາຍ ໃຫ້ ພວກພໍ່ຄ້າທີ່ຂັ້ນເມືອງອະນຸມັດໃຫ້ເທົ່ານັ້ນ".*

## ການລ້ຽງສັດ :

ວິຖີການເຮັດວຽກລ້ຽງສັດ ຄ້າຍຄືກັນ ຢູ່ໝົດທຸກບ້ານຂອງທຸກຊົນເຜົ່າ, ແມ່ຍິງ ເປັນຜູ້ລ້ຽງສັດນ້ອຍ (ໄກ່, ໝູ, ແບ້). *"ພວກແມ່ຍິງບອກວ່າ ຜູ້ຊາຍຕີໝູ ຂອງຕົນເອງເພາະບໍ່ຮູ້ວ່າແມ່ນໝູຂອງຕົນເອງ".* ຜູ້ຊາຍລ້ຽງສັດໃຫຍ່ (ງົວ,ຄວາຍ) ແຕ່ຍາມລ່າມສັດເວລາສັດເຈັບເປັນ ກໍ ແມ່ນແມ່ຍິງ, ລວມທັງ ເອົາ ນ້ຳເອົາຫຍ້າໃຫ້ສັດກິນ.

## ການຕະຫລາດ :

ແມ່ຍິງທຸກຄົນໄດ້ເຂົ້າເຖິງການຄ້າຂາຍ ເທົ່າກັບຜູ້ຊາຍ ເພາະເວລາ ພວກພໍ່ຄ້າແມ່ຄ້າຈາກພາຍ ນອກເຂົ້າເຖິງບ້ານ ກໍບໍ່ເລືອກ ວ່າຕ້ອງຄ້າຂາຍກັບ ແມ່ຍິງ ຫລື ຜູ້ຊາຍ, ເຂົາເຈົ້າພົບພໍ້ຜູ້ໃດກໍພົວພັນ ໄດ້. ພວກແມ່ຍິງ ຂາຍໝາກແຕງ, ສາລີຕົ້ມ ຕາມແຄມທາງ ພໍເປັນ ລາຍຮັບປະຈຳວັນ. ແຕ່ ພວກ ແມ່ຍິງຊົນເຜົ່າເປັນຜູ້ເສັ່ຽປຽບ, ຍ້ອນວ່າບໍ່ສາມາດໃຊ້ສິດທິຮັບເອົາ ການສຶກສາ. ເຂົາເຈົ້າ ອ່ານໜັງ

ສືບໍ່ໄດ້, ໄລ່ເລກຂັ້ນພື້ນຖານ (ບວກ, ລົບ, ຄູນ, ຫານ) ບໍ່ໄດ້, ດັ່ງນັ້ນ ເວລາ ຊື້ຂາຍກັບຄົນພາຍ ນອກ ຈຶ່ງຖືກຫລອກຢູ່ເລື້ອຍ.

ຢູ່ບ້ານໜຶ່ງ ພວກແມ່ຍິງ ບອກວ່າ ດຽວນີ້ບໍ່ມີລາຍຮັບ ເພາະບໍ່ສາມາດຂາຍເຂົ້າກ່ຳໄປໄທ, ບາງ ຄົນ ບອກວ່າເມືອງບໍ່ອະນຸຍາດໃຫ້ຂາຍ, ບາງຄົນບອກວ່າ ຍ້ອນຢູ່ໄທບໍ່ສະຫງົບ, ບາງຄົນ ບອກວ່າ ບໍ່ຮູ້ ເຫດຜົນ.

ຢູ່ອີກບ້ານໜຶ່ງ ແມ່ຍິງ ບອກວ່າ ປູກຂີງ ໄດ້ຫລາຍ, ແຕ່ດຽວນີ້ຂາຍໄປໄທບໍ່ໄດ້, ຂີງທີ່ມີ ກໍຂາຍບໍ່ທັນ ແລ້ວຂີງກໍເໜົ່າຖິ້ມ.

**ເຄື່ອງປ່າຂອງດົງ:**

ແມ່ຍິງຊົນເຜົ່າຕ່າງໆ ກໍຄືກັບ ຜູ້ຊາຍຊົນເຜົ່າຕ່າງໆ ລ້ວນແຕ່ເປັນຜູ້ເຂົ້າເຖິງ ແລະ ນຳໃຊ້ ເຄື່ອງ ປ່າຂອງດົງ, ຢ່າງເທົ່າທຽມກັນ ຫລື ບາງທີ ແມ່ຍິງອາດເຂົ້າເຖິງ ແລະ ໃຊ້ຫລາຍກວ່າ ຕົວຢ່າງ : ຫາອາຫານເພີ່ມໃຫ້ໝູ (ກ້ວຍປ່າ, ມັນປ່າ)

**ຜູ້ເກັບມ້ຽນເງິນໃນຄອບຄົວ :**
**ພວກແມ່ຍິງລາວລຸ່ມສວ່ນໃຫຍ່ເປັນຜູ້ເກັບມ້ຽນເງິນຂອງຄອບຄົວ, ແລະ ຍາມໃດຕ້ອງຈ່າຍຈຳນວນ ໃຫຍ່ເຂົາເຈົ້າຈຶ່ງປຶກສາກັບຜົວ; ພວກແມ່ຍິງຊົນເຜົ່າອື່ນສ່ວນຫລາຍເປັນຜູ້ເກັບມ້ຽນເງິນ, ແຕ່ຜົວ ເປັນ ຜູ້ສັ່ງຈ່າຍ, ບາງຄັ້ງເງິນກ້ອນໃຫຍ່ແມ່ນຜົວເປັນຜູ້ເກັບມ້ຽນ (ໂດຍເຊື່ອງໄວ້ບ່ອນເມັຽບໍ່ຮູ້).**

### 2.1.1. ວຽກຄອບຄົວ (ວຽກຈະເລີນພັນມະນຸດ/ວຽກຖະໜຸບຳລຸງມະນຸດ)

ແມ່ຍິງທຸກຊົນເຜົ່າເປັນຜູ້ຮັບຜິດຊອບຕົ້ນຕໍໃນວຽກຄອບຄົວ, ເຊັ່ນວຽກ :

- ຕັກນ້ຳໃຊ້ ແລະ ເອົາຟືນ (ຈະໄກ ຫລື ໄກ້ ກໍຈຳເປັນຕ້ອງໄປ),
- ຕຳເຂົ້າ ແລະ ຝັດເຂົ້າ
- ແຕ່ງກິນ, ຊັກເຄື່ອງນຸ່ງ,
- ເອົາລູກ (ເອົານ້ອງ),

ຮອດປັດຈຸບັນນີ້ ແມ່ຍິງ ຕ້ອງເຮັດວຽກການຜລິດເພີ່ມຂຶ້ນຫລາຍ, ເຂົາເຈົ້າຕ້ອງໃຫ້ລູກສາວຮັບຜິດ ຊອບເຮັດວຽກຄອບຄົວແທນ, ອັນນີ້ ເປັນຜົນສະທ້ອນເຮັດໃຫ້ເດັກຍິງ ບໍ່ມີໂອກາດໄດ້ຮັບການສຶກ ສາ, ທັງທີ່ມີການບໍລິການ ສຶກສາໃຫ້ເຂົາເຈົ້າ.

## 2.2. ສະຖານະພາບ ທາງສັງຄົມ ແລະ ສິດທິ ຂອງແມ່ຍິງ

ເບິ່ງໂດຍລວມ, ເຫັນວ່າແມ່ຍິງລາວລຸ່ມສ່ວນໃຫຍ່ ມີສະຖານະພາບທາງສັງຄົມເທົ່າທຽມ ກັບຜູ້ຊາຍ ຫລາຍກວ່າໂດຍສົມທຽບໃສ່ແມ່ຍິງຊົນເຜົ່າອື່ນໆ. ພວກແມ່ຍິງຊົນເຜົ່າອື່ນໆທັງຫລາຍ ມີສະຖານະ ພາບຕໍ່າຕ້ອຍ ຫລາຍກວ່າຜູ້ຊາຍ.

ຜູ້ຊາຍເປັນນາຍ :

ໂດຍທົ່ວໄປ, ໃນສັງຄົມລາວ, ຄົນສ່ວນໃຫຍ່ທີ່ສຸດ, ເມື່ອເວົ້າ ເຖິງ ຄໍາວ່າ "ຊາວກະສິກອນ" ທຸກຄົນ ຈະມອງເຫັນ ພາບ "ຜູ້ຊາຍ ເປັນ ຊາວກະສິກອນ, ແມ່ຍິງ ເປັນ ເມັຽຂອງຊາວກະສິກອນ". ເມື່ອ ເວົ້າເຖິງ ຫົວໜ້າຄອບຄົວ ກໍມອງເຫັນ ພາບ "ຜູ້ຊາຍເປັນຫົວໜ້າຄອບຄົວ". ເມື່ອເວົ້າເຖິງ ປຶ້ມສໍາມະ ໂນຄົວ ກໍມອງເຫັນ ຊື່ຂອງ "ຜູ້ຊາຍເປັນເຈົ້າຂອງປຶ້ມສໍາມະໂນຄົວ". ເມື່ອເວົ້າເຖິງ ນາຍບ້ານ ກໍມອງ ເຫັນພາບ ຜູ້ຊາຍໂລດ.

ຢູ່ບ້ານບ່ອນໄປຢ້ຽມຢາມທັງໝົດ 7 ບ້ານ, ມີແມ່ຍິງ 1 ຄົນ ເຄີຍເປັນ ຄະນະ ອໍາ ນາດການປົກຄອງ ບ້ານ, ແຕ່ກໍອອກແລ້ວ (ບ້ານຫວ້ຍເຜິ້ງ, ແມ່ຍິງເຜົ່າມົ້ງ).

ເວລາເວົ້າເຖິງ ເລື້ອງ ຈະໃຫ້ບົດບາດ ແກ່ ແມ່ຍິງ, ຜູ້ຊາຍຈໍານວນສ່ວນໃຫຍ່ ກໍສະແດງທັດສະນະ ແບບກີດກັ້ນ ອອກມາ ກ່ອນໂລດວ່າ *"ແມ່ ຍິງບໍ່ມີລະດັບ".*

ຜູ້ຊາຍ ເປັນນາຍແມ່ຍິງ ມາຫລາຍລຸ້ນຄົນແລ້ວ, ແມ່ຍິງສ່ວນໃຫຍ່ເອງກໍ ຍອມຮັບ ຕາມທີ່ສັງຄົມ ອີກເຄິ່ງໜຶ່ງທີ່ແມ່ນຜູ້ຊາຍ ເປັນຜູ້ກໍານົດໃຫ້; ເຖິງວ່າແມ່ນ ຜູ້ຊາຍ (ເຄິ່ງໜຶ່ງອີກຂອງສັງຄົມ ເປັນຜູ້ ກໍານົດ) ແຕ່ຊໍ້າພັດ ຮັບວ່າ ແມ່ນ ສັງຄົມ (ທີ່ມີ ຍິງ ແລະ ຊາຍ) ກໍານົດໃຫ້, ເຊັ່ນ ມັກເວົ້າວ່າ ແມ່ນ ຮີດຄອງປະເພນີ, ແມ່ນ ວັດທະນະທໍາ, ແຕ່ບໍ່ຄໍານຶງໄດ້ວ່າ ແມ່ນ ຜູ້ຊາຍ ເປັນຜູ້ກໍານົດ ກົດຮີດຄອງ ປະເພນີ ທັງຫລາຍ ທີ່ປະຕິບັດ ກັນມາຕັ້ງແຕ່ຊ້ານານ, ຕັ້ງແຕ່ບັນພະບຸລຸດມາພຸ້ນ.

ແຕ່ໃນຄວາມເປັນຈິງແລ້ວ ຜູ້ຊາຍໄດ້ເປັນນາຍແມ່ຍິງ ຍ້ອນແມ່ຍິງບໍ່ມອງເຫັນການເປັນຢູ່ທີ່ແທ້ຈິງ ຂອງຕົນເອງ, ທີ່ຕົນເອງກໍຄວນທີ່ຈະເປັນນາຍໄດ້ເຊັ່ນກັນ. ບັນຫາຈຶ່ງມີຂຶ້ນວ່າ : ໃຜເປັນນາຍໃນ ຕົວຈິງ : ***ໃນເວລາປະເມີນຢູ່ຂັ້ນບ້ານ ພວກແມ່ຍິງບອກວ່າ : ແມ່ຍິງ ແລະ ຜູ້ຊາຍ ເຮັດວຽກການຜລິດຮ່ວມ ກັນ ແຕ່ແມ່ນ ແມ່ຍິງເປັນຜູ້ພາເຮັດ, ເປັນຜູ້ບອກຜູ້ຊາຍວ່າຍາມໃດ (ມື້ໃດ, ເດືອນໃດ) ຕ້ອງໄປ ຟັນໄມ້, ຟັນ ຕົ້ນໃດແດ່, ໄປຕາກຫຍ້າ, ຈູດຫຍ້າ ແລະ ອື່ນໆ (ໄດ້ຍິນຈາກແມ່ຍິງ ມົ້ງ, ຢ້າວ, ໄປຣ່ ແລະ ຂະມຸ)***
ແມ່ຍິງ ແລະ ຜູ້ຊາຍ ຈໍານວນໜຶ່ງ (ທີ່ໄດ້ອົບຮົມເລື້ອງ ບົດບາດ ຍິງ-ຊາຍ) ບອກວ່າ ແມ່ຍິງ ກໍມີສິດ ອອກສຽງ ໄດ້ໃນເວລາປະຊຸມ, ແຕ່ ແມ່ຍິງ ກໍບໍ່ມີການຊຸກຍູ້ເປັນລະບົບເພື່ອໃຫ້ຮູ້ໃຊ້ສິດໃນການ ອອກຄໍາເຫັນ.

ແມ່ຍິງ ມີສິດໄດ້ຮັບການສຶກສາເທົ່າທຽມກັບ ຜູ້ຊາຍ, ໂດຍສະເພາະ ສາມາດເຂົ້າໂຮງຮຽນ ທີ່ມີ ຢູ່ກັບບ້ານ, ແຕ່ແມ່ຍິງ ກໍບໍ່ສາມາດຮັບເອົາການບໍລິການນັ້ນ (ເພາະ ສະຖານະພາບຂອງແມ່ຍິງໃນສັງຄົມຕໍ່າ, ຖານະແມ່ຍິງແມ່ນມີແຕ່ຢູ່ບ່ອນເຮັດໄຮ່);

ແມ່ຍິງ ມີ ສະຖານະພາບທາງສັງຄົມຕໍ່າ, ມີການສຶກສາໜ້ອຍ, ມີວຽກເຮັດຫລາຍໂພດ, ເປັນສາເຫດເຮັດໃຫ້ ແມ່ຍິງບໍ່ມີຄວາມໝັ້ນໃຈ ທີ່ຈະອອກຄໍາເຫັນ (ທີ່ຈະໃຊ້ສິດຂອງຕົນເອງ) ຢູ່ບ່ອນມີຜູ້ຊາຍຢູ່ນໍາ.

**ແມ່ຍິງ ຢູ່ໃນສະຖານະພາບທີ່ເສັງປຽບກວ່າຜູ້ຊາຍ ໃນເລື້ອງການພົວພັນກັບພາຍນອກ:**

ແມ່ຍິງມີວຽກເຮັດຫລາຍໂພດ, ແລະ ເພີ່ມຂຶ້ນຕື່ມອີກໃນປັດຈຸບັນນີ້. ແມ່ຍິງ, ຕັ້ງແຕ່ເດີມມາ ທີ່ບໍ່ ເຄີຍມີເວລາຈະພົບພໍ້ກັນເອງ ຫລາຍປານໃດ ນັ້ນ ປັດຈຸບັນນີ້ກໍຍິ່ງບໍ່ມີເວລາເລີຍ ຫລື ມີໜ້ອຍ ທີ່ສຸດ ທີ່ຈະໄດ້ພົບພໍ້ກັນເອງເພື່ອລົມກັນເຖິງສະພາບຂອງແມ່ຍິງເອງ; ແລະ ເຖິງສະພາບຊຸມຊົນບ່ອນເຂົາເຈົ້າດໍາລົງຊີວິດຢູ່ (ນອກຈາກແມ່ຍິງລາວລຸ່ມ, ສ່ວນໃຫຍ່).

ໃນເວລາປະເມີນຢູ່ຂັ້ນບ້ານ, ພວກແມ່ຍິງເຜົ່າມົ້ງທີ່ມາສົນທະນາກັນຢູ່ໃນກຸ່ມບໍ່ຮູ້ຊໍ້າວ່າ ມີແມ່ຍິງພວກໜຶ່ງໄດ້ຍ້າຍບ້ານໄປຢູ່ບ່ອນອື່ນແລ້ວຍ້ອນຄວາມທຸກຈົນ ແລະ ລໍາບາກ; ແລະ ເຂົາເຈົ້າຍັງ ບອກວ່າຕາມປະເພນີແລ້ວ ບໍ່ເຄີຍຊ່ວຍກັນໃນການດໍາລົງຊີວິດ ເພາະແຕ່ລະຄົນ (ແຕ່ລະຄອບຄົວ) ຫາກຕ່າງຢູ່ຕ່າງຊອກ ກິນ. ເຂົາເຈົ້າບອກວ່າຕາມປະເພນີແລ້ວເຂົາເຈົ້າເບິ່ງແຍງຊ່ວຍເຫລືອກັນສະເພາະແຕ່ຄົນໃນ ວົງຕະກຸນ ດຽວກັນເທົ່ານັ້ນ. ອັນນີ້ ກໍເຮັດໃຫ້ ແມ່ຍິງ ບໍ່ກ້າ, ບໍ່ມີສິດ (ຂຶ້ນນໍາຜົວ) ຈະຕັດສິນໃຈວ່າຕ້ອງຊ່ວຍແມ່ຍິງອື່ນທີ່ລໍາບາກໄດ້ແນວໃດ ເຖິງວ່າຢູ່ໃນບ້ານດຽວກັນກໍຕາມ.

ແມ່ຍິງ ບໍ່ມີເວລາ ແລະ ບໍ່ມີໂອກາດ ຈະໄດ້ພົບພໍ້ຄົນພາຍນອກ ຫລາຍ ຄືກັບ ຜູ້ຊາຍ, ຍ້ອນຕ້ອງເຮັດວຽກຕະຫລອດເວລາ, ບໍ່ມີໂອກາດໄດ້ໃຊ້ພາສາລາວຫລາຍຄືກັບຜູ້ຊາຍ. ຍິ່ງໄປກ່ວານັ້ນ :

- ເວລາຄົນພາຍນອກເຂົ້າໄປໃນບ້ານກໍຊອກຫາຜູ້ຊາຍ (ຫົວໜ້າບ້ານ, ຫົວໜ້າຄອບ ຄົວ, ເຈົ້າກົກເຈົ້າເຫຼົ່າທີ່ເປັນ ຜູ້ຊາຍ).
- ເວລານັດປະຊຸມກໍບອກໃຫ້ ຫົວໜ້າຄອບຄົວມາ (ຜູ້ຊາຍ ຕື່ມອີກ)
- ເວລາບອກໃຫ້ນາຍບ້ານ (ຜູ້ຊາຍ) ຮ້ອງປະຊຸມບ້ານ, ກໍຮ້ອງ ຫົວໜ້າຄອບຄົວ ຫລື ຕາງໜ້າ ຄອບຄົວມາ (ຜູ້ຊາຍ ຕື່ມອີກ). ທັງໝົດ ກາຍເປັນເລື້ອງ “ຜູ້ຊາຍຮ້ອງຜູ້ຊາຍມາລົມນໍາຜູ້ຊາຍ”

**ຮີດຄອງປະເພນີ (ວັດທະນະທໍາ) ທີ່ຕອກຍໍ້າສະຖານະພາບທີ່ເສັງປຽບຂອງແມ່ຍິງ (ທີ່ຕ້ອງເປັນຜູ້ເຮັດຕາມຜູ້ຊາຍບອກ ຫລື ອະນຸຍາດໃຫ້) :**

ຮີດຄອງປະເພນີຂອງຊົນເຜົ່າໃນການແບ່ງມູນຂອງພໍ່ແມ່ໃຫ້ລູກ, ເຖິງຈະເປັນແບບ ເອົາຕາມ ສາຍຜູ້ຊາຍ (ສາຍບິດາທິລາດ) ຫລື ເອົາຕາມສາຍແມ່ຍິງ (ສາຍມານດາທິລາດ) ກໍຕາມ ແມ່ຍິງເສັຽປຽບຢູ່ທຸກແບບ; ເຊັ່ນ (ຊົນເຜົ່າ 1) ກຳນົດວ່າ ລູກສາວບໍ່ໄດ້ມູນເພາະຕ້ອງຍ້າຍ ໄປຢູ່ ນຳຄອບຄົວຜົວ, ແລ້ວລູກສາວຈະບໍ່ໄດ້ລ້ຽງພໍ່ແມ່, ດັ່ງນັ້ນ ລູກສາວຈຶ່ງບໍ່ໄດ້ຫຍັງ, ແລະ ມີແຕ່ ລູກຊາຍ ທີ່ເປັນ ຜູ້ຕ້ອງຢູ່ລ້ຽງພໍ່ແມ່ ກໍຕ້ອງເປັນຜູ້ໄດ້ມູນ; (ຊົນເຜົ່າ 2) ແຕ່ງງານ ແລ້ວເຂີຍມາ ຢູ່ນຳພໍ່ເຖົ້າແມ່ເຖົ້າ ຈົນພໍລົງເຮືອນ ໄດ້ແລ້ວຈຶ່ງໄປຕັ້ງເຮືອນ ຢູ່ຕ່າງຫາກ ນັ້ນ ລູກຊາຍ ກໍໄດ້ຫລາຍກວ່າເພາະອອກເຮືອນໄປເປັນຄອບຄົວຂອງຕົນເອງ. ເມື່ອເປັນແບບນີ້ ກໍກຳນົດໄວ້ວ່າລູກສາວຕ້ອງໄດ້ໜ້ອຍ ກວ່າລູກຊາຍເພາະມີຜົວລ້ຽງ.

- ເກືອບໝົດທຸກຊົນເຜົ່າ ພວກຜູ້ຊາຍ ບອກວ່າ ບໍ່ມັກມີການຢ່າຮ້າງ ເພາະ ໄດ້ຈ່າຍຄ່າ ແພງຫລາຍ ແລ້ວຕອນແຕ່ງ ເອົາເມັຽນັ້ນ, ບາງເຜົ່າກໍຮອດບອກວ່າ “ຊື້ເມັຽມາແພງ ແລ້ວ, ໝູ 3 ໂຕ, ງົວ 2 ໂຕ” ແລະ ຮ້າງບໍ່ໄດ້, ມີແຕ່ປະໄດ້ (ບໍ່ນອນນຳ) ແລະ ເອົາເມັຽ ເພີ່ມຕື່ມອີກ ມາ ຊ່ວຍວຽກເຮັດໄຮ່ຂອງຄອບຄົວ. ຖ້າແມ່ຍິງ ຖືກຮ້າງ ຫລື ເປັນໝ້າຍ ກໍບໍ່ມີສິດກັບມາຫາ ພໍ່ແມ່ ຫລື ເຂົ້າຢູ່ໃນເຮືອນນຳພໍ່ແມ່ໄດ້ “ເພາະຄອບ ຜີໃຫ້ລູກສາວ ອອກເຮືອນໄປແລ້ວ”. ແມ່ຍິງໃນກໍລະນີແບບນີ້ຕົກຢູ່ໃນຄວາມກົດດັນຕະຫລອດ. ຜູ້ຊາຍ ສ້າງກົດປະເພນີ ຕ່າງໆທາງໂລກ ແລະ ທາງຜີ ເພື່ອເຮັດໃຫ້ສະຖານະພາບແມ່ຍິງຕໍ່າຕ້ອຍ.

### 2.2.1. ການໃຊ້ຄວາມຮຸນແຮງກັບແມ່ຍິງໃນຄອບຄົວ (ທຳລາຍຮ່າງກາຍໂດຍກົງ)

ການທຸບຕີເມັຽໃນຄອບຄົວ ເປັນການບົ່ງບອກ ຈະແຈ້ງ ວ່າ ແມ່ຍິງ ມີສະຖານະພາບ ທາງສັງຄົມຕໍ່າ. ຜູ້ຊາຍມີສິດທຸບຕີໄດ້, ແມ່ຍິງ ບໍ່ໄດ້ໃຊ້ສິດຕົນເອງ ເພື່ອຮັບປະກັນໃຫ້ມີຊີວິດ ສະຫງົບສຸກ, ປັດສະ ຈາກການຖືກທຳລາຍຮ່າງກາຍ.

ພວກແມ່ຍິງຊົນເຜົ່າທີ່ຖືກຜົວໃຊ້ສິດ ຕີ ເຂົາເຈົ້າໄດ້, ສ່ວນໃຫຍ່, ແມ່ນ ພວກປະຕິບັດປະເພນີ ຕາມສາຍ ຜູ້ຊາຍເປັນໃຫຍ່ (ແບບ ບິດາທິລາດ) ຄື ເມື່ອແຕ່ງງານແລ້ວ ແມ່ຍິງ ຕ້ອງຍ້າຍໄປ ຢູ່ ນຳ ຄອບຄົວຜົວ ເພາະ ຝ່າຍຊາຍຈ່າຍຄ່າດອງແພງໃຫ້ຝ່າຍຍິງແລ້ວ, ຫລື ຊື້ມາແລ້ວ (ໝູ 3 ໂຕ, ງົວ 2 ໂຕ) ແລະ ກາຍເປັນກຳມະສິດຂອງຄອບຄົວຝ່າຍຜົວແລ້ວ.

ສາເຫດ ຜົວ ໃຊ້ສິດທຸບຕີ ເມັຽ ແມ່ນ ຍ້ອນວ່າ ຢູ່ບ້ານ ມີເຫລົ້າກິນ, ກິນຈົນເມົາ. ດັ່ງນັ້ນ **ບໍ່ຄວນ ສົ່ງເສີມກິດຈະກຳຫາລາຍໄດ້ຂອງແມ່ຍິງດ້ວຍການຕົ້ມເຫລົ້າຂາຍ.**

*ພວກຜູ້ຊາຍຈຳນວນໜຶ່ງ ຢູ່ບ້ານບ່ອນໜຶ່ງ ເວົ້າວ່າ ຈະດີກວ່າ ຖ້າພາກັນເຊົາຕົ້ມເຫລົ້າ ເພາະ ບໍ່ມີເຫລົ້າກິນ ແລ້ວ ຈະບໍ່ຕີເມັຽ. ແຕ່ ຜູ້ຊາຍອີກພວກໜຶ່ງ ຊຳພັດ ອຸທານອອກມາວ່າ : ບໍ່ໄດ້ ດອກເພາະເວລາພະນັກງານມາເຮັດວຽກຍາມໃດກໍຖາມກິນເຫລົ້າ.*

ບໍ່ມີມາດຕະການຫຍັງ ທີ່ຍົກເລື້ອງ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນຄອບຄົວຂຶ້ນມາເວົ້າ, ຜູ້ຊາຍຫລາຍ ຄົນທີ່ເຄີຍຕີເມັຽ ເວົ້າວ່າ "ຕີຫລິ້ນ", ຜູ້ຊາຍ ຫລື ຄະນະອຳນາດການປົກຄອງ ເມີນເສີຍ ຕໍ່ເລື້ອງນີ້, ໄດ້ຍິນ ພຽງກໍລະນີ ດຽວວ່າ ມີຜູ້ຊາຍຄົນໜຶ່ງຖືກເຂົ້າຄຸກຍ້ອນຕີເມັຽ.

## 2.3. ບົດບາດຂອງສະຫະພັນແມ່ຍິງຂັ້ນບ້ານ:

ແມ່ຍິງຊົນເຜົ່າຫລາຍພວກບໍ່ເຄີຍດຳລົງຊີວິດຢູ່ແບບເປັນກຸ່ມກ້ອນສັງຄົມສະເພາະ, ເຊັ່ນ : ບໍ່ມີການ ພົບປະສັງສັນກັນຫລາຍ, ບໍ່ມີຮີດຄອງການຊ່ວຍເຫລືອກັນພາຍໃນບ້ານ, ນອກຈາກ ຊ່ວຍເຫລືອ ແຕ່ ພີ່ນ້ອງຂອງຕົນເອງ ນັ້ນ, ປັດຈຸບັນນີ້ ສະຫະພັນແມ່ຍິງ ໄດ້ຊີ້ນຳຈັດຕັ້ງໃຫ້ແມ່ຍິງຊົນເຜົ່າທັງຫລາຍ ຢູ່ ຂັ້ນບ້ານເປັນການຈັດຕັ້ງ "ສະຫະພັນແມ່ຍິງບ້ານ".

ສະຫະພັນແມ່ຍິງບ້ານ ຕ້ອງປະຊຸມກັນ ທຸກໆວັນທີ 15 ຂອງແຕ່ລະເດືອນ; ທີ່ປະຊຸມຕ້ອງເວົ້າລົມ ຕາມຫົວຂໍ້ທີ່ກຳນົດໄວ້ໂດຍສະຫະພັນແມ່ຍິງຂັ້ນເມືອງແນະນຳໃຫ້ຄື:

- ເຕົ້າໂຮມກັນເຮັດອະນາໄມບ້ານ
- ລະດົມກັນ (ບອກກັນ) ເຮັດການຜລິດຕາມລະດູການເພື່ອກຸ້ມຢູ່ກຸ້ມກິນ
- ສະມາຊິກສະຫະພັນແມ່ຍິງບ້ານເສັຽຄ່າສະມາຊິກປີລະ 6000 ກີບ
- ເສັຽເງິນສະຕິ ຜູ້ລະ 2000 ກີບຕໍ່ປີ (ສຳລັບແມ່ຍິງທຸກຄົນໃນບ້ານທີ່ບໍ່ເປັນສະມາຊິກ ສະຫະ ພັນແມ່ຍິງບ້ານ)
- ແບ່ງເງິນທີ່ສະຫະພັນແມ່ຍິງບ້ານເກັບໄດ້ສົ່ງໃຫ້ແມ່ຍິງເມືອງ 1/3
- ເງິນທີ່ເກັບໄດ້ ຕ້ອງສ້າງເປັນຄັງຂອງແມ່ຍິງບ້ານເພື່ອໄວ້ໃຫ້ແມ່ຍິງຢືມເວລາອອກລູກ ຫລື ເຈັບເປັນ *(ແຕ່ປະກົດເຫັນວ່າ ບາງບ່ອນ ກໍມີ ຫົວໜ້າແນວໂຮມບ້ານ (ຜູ້ຊາຍ ) ມາຢືມ ໄປເຮັດ ການຜລິດໄດ້ດົນແລ້ວຍັງບໍ່ສົ່ງ);*
- ເງິນຈຳນວນໜຶ່ງ ແມ່ຍິງບ້ານເກັບໄວ້ປະກອບສວ່ນເປັນອາຫານຮັບແຂກບ້ານທີ່ໄປຈາກ ຂັ້ນເມືອງ (ຊື້ໄກ່ຕົ້ມໃຫ້ພະນັກງານກິນ);
- ຈັດຕັ້ງແມ່ຍິງແຕ່ງກິນເວລາມີຮັບແຂກບ້ານ ຫລື ເຮັດວຽກລວມຂອງບ້ານ;

<u>ຂໍ້ສັງເກດ :</u>

**1. ການແບ່ງວຽກ ຍິງ-ຊາຍ ບໍ່ມີການປ່ຽນແປງ, ຍັງຄືເກົ່າ, ເຊັ່ນ : ແມ່ຍິງຕ້ອງ ອະນາໄມ, ແຕ່ງກິນ, ຮັບໃຊ້ບໍລິການ;**

*1.1.* ບໍ່ໄດ້ຈັດໃຫ້ເປັນວຽກທີ່ຜູ້ຊາຍຕ້ອງເຮັດ ແລະ ເຊົາໃຫ້ການຈັດຕັ້ງແມ່ຍິງ ເຮັດວຽກເຫລົ່ານີ້ ເພື່ອເປັນການລິເລີ່ມ ການຮັບຮູ້ສິດສະເໝີພາບທີ່ແທ້ຈິງ ລະຫວ່າງ ຍິງ- ຊາຍ ໃຫ້ເຫັນວ່າ ບົດບາດ ຍິງ ຊາຍ ປ່ຽນແປງຢ່າງແທ້ ຈິງໄດ້. ຕົວຢ່າງ :

ຄວນຈັດໃຫ້ຊາວໜຸ່ມ ທັງ ຍິງ ແລະ ຊາຍ ເຮັດວຽກອັນດຽວກັນຮ່ວມກັນ, ເຊັ່ນ: ເຮັດວຽກບໍລິການ ຮັບແຂກ ທີ່ມີ ແຕ່ງກິນ, ລ້າງຖ້ວຍ, ຕົ້ມນໍ້າ, ແລະ ອະນາໄມບ້ານ.

*1.2.* ການທີ່ຍັງກໍານົດບົດບາດໃຫ້ການຈັດຕັ້ງແມ່ຍິງບ້ານເຮັດວຽກອະນາໄມ, ແຕ່ງ ກິນ, ຮັບໃຊ້ບໍລິການ ເຫລົ່ານີ້ ເປັນການຕົກຖອຍບົດບາດແມ່ຍິງລົງຕື່ມອີກຊໍ້າ. ເພາະແຕ່ກ່ອນ ມີພຽງ ຜູ້ຊາຍ 1 ຄົນ (ຜົວ) ເປັນຜູ້ສັ່ງໃຫ້ເຮັດວຽກ ບໍລິການ ແບບນີ້ຢູ່ໃນຄອບຄົວ, ແຕ່ດຽວນີ້ ມີເປັນການຈັດຕັ້ງ ສັ່ງໃຫ້ແມ່ຍິງເຮັດວຽກ ບໍລິ ການແບບນີ້.

## 2. ແມ່ຍິງຊົນເຜົ່າຮູ້ແຕ່ໜ້າທີ່, ແຕ່ບໍ່ຮູ້ສິດທິຂອງຕົນເອງ, ຫລື ບໍ່ກ້າເວົ້າອອກມາທີ່ປະຊຸມ ຍ້ອນ ຂາດຄວາມໝັ້ນໃຈ .

ຕົວຢ່າງ : ສະຫະພັນແມ່ຍິງຊົນເຜົ່າຂັ້ນບ້ານ ຮູ້ໜ້າທີ່ ວ່າ ຕ້ອງສົ່ງເງິນ 1/3 ໃຫ້ຂັ້ນເມືອງ, ແຕ່ບໍ່ຮູ້ (ບໍ່ຈື່) ວ່າ ເປັນຫຍັງ ຕ້ອງສົ່ງເງິນຂອງຕົນເອງໄປໃຫ້ ບ່ອນອື່ນ. ຢູ່ບາງບ້ານ ແມ່ຍິງ ບອກວ່າ ເຂົາ ເຈົ້າ ມີສິດ ທີ່ຈະເປັນ ຫລື ບໍ່ເປັນສະມາຊິກ ຂອງການຈັດຕັ້ງ ແມ່ຍິງບ້ານ. ແຕ່ບໍ່ໄດ້ ຍິນວ່າ ມີ ແມ່ຍິງ ຄົນໃດໜຶ່ງ ໄດ້ໃຊ້ສິດກ້າບອກວ່າ ຍ້ອນຕົນເອງທຸກຈົນ ຫລື ລໍາບາກ, ແລະ ບໍ່ຢາກຈ່າຍເງິນສະຕິ ທີ່ ສະຫະພັນແມ່ຍິງເມືອງ ແນະນໍາໃຫ້ເກັບ (ຜູ້ລະ 2000 ກີບຕໍ່ປີ); ຫລື ຕົວຢ່າງ ເວລາແມ່ຍິງຖືກຜົວຕີ ກໍບໍ່ກ້າເວົ້າກັບການຈັດຕັ້ງວ່າເປັນການລະເມີດສິດທິຂອງຕົນ; ອື່ນໆ.

**ຂໍສະຫລຸບວ່າ** : ສະຫະພັນແມ່ຍິງບ້ານທີ່ຕັ້ງຂຶ້ນມີແຕ່ໃຫ້ຮູ້ບົດບາດວ່າຕ້ອງເຮັດຫຍັງແດ່, ແຕ່ບໍ່ ໄດ້ຮັບຄວາມເຂົ້າໃຈ ຫລື ຄໍາແນະນໍາ ທີ່ເປັນແບບແນໃສ່ ເພື່ອ ປ່ຽນແປງໃຫ້ສະຖານະພາບ ຂອງ ແມ່ຍິງສູງຂຶ້ນ, ເພື່ອໃຫ້ແມ່ຍິງມີຄວາມໝັ້ນໃຈໃນ ການໃຊ້ສິດຕັດສິນໃຈໂດຍ ເຂົາເຈົ້າເອງ.

## 3. ວິທີການເຮັດວຽກຂອງແຜນງານ ທີ່ໃຫ້ຜົນປະໂຫຍດ ແລະ ທີ່ກະທົບ ໃສ່ ແມ່ຍິງ (ຢູ່ຂັ້ນບ້ານ)

**ເບິ່ງໂດຍລວມ, ເຫັນວ່າແມ່ຍິງລາວລຸ່ມສ່ວນໃຫຍ່ ມີສະຖານະພາບທາງສັງຄົມເທົ່າທຽມ ກັບຜູ້ຊາຍຫລາຍ; ແຕ່ພວກແມ່ຍິງຊົນເຜົ່າອື່ນທັງຫລາຍ ມີສະຖານະພາບຕ່ຳຕ້ອຍ ຫລາຍກວ່າຜູ້ຊາຍ.**

*ຮອດປັດຈຸບັນນີ້, ແຜນງານ ປະຕິບັດ ວິທີການ ໃນແງ່ ຂອງ ເລື້ອງ ບົດບາດ ຍິງ ຊາຍ ມີດັ່ງນີ້ :*

- ແຜນງານມີບາງຄວາມພະຍາຍາມຈັດຕັ້ງການປະຊຸມກັບກຸ່ມແມ່ຍິງສະເພາະ, ເຊັ່ນ ໃນເວລາເຮັດກິດຈະກຳການວາງແຜນພັດທະນາບ້ານ ຈັດໃຫ້ມີກຸ່ມແມ່ຍິງສະເໜີກິດຈະກຳຂອງແມ່ຍິງສະເພາະ;
- ແຜນງານໃຊ້ຄວາມພະຍາຍາມບາງຄັ້ງໃຈ້ແຍກຂໍ້ມູນ ຕາມເພດ ຍິງ, ເພດຊາຍ;
- ພະນັກງານບາງຂະແໜງການພະຍາຍາມຮ້ອງແມ່ຍິງມາຮ່ວມປະຊຸມພ້ອມກັບຜູ້ຊາຍ (ຝຶກອົບຮົມຢູ່ຂັ້ນບ້ານບາງຄັ້ງ);
- ສະຫະພັນແມ່ຍິງໄດ້ຈັດການຝຶກອົບຮົມປູກຈິດສຳນຶກ ເລື້ອງ ບົດບາດ ຍິງ-ຊາຍ ໃຫ້ພະນັກງານແຜນງານ, ແລະ ໃຫ້ຊາວບ້ານ ທັງ ຍິງ ແລະ ຊາຍ;
- ມີການເກັບກຳຂໍ້ມູນສະເພາະ ແມ່ຍິງ ເກົ່າ, ແມ່ຍິງທຸກ, ແມ່ຍິງລຳບາກ;
- ສະຫະພັນແມ່ຍິງບາງເມືອງພະຍາຍາມວາງແຜນກິດຈະກຳສະເພາະແມ່ຍິງ, ແຕ່ຍັງຢູ່ໃນຂັ້ນຕອນການຕຽມຂໍ້ສະເໜີ;

## ຂໍ້ສັງເກດທັງຫລາຍທີ່ໄດ້ໃນການປະເມີນຄັ້ງນີ້ :

## 3.1. ສິດທິທາງດ້ານເສດຖະກິດ :

**ແມ່ຍິງໄດ້ຮັບສິດເທົ່າທຽມກັບຜູ້ຊາຍ ແຕ່ບໍ່ສາມາດນຳໃຊ້ສິດທິນັ້ນໄດ້ເທົ່າທຽມກັບ ຜູ້ຊາຍ.** ຕົວຢ່າງ ຍ້ອນມີວຽກເຮັດຫລາຍໂພດ, ເມື່ອຍ ແລ້ວ ບໍ່ສົນໃຈຢາກຮຽນໜັງສື, ລົບລ້າງການກືກໜັງສືບໍ່ໄດ້.

**ແມ່ຍິງ ຍັງມີວຽກເຮັດຫລາຍໂພດ ແລະ ຜູ້ຊາຍບໍ່ຊ່ວຍຫລາຍ; ບໍ່ມີວິທີການປ່ຽນແປງ :**

- ແມ່ຍິງບອກວ່າມີວຽກການຜລິດຫລາຍຂຶ້ນຍ້ອນການປ່ຽນແປງລະບົບການຈັດຕັ້ງການຜລິດ, ຜູ້ຊາຍກໍ່ຊ້ຳພັດມີວຽກລວມບ້ານຫລາຍຂຶ້ນຕື່ມອີກ (ວຽກປົກຄອງ, ວຽກແຜນງານ, ວຽກອື່ນໆອີກ). ໃນທີ່ສຸດແມ່ຍິງ ຕ້ອງເຮັດວຽກການຜລິດໂດຍລຳພັງ, ບໍ່ມີ ຜູ້ຊາຍ ຊ່ວຍ, ເພາະມີປະຊຸມ (ວຽກລວມ) ຫລາຍໂພດ.

"ແມ່ຍິງເວົ້າວ່າ ຜູ້ຊາຍມີແຕ່ໄປປະຊຸມ, ບໍ່ໄດ້ຢູ່ໄດ້ກິນຫຍັງ, ແລະ ຂີ້ຄ້ານບໍ່ຢາກຊ່ວຍຄອບຄົວ"
"ຜູ້ຊາຍບອກວ່າ ແມ່ຍິງ ບໍ່ເຂົ້າໃຈເລື່ອງພັດທະນາ, ມີແຕ່ຈົ່ມໃຫ້ຜົວວ່າໄປປະຊຸມຕະຫລອດ, ບໍ່ເຮັດວຽກຊ່ວຍຄອບຄົວ"

**ການອອກໃບຕາດິນ :**

**ແມ່ຍິງຖືກຕັດສິດອອກ ໃນການນຳໃຊ້ ທີ່ດິນ , ແລະ ການມີດິນມູນ (ຂອງ ຜົວ ແລະ ເມັຍ)**

ໃບຕາດິນ ລະບຸ ແຕ່ຊື່ຜົວເປັນເຈົ້າຂອງ, ເຖິງຈະມີຊື່ເມັຽໃນໃບຕາດິນ ແຕ່ກໍເປັນພຽງຊື່ໃນ ຖານະຜູ້ເປັນພັນລະຍາ, ບໍ່ແມ່ນຜູ້ຮ່ວມເປັນເຈົ້າຂອງ. ແມ່ຍິງ (ເມັຽ) ເປັນຜູ້ເຮັດວຽກການຜລິດຢູ່ ຕອນດິນ ແລະ ບຸກເບີກປັບປຸງດິນຮ່ວມກັບຜູ້ຊາຍ (ເຮັດຫຼາຍກວ່າຊາ້) ເຂົາເຈົ້າຕ້ອງມີສິດຮ່ວມກັບຜູ້ຊາຍ (ຜົວ) ໃນການເປັນເຈົ້າກຳມະສິດນຳໃຊ້ທີ່ດິນ.

ຢູ່ບ້ານໜຶ່ງ ບ່ອນໄປປະເມີນ ເຫັນວ່າ ຕອນດິນ ບ່ອນເປັນມູນ ຂອງ ເມັຽ ກໍບໍ່ໄດ້ ລະບຸໄວ້ ຈະແຈ້ງ ໃນໃບຕາດິນ; ແລ້ວ ວັນທີ ອອກໃບຕາດິນ ຊຳ້ພັດ ແມ່ນເວລາຫລາຍ ປີ ຫລັງຈາກ ການ ສ້າງຄອບຄົວຂອງລາວ. ກໍລະນີແບບນີ້ອາດຈະເປັນສາເຫດໃຫ້ມີການເອົາປຽບກັນ ລະຫວ່າງ ຜົວ ແລະ ເມັຽ ໄດ້.

**ການອອກຊື່ຜູ້ເປັນເຈົ້າຂອງປຶ້ມສະມະໂນຄົວ : ແມ່ຍິງຖືກກີດກັ້ນ**

ປຶ້ມສຳມະໂນຄົວ ອອກແຕ່ຊື່ຜົວເປັນເຈົ້າຂອງປຶ້ມ. ຄວນເຂົ້າໃຈວ່າ ມີ 2 ຄົນ ຈຶ່ງເປັນຄອບຄົວໄດ້. ຊື່ຂອງເມັຽ ຄວນ ຖືກລະບຸໄວ້ໃນນາມເປັນເຈົ້າຂອງອີກຜູ້ໜຶ່ງ.

ປຶ້ມຄອບຄົວທີ່ເປັນສະມາຊິກທະນາຄານບ້ານ : ແມ່ຍິງ ຖືກກີດກັ້ນ

ປຶ້ມຄອບຄົວທີ່ເປັນສະມາຊິກທະນາຄານບ້ານ ອອກຊື່ ຜົວ, ຢູ່ຫລາຍບ້ານສ່ວນໃຫຍ່, ພວກແມ່ຍິງບອກວ່າ ເວລາ ເຂົາເຈົ້າຕ້ອງການໃຊ້ ກໍໃຊ້ໄດ້ ເພາະ ໝົດບ້ານຮູ້ວ່າ ໃຜເປັນ ເມັຽ ຂອງໃຜ. ການຮັບຮູ້ ບົດບາດຂອງແມ່ຍິງ (ເປັນເມັຽ) ທີ່ສັງຄົມຍັ້ງຢືນນັ້ນ ຈຳເປັນຕ້ອງຮັບຮູ້ ດ້ວຍກົດໝາຍ ເພື່ອ ບົ່ງບອກ ສາຍພົວພັນ ທີ່ສະເໝີພາບກັນ ລະຫວ່າງ ຜົວ ແລະ ເມັຽ.

**ບົດບາດ ຂອງ ແມ່ຍິງ ຖືກ ຕີຖອຍ ອີກຫລາຍກວ່າເກົ່າ**

ຄະນະທະນາຄານບ້ານ, ສ່ວນໃຫຍ່, ມີ ແມ່ຍິງ ພຽງ 1 ຫາ 2 ຄົນ ຕໍ່ຄະນະ ທີ່ມີ ເຖິງ 5 ຫາ 8 ຄົນ. ສາເຫດ ຍ້ອນ ມີການແນະນຳ ໃຫ້ຊາວບ້ານ ຄັດເລືອກແມ່ຍິງ ດ້ວຍ ການຖືເອົາ ຄວາມຮູ້ໜັງສື ເປັນຫລັກ, ແທນທີ່ ຈະແນະນຳ ໃຫ້ ເລືອກເອົາແມ່ຍິງ ທີ່ ສາມາດນຳພາ ໄດ້ (ໂດຍຈັດໃຫ້ຜູ້ອ່ານໄດ້ຂຽນເປັນມາເປັນຜູ້ຊ່ວຍວຽກ).

## 3.2. ຂໍ້ສັງເກດ ກ່ຽວກັບ ພວກຜູ້ໃຫ້ການບໍລິການສັງຄົມຢູ່ຂັ້ນບ້ານ

**ຂະແໜງການກະສິກຳຂັ້ນເມືອງ : ແມ່ຍິງ ບໍ່ໄດ້ຮັບ ວິທີການບໍລິການ ທີ່ເໝາະສົມ ຈາກແຜນງານ**

- ມີ ພະນັກງານເປັນແມ່ຍິງ ທີ່ ເຮັດວຽກສົ່ງເສີມ ການປູກຝັງ ລ້ຽງສັດ ແລະ ປ່າໄມ້ ຢູ່ ຂັ້ນເມືອງ ພຽງໜ້ອຍດຽວ. ມີແມ່ຍິງຂັ້ນບ້ານໜ້ອຍຄົນ ໄດ້ ເຂົ້າຮ່ວມຮຽນຮູ້ຈາກພະນັກງານສົ່ງເສີມ.

- ພະນັກງານ ປ່າໄມ້ ບໍ່ມີແມ່ຍິງ, ສ່ວນໃຫຍ່ທີ່ສຸດ, ແລະ ແມ່ຍິງຂັ້ນບ້ານ ກໍບໍ່ໄດ້ເຂົ້າຮ່ວມຕັດສິນໃຈກັບຜູ້ຊາຍ ເວລາ ດຳເນີນຂັ້ນຕອນ ວຽກການແບ່ງດິນແບ່ງປ່າ.

- ພະນັກງານສັດຕະວະແພດ ຝຶກ ໃຫ້ ພຽງ 1 ຄົນ ຕໍ່ບ້ານ ໃຫ້ເປັນ ສັດຕະວະແພດບ້ານ, ເຊິ່ງ ບໍ່ແມ່ນ ແມ່ຍິງຊ້ຳ, ແລະ ສັດຕະວະແພດບ້ານກໍແນໃສ່ ສັດໃຫຍ່ ຫລາຍກວ່າ.

- <u>ເວລາ ຈັດຝຶກອົບຮົມ</u> ກໍບອກໃຫ້ ຫົວໜ້າຄອບຄົວ ມາຮ່ວມ;  ຫລື ຈັດອົບຮົມ ໃນເວລາ ທີ່ ແມ່ຍິງ ບໍ່ສາມາດ ມາຮ່ວມໄດ້; ໃຊ້ເຕັກນິກ ການສື່ສານ ໃນເວລາປະຊຸມ ແບບ ແມ່ຍິງ ຮັບບໍ່ໄດ້, ເຮັດໃຫ້ແມ່ຍິງ ບໍ່ສົນໃຈຢາກຮ່ວມນຳ.

- ເວລາ <u>ຈັດປະຊຸມ</u> ແມ່ຍິງສາມາດມາຮ່ວມໄດ້ໜ້ອຍຄົນ, ຍ້ອນຫລາຍສາເຫດ : ແມ່ຍິງບໍ່ມີເວລາ, ບໍ່ໄດ້ພາສາກາງ, ຍ້ອນບອກໃຫ້ຕາງໜ້າຄອບຄົວມາ ເຊິ່ງ ໂດຍປົກກະຕິ ແມ່ນຜູ້ຊາຍຕາງໜ້າຄອບຄົວ, ເສັຽເວລານັ່ງຖ້າກ່ອນເລີ່ມປະຊຸມດົນໂພດ (ກັບໄປເຮັດວຽກຕົນເອງດີກວ່າ), ໃຊ້ເວລາເວົ້າຫລາຍເລື້ອງໂພດຈີ່ບໍ່ໄດ້ໝົດ (ເສັຽເວລາ, ໄປເຮັດການຜລິດດີກວ່າ), ແກ່ຍາວເວລາປະຊຸມດົນໂພດ ບໍ່ຈ້ອນເວົ້າແຕ່ເນື້ອໃນຕົ້ນຕໍ (ເສັຽເວລາ ໄປເຮັດໄຮ່ດີກວ່າ).

- ຈັດຕັ້ງການປະຊຸມກັບກຸ່ມແມ່ຍິງສະເພາະ ໃນເວລາ<u> ເຮັດກິດຈະກຳການວາງແຜນພັດທະນາບ້ານ</u> ໂດຍຈັດໃຫ້ມີ ກຸ່ມແມ່ຍິງສະເໜີກິດຈະກຳຂອງແມ່ຍິງສະເພາະ; <u>**ແຕ່**</u> ບໍ່ເຫັນ ວ່າແຜນງານ ໄດ້ມີການຕິດຕາມດູແລ ແລະ ລາຍງານ ວ່າ ມີກິດຈະກຳໃດແດ່ຂອງແມ່ຍິງ ໄດ້ຖືກນຳເຂົ້າໃນແຜນການ, ແລະ ກິດຈະກຳໃດແດ່ ທີ່ຖືກຕັດອອກ ແລະ ຍ້ອນຫຍັງ, ແລະ ຈະ ພິຈາລະນາ ຕໍ່ແນວໃດ; ຫລື ແມ່ຍິງ ມີ ກິດຈະກຳພິເສດສະເພາະ ອັນໃດ ທີ່ສະເໜີ ແລະ ມີຫຍັງ ທີ່ເປັນໜ້າຮຽນຮູ້ ນຳເຂົາເຈົ້າ.

- ຈັດການຝຶກອົບຮົມ ຫລື ຈັດປະຊຸມ ຢູ່ບ້ານໃຫຍ່, ແມ່ຍິງຢູ່ບ້ານນ້ອຍ (ຄຸ້ມນ້ອຍ) ທີ່ຢູ່ໄກ (ເປັນຫລາຍກິໂລແມັດຂຶ້ນເນີອ) ບໍ່ສາມາດມາຮ່ວມປະຊຸມໄດ້ (ມາໄດ້ໜ້ອຍຄົນ) ເພາະຕ້ອງໃຊ້ເວລາຍ່າງ ໄປບ້ານໃຫຍ່ພຸ້ນ.

- <u>ການລາຍງານ</u> : ຂະແໜງການວິຊາການທັງຫລາຍ ບໍ່ໄດ້ລາຍງານແບບເປັນໄປໃນຕົວໂລດ ( ແບບອັດຕະໂນມັດ) ກ່ຽວກັບ ການໄດ້ຮັບຜົນປະໂຫຍດຂອງແມ່ຍິງ / ການເຂົ້າຮ່ວມຂອງແມ່ຍິງໃນວຽກຂອງແຜນງານ (ລວມທັງເວລາຄະນະບ້ານລາຍງານກໍຄືກັນ).

- ການສຶກສານອກລະບົບ :

ມີການບໍລິການໃຫ້ການສຶກສາແກ່ແມ່ຍິງ, ມີການລະດົມໃຫ້ແມ່ຍິງຮຽນໜັງສື, ແຕ່ສ່ວນຫລາຍ, ແມ່ຍິງບໍ່ມາຮ່ວມຮັບເອົາການບໍລິການ. ບາງທີ ຄວນມີ ການຈັດເປັນຫ້ອງສະເພາະ ຍິງ, ຊາຍ; ຫລັກສູດ ບາງທີຕ້ອງອອກແບບ ໃຫ້ສອດຄ່ອງ ຕາມຄວາມຕ້ອງການໃຊ້ຄວາມຮູ້ສະເພາະ ແມ່ຍິງ, ຕົວຢ່າງ:ແມ່ຍິງ ອາດຮຽນໄດ້ໄວກວ່າ ຖ້າສອນ ນັບເງິນ, ໄລ່ເລກ ດ້ວຍ ວັດຖຸ ກ່ອນ ແທນທີ່ຈະຮຽນຕົວເລກໂລດ, ສອນແຕ່ໂຕໜັງສື ທີ່ແມ່ຍິງ ຈຳເປັນໃຊ້ກ່ອນ, ໃຊ້ຕົວໜັງສືທີ່ໃກ້ກັບກິດຈະກຳຂອງແມ່ຍິງ, ອື່ນໆ.

ເວລາ ຈັດຫລັກສູດການສອນ (ໄລຍະເວລາຂອງຫລັກສູດ) ສຳລັບ ແມ່ຍິງ ແລະ ຜູ້ຊາຍ ກໍອາດຕ່າງກັນ ເພາະແມ່ຍິງບໍ່ມີເວລາວ່າງໃນຍາມດຽວກັນກັບຜູ້ຊາຍ, ແມ່ຍິງ ອາດຈະບໍ່ສາມາດມີ ເວລາຮຽນໄດ້ຕະຫລອດ ປີການສຶກສາ, ແຕ່ອາດຈະມີເວລາຮຽນໄດ້ປີ ລະ 3 ຫາ 4 ເດືອນ.

ຫ້ອງຮຽນສຳລັບແມ່ຍິງ ຄວນຮັບເອົາທັງ ແມ່ຍິງໃຫຍ່ ແລະ ແມ່ຍິງໜຸ່ມນ້ອຍຮຽນປົນກັນ, ຕົວຢ່າງ : ແມ່ຍິງໜຸ່ມຜູ້ທຸກຍາກບໍ່ສາມາດໄປຮຽນເຕັມເວລາຢູ່ໂຮງຮຽນໄດ້ເພາະຕ້ອງໄປເຮັດໄຮ່ຊ່ວຍແມ່. *ຢູ່ບ້ານໜຶ່ງບ່ອນໄປ ຢ້ຽມຢາມ ແມ່ຍິງຄົນໜຶ່ງເວົ້າດ້ວຍຄວາມໂສກເສົ້າວ່າ ລາວຈຳເປັນຕ້ອງໃຫ້ລູກສາວອອກໂຮງຮຽນ ຕອນ ຮຽນຈົບ ປ.5, ທັງໆທີ່ລາວເອງກໍຢາກໃຫ້ລູກສາວຮຽນຕໍ່ມັດທະຍົມ ແລະ ລູກສາວ ກໍສຸດຢາກຮຽນຕໍ່ (ຈົນຮ້ອງໄຫ້); ແຕ່ກໍຈຳເປັນເພາະຄອບຄົວບໍ່ມີແຮງງານເຮັດໄຮ່, ຜົວຂອງລາວຕາຍແລ້ວ, ມີ ລູກຊາຍຜູ້ດຽວ ແລະ ລາວກໍໄດ້ໃຫ້ລູກຊາຍຮຽນຕໍ່ມັດທະຍົມ.*

- ນ້ຳສະອາດ ແລະ ອະນາໄມ :

ເປັນກິດຈະກຳທີ່ໃຫ້ຜົນປະໂຫຍດໂດຍກົງແກ່ແມ່ຍິງ, ເປັນເລື້ອງທີ່ແມ່ຍິງຕິດພັນໂດຍກົງກັບການໃຊ້ນ້ຳ ແລະ ອະນາໄມຫລາຍກວ່າຜູ້ຊາຍ, ແຕ່ ເວລາຈັດຕັ້ງຄະນະກຳມະການ ນ້ຳ ແລະ ອະນາໄມ ຊ້ຳພັດບໍ່ແມ່ນແມ່ຍິງເປັນຄະນະ ຫລື ຫົວໜ້າຄະນະ, ເຫັນແຕ່ເປັນຜູ້ເກັບເງິນຄ່າໃຊ້ນ້ຳ ຢູ່ບາງບ້ານ.

ມີການຈັດສົ່ງທີວວິດ ເຖິງບ້ານ, ແຕ່ທີວວິດຈັດສົ່ງຮອດແຕ່ບ້ານໃຫຍ່, ພວກແມ່ຍິງ ຢູ່ຄຸ້ມນ້ອຍຊ້ຳພັດຕ້ອງຍ່າງ 30 ຫາ 40 ນາທີ ມາແບກທີວວິດເມືອບ້ານຂອງຕົນເອງ. (ບ້ານ ນາບາໂລ່ນ).

- ຄວາມທຸກຈົນຂອງແມ່ຍິງ :

ມີຄວາມສົນໃຈໜ້ອຍຫລາຍ ຕໍ່ບັນຫານີ້; ຄອບຄົວທຸກຍາກບໍ່ມີເວລາເຂົ້າຮ່ວມອົບຮົມ ແລະ ບໍ່ມີເງື່ອນໄຂພິເສດ ຫລື ຖົມຂຸມເງິນຍືມ ໃດໜຶ່ງ ໃຫ້ເຂົາເຈົ້າ, ທັງໝົດ ນີ້ກໍເຫັນວ່າ ແມ່ຍິງທຸກຖືກກີດກັ້ນ, ເພາະແມ່ຍິງ ທຸກຈົນ ແລະ ທຸກແທ້ໆ ບໍ່ມີໂອກາດ ນຳໃຊ້ສິດທິ ທາງເສດຖະກິດ ແລະ ສັງຄົມ ໃນການຮັບຜົນປະໂຫຍດຈາກ ການປະຕິບັດແຜນງານ; ທັງທີ່ ຈຳນວນ ຂອງ ພວກແມ່ຍິງ ກຸ່ມ ນີ້ ມີ ພຽງສ່ວນໜ້ອຍ, ເຊິ່ງ ຄົນສ່ວນໃຫຍ່ ໃນແຕ່ລະບ້ານສາມາດພໍທີ່ຈະຊ່ວຍເຫລືອເຂົາເຈົ້າໄດ້.

- ສະຫະພັນແມ່ຍິງ :

ສະຫະພັນ ແມ່ຍິງ ເປັນ ພຽງຂະແໜງການດຽວ ທີ່ພົວພັນ ກັບ ແມ່ຍິງ ຢູ່ຂັ້ນບ້ານເປັນປົກກະຕິ ກວ່າ ຂະແໜງການອື່ນໆ; ແຕ່ກໍບໍ່ເນັ້ນໜັກຫລາຍປານໃດໃນເລື້ອງ ສິດທິ ຂອງແມ່ຍິງ ແລະ ເລື້ອງການສ້າງຄວາມເຂັ້ມແຂງຂອງແມ່ຍິງ; ບໍ່ບໍລິການ ການຝຶກອົບຮົມທີ່ນໍາໃຊ້ປະຕິບັດຕົວຈິງ ໄດ້ຫລາຍປານໃດ; ບໍ່ຕິດແທດກັບແມ່ຍິງຊົນເຜົ່າຫລາຍເທົ່າທີ່ຄວນ; ມີພະນັກງານຂອງຕົນ ໜ້ອຍຄົນ ແລະ ມີປະ ສິດທິຜົນໜ້ອຍ.

ສະຫະພັນ ແມ່ຍິງ ບໍ່ໄດ້ເຮັດວຽກດູແລຕິດຕາມ (monitoring) ເລື້ອງທີ່ວ່າ ແມ່ຍິງ ໄດ້ຮັບຜົນປະໂຫຍດ ຈາກແຜນງານ ແລະ ຈາກ ພາກສ່ວນ ອື່ນໆ ແນວໃດ; ບໍ່ໄດ້ປັບປຸງການຝຶກແອບໃຫ້ແມ່ຍິງຮູ້ ແລະ ສາມາດ ໃຊ້ສິດທິ ຂອງເຂົາເຈົ້າ, ຕົວຢ່າງ : ຕໍ່ລອງຂາຍຜົນຜລິດຂອງເຂົາເຈົ້າຕາມລາຄາເໝາະສົມທົ່ວໄປ, ຫລື ຂໍຂາຍຜົນຜລິດທີ່ມີເພື່ອຫາເງິນໃຫ້ຄອບຄົວ, ອື່ນໆ.

- ສະຫະພັນແມ່ຍິງ ມີຮູບພາບ ໃຊ້ເປັນເຄື່ອງມື ອະທິບາຍ ສາຍພົວພັນ ລະ ຫວ່າງ ຍິງ ຊາຍ ໃນການເຮັດວຽກໃນຄອບຄົວ; ຮູບພາບບອກວ່າ ແມ່ຍິງ ມີສິດ ໃນການໃຫ້ຄໍາຄິດເຫັນ; ຮູບພາບບອກເຖິງ ສິດທິມະນຸດຂອງແມ່ຍິງ ທີ່ບໍ່ມີໃຜສາມາດ ທໍາລາຍ ຫລື ທຸບຕີໄດ້; ຮູບພາບ ແມ່ຍິງ ມີສິດໃນການເລືອກຕັ້ງ, ມີສິດເປັນຂັ້ນນໍາໄດ້.

ແຕ່ປະກົດວ່າ ພາຍຫລັງທີ່ມີການອະທິບາຍສິດທິເຫົ່ລານັ້ນແລ້ວ, ບໍ່ມີ ການປະຕິບັດໃດໜຶ່ງເພື່ອໃຫ້ແມ່ຍິງ ໄດ້ແອບໃຊ້ສິດທິ ຂອງ ເຂົາເຈົ້າ, ເຊັ່ນ : ມີກຸ່ມຜລິດຂອງແມ່ຍິງທີ່ຈັດຕັ້ງນໍາພາກັນເອງ ເພື່ອເປັນເວທີຂອງເຂົາເຈົ້າເອງ ທີ່ຈະແອບເຮັດວຽກບໍລິຫານ ນໍາພາກຸ່ມ, ເຮັດການ ຕັດສິນໃຈ, ປົກປ້ອງຜົນປະໂຫຍດຂອງແມ່ຍິງທົ່ວໄປ, ຮູ້ຈັດຕັ້ງຊ່ວຍເຫລືອກັນ; ຖອດຖອນບົດ ຮຽນ ແລະ ປັບປຸງ ຄວາມສາມາດຂອງເຂົາເຈົ້າ ໄປເລື້ອຍໆ. ບໍ່ມີການລະດົມ (ບໍ່ມີຂະບວນ ການ) ໃຫ້ຜູ້ຊາຍຊ່ວຍເຮັດວຽກເມັຽຫລາຍຂຶ້ນ.

## 4. ການເອົາ ບົດບາດ ຍິງ ຊາຍ ເປັນ ກະແສ ຫລັກ ໃນແຜນງານ RLIP-RDMA

ບົດລາຍງານການສໍາຫລວດ ຂອງ IFAD, ໃບສະເໜີໃຫ້ການຊ່ວຍເຫລືອຂອງ GTZ, ເອກະສານ ແນວຄວາມຄິດ ວິທີການພັດທະນາຂອງ BMZ (ກະຊວງການຕ່າງປະເທດ ແລະ ການ ຮ່ວມມືຂອງປະເທດເຢັຽລະມັນ) ໄດ້ໃຫ້ຄວາມສໍາຄັນສູງ ຕໍ່ຄວາມຈໍາເປັນຕ້ອງເອົາເລື້ອງ ບົດບາດ ຍິງຊາຍ ເຂົ້າໃນຂະແໜງການທັງຫລາຍ ແລະ ເອົາເປັນກະແສຫລັກ, ທັງນີ້ ເພື່ອຮັບປະກັນໃຫ້ ແມ່ຍິງ ໄດ້ຮັບຜົນປະໂຫຍດ ຈາກແຜນງານ ຢ່າງເທົ່າທຽມກັນ ຄືກັບຜູ້ຊາຍ.

ໜ້າວຽກ ຂອງທີ່ ປຶກສາ ທັງສອງ ກໍເນັ້ນໜັກໄວ້ວ່າ ແມ່ຍິງຕ້ອງໄດ້ຮັບຜົນປະໂຫຍດ ຈາກແຜນງານ ຢ່າງເທົ່າທຽມກັນ ຄືກັບຜູ້ຊາຍ.

ມີການລະບຸໃນເອກະສານຢູ່ບອ່ນ( Output. 0.2.2.2) ວ່າ " ບົດບາດຍິງ-ຊາຍຕອ້ງມີຢູ່ໃນທຸກກິດຈະກຳທັງໝົດທີ່ກ່ຽວຂອ້ງຢູ່ຂັ້ນບ້ານ, ເມືອງ, ແຂວງ ແລະ ຂັ້ນແຜນງານ. ມີຕົວຊີ້ບອກວ່າ ຫລາຍກວ່າ 70% ຂອງກິດຈະກຳທີ່ວາງແຜນຕ້ອງ ເອົາເລື່ອງບົດບາດ ຍິງ- ຊາຍ ໃສ່ເປັນກະແສຫລັກ".

**ແຕ່ວ່າ :** ການກຳນົດ ຈຸດປະສົງລວມ ແລະ ເປົ້າໝາຍ ແລະ ຕົວຊີ້ບອກທັງຫລາຍ ນັ້ນ ຊ້ຳພັດບໍ່ໃຈ້ແຍກຕາມເພດ (ໝາຍຄວາມວ່າ : ແຜນງານບໍ່ໄດ້ຄຳນຶງຮອດ 70 % ເຖິງເລື້ອງບົດບາດ ຍິງ ຊາຍ).

- ມີໜ້ອຍຂະແໜງການທີ່ສຸດ ທີ່ມີຕົວຊີ້ບອກນີ້ ເພື່ອໃຈ້ແຍກເປົ້າໝາຍ ແບບມີບົດບາດຍິງ- ຊາຍ ນອນຢູ່ໃນນັ້ນ. **ໝາຍຄວາມວ່າ** 70% ຂອງກິດຈະກຳທັງໝົດບໍ່ໄດ້ເອົາໃຈໃສ່ນຳເອົາເລື່ອງບົດບາດຍິງ-ຊາຍເຂົ້າໄປ.
- ມີຂະແໜງການສຶກສາ, ມີຕົວຊີ້ບອກ ວ່າເພີ້ມການຮູ້ໜັງສືຂອງແມ່ຍິງ ຂື້ນ 60% ເຖິງປີ 2011 (30% ຂອງ ປີ 2008.)

**ດັ່ງນັ້ນ,** ຈຶ່ງເຫັນວ່າ ແຜນງານ ບໍ່ມີລະບົບເກາະກ່າຍກັນ ເວລາກຳນົດຕົວຊີ້ບອກ ໃນແງ່ຂອງ ເລື້ອງບົດບາດ ຍິງ-ຊາຍ. ຢູ່ບາງບ່ອນ ເຫັນຕົວເລກເປົ້າໝາຍ 70%, ບາງບ່ອນ 30 %, ບາງບ່ອນ 50 %.

- ໂດຍລວມ RLIP-RDMA ມີຕົວຊີ້ບອກ ການຫລຸດຜ່ອນຄວາມທຸກຈົນ, ແຕ່ບໍ່ສະທອ້ນໃຫ້ເຫັນແງ່ ບົດບາດ ຍິງ-ຊາຍ( ເຊັ່ນ : ມີ ຕົວຊີ້ບອກ ຊັບສິນບັດຂອງຄອບຄົວ (ທີ່ບໍ່ມີຕົວຊີ້ ບອກໜີ້ສິນຂອງຄອບຄົວຊ້ຳ / Internal benefits/ IB 1. 2.1. ແຕ່ບໍ່ມີຕົວຊີ້ບອກວ່າ ແມ່ ຍິງ ຫລື ຜູ້ຊາຍ ນຳໃຊ້ຊັບສິນບັດເທົ່າທຽມກັນແນວໃດ.
- ຂະແໜງການວິຊາການທັງຫລາຍ (ນອກຈາກ ການສຶກສາ) ບໍ່ໄດ້ຫລຽວເມອງເລື້ອງບົດບາດຍິງ-ຊາຍ; ບໍ່ມີທີ່ປຶກສາຄົນໃດໜຶ່ງມີໜ້າທີ່ງານ (Job description) ກ່ຽວກັບ ວຽກເລື້ອງບົດບາດ ຍິງ-ຊາຍ, ແມ່ນແຕ່ ທີ່ປຶກສາ ການພັດທະນາຊຸມຊົນ ກໍຄືກັນ, ນອກຈາກ ໜ້າທີ່ງານຂອງ ພະນັກງານຊຸມຊົນຂັ້ນເມືອງ.

- ຂໍ້ແນະນຳໃນເອກະສານການປະເມີນຜົນຂອງ UNOPS , ໃນເດືອນ ຕຸລາ 2006 ກໍ່ບໍ່ໄດ້ນຳຂຶ້ນມາພິຈາລະນາຈົນຮອດປັດຈຸບັນນີ້, ເຊັ່ນວ່າ: ແຕ່ລະຂະແໜງການວິຊາການ ແລະ

ຂັ້ນບໍລິຫານແຜນງານ ຄວນເອົາໃຈໃສ່ຢ່າງແຂງແຮງຕໍ່ ເລື່ອງບົດບາດ ຍິງ-ຊາຍ ແລະ ຄວນຖື ເອົາເລື່ອງນີ້ເປັນເລື່ອງພິເສດສະເພາະໃສ່ໃນບົດລາຍງານ.

- ບັນຫາເລື່ອງບົດບາດ ຍິງ-ຊາຍ ແລະ ຂໍ້ແນະນໍາໃຫ້ດໍາເນີການຕ່າງໆທີ່ເອກະສານ IFAD ກໍານົດໄວ້ ສໍາລັບ ເລື່ອງ ບົດບາດ ຍິງ-ຊາຍ ກໍ່ບໍ່ມີການປະຕິບັດຈົນຮອດປະຈຸບັນ.

- ມີແມ່ຍິງພຽງໜອ້ຍດຽວ ທີ່ມີຕໍາແໜ່ງຕັດສິນບັນຫາ ໃນແຜນງານ ( 2 ໃນຈໍານວນ 10 ທີ່ປຶກສາ) .

- ເບິ່ງຄືວ່າ, ຈະມີຄວາມອະທິບາຍທີ່ບໍ່ເວົ້າອອກມາ, ວ່າຍ້ອນບໍ່ມີ ຜູ້ຮັບຜິດຊອບສະເພາະເລື່ອງ ບົດບາດ ຍິງ-ຊາຍ, ຈຶ່ງບໍ່ມີການເອົາເລື່ອງ ບົດບາດ ຍິງ-ຊາຍ ເປັນກະແສຫລັກໃນວຽກງານຂອງ ແຜນງານທັງໝົດ.

- ພະນັກງານ, ສ່ວນໃຫຍ່ທີ່ສຸດ, ລວມທັງ ພະນັກງານຢູ່ຂັ້ນບໍລິຫານຂອງແຜນງານ, ມີຈິດສໍາ ນຶກ ຂັ້ນພື້ນຖານ ກ່ຽວກັບ ເລື່ອງບົດບາດ ຍິງ-ຊາຍ, ແຕ່ມີການປະຕິບັດເລື່ອງນີ້ ໜອ້ຍໃນວຽກຂອງ ແຜນງານ, ໂດຍສະເພາະວຽກງານດູແລຕິດຕາມເລື່ອງນີ້. (ມີພຽງໜ້ອຍດຽວຄື: ໃຫ້ແມ່ຍິງເຂົ້າ ຮວ່ມວາງແຜນພັດທະນາບ້ານ; ແມ່ຍິງເຂົ້າຮວ່ມໃນເວລາປະຊຸມເລື່ອງການຕະຫລາດ / ທຸລະ ກິດຂະໜາດນ້ອຍ, ຢູ່ຂັ້ນບ້ານ.)

- RLIP-RDMA ບໍ່ມີທິດເລັງໃສ່ ຫລຸດຜ່ອນຄວາມທຸກຈົນ, ທັງທີ່ມີການເອົາຂໍ້ມູນຄອບຄົວທຸກ, ທຸກແທ້ໆ ແລ້ວ; ຄວາມເມີນເສີຍນີ້ ເປັນການສ່ຽງທີ່ຈະເຮັດໃຫ້ມີ ຄວາມໂຕນກັນມີ ຫລາຍຂຶ້ນ ລະຫວ່າງ ກຸ່ມຄອບຄົວຮັ່ງມີ ແລະ ປານກາງ ກັບ ກຸ່ມພວກຄອບຄົວທຸກ ແລະ ທຸກແທ້ໆ. ອັນນີ້ ເປັນການບົ່ງບອກວ່າ ບັນຫາຂອງແມ່ຍິງທີ່ທຸກຍາກລໍາບາກ ບໍ່ຖືກຍົກຂຶ້ນ ມາເວົ້າກັນ, ເຮັດໃຫ້ ແມ່ຍິງພວກນີ້ຖືກຕັດອອກຈາກໂອກາດທີ່ຈະໄດ້ນໍາໃຊ້ສິດທິຂອງຕົນໃນການອອກສຽງ ກ່ຽວກັບ ເລື້ອງ (ເສດຖະກິດ, ສັງຄົມ, ວັດທະນະທໍາ).

- RLIP-RDMA ຍັງບໍ່ປະຕິບັດການຄົ້ນຄວ້າຫລັກການພື້ນຖານໃນສົນທິສັນຍາ ຊີດໍ CEDAW (ສົນທິສັນຍາ ວ່າດວ້ຍ ການລົບລ້າງ ທຸກຮູບແບບ ການຈໍາແນກຕໍ່ແມ່ຍິງ) ໂດຍສະເພາະເພື່ອໃຫ້ ສາມາດຮູ້ ແລະ ເຫັນໄດ້ວ່າມະນຸດແມ່ຍິງຖືກແບ່ງແຍກ, ກີດກັ້ນ, ຕັດອອກ ແລະ ຕີຖອຍແນວ ໃດ, ເພື່ອຈະສາມາດຄົ້ນຄ້ວາ ວິທີການ ທີ່ເໝາະສົມ ເພື່ອປະຕິບັດ.

- RLIP-RDMA ຂາດ ວິທີການເຮັດວຽກ ແບບເບິ່ງສິດທິມະນຸດ (ຍິງ ແລະ ຊາຍ) ເປັນພື້ນ ຖານ, ເຊິ່ງ ວິທີການແບບນີ້ ຈະຊ່ວຍ ປັບປຸງ ລະບົບການເຮັດວຽກ ທີ່ມີລັກສະນະ ການເຮັດວຽກ ແບບ ຮັບຮູ້ ບົດບາດຍິງ-ຊາຍ ແລະ ຫລຸດຜ່ອນຄວາມທຸກຈົນ.

## 5. ຂໍ້ສະຫລຸບລວມ

- ແມ່ຍິງຊົນເຜົ່າຜູ້ທຸກຍາກ ມີ 3 ແອກທີ່ກີດກັ້ນເຂົາເຈົ້າ:
  1. ເປັນແມ່ຍິງທີ່ເຮັດແຕ່ວຽກ ບໍ່ສາມາດເຂົ້າເຖິງ ການບໍລິການຂອງ ສັງຄົມໄດ້ຫລາຍ ຄືຜູ້ຊາຍ; ຂາດຂໍ້ມູນຂ່າວສານຈາກພາຍນອກເພື່ອພັດທະນາຕົນເອງ.
  2. ທຸກຍາກບໍ່ມີເງິນ, ບໍ່ສາມາດ ຮັບການ ບໍລິການ ຈາກ ສັງຄົມໄດ້ຫລາຍ .
  3. ເປັນແມ່ຍິງຊົນເຜົ່າ, ບໍ່ສາມາດສື່ສານພາສາກາງໄດ້ ແລະ ບໍ່ສາມາດເຂົ້າໃຈວັດທະນະ ທຳລວມທົ່ວໄປໃນສັງຄົມ, ຖືກຈຳກັດ ແລະ ກີດກັ້ນຫລາຍຢ່າງ. ອັນນີ້ເປັນການກີດກັ້ນແມ່ ຍິງຢ່າງໜັກໜ່ວງ.

- RLIP-RDMA ເບິ່ງເລື່ອງ ບົດບາດ ຍິງ-ຊາຍ ເປັນເລື່ອງ ຂອງແມ່ຍິງ; ບໍ່ເຂົ້າໃຈເບິ່ງເປັນເລື່ອງ ສິດທິ ຂອງແມ່ຍິງ ແລະ ເປັນເລື່ອງບັນຫາສັງຄົມ ຂອງສັງຄົມ; ແລະ ເຂົ້າໃຈວ່າເລື່ອງບົດບາດ ຍິງ-ຊາຍ ເປັນເລື່ອງຂອງສະຫະພັນແມ່ຍິງຝ່າຍດຽວ.

### ເພາະສະນັ້ນ:

- ຍ້ອນວິທີການເຮັດວຽກຂອງແຜນງານໃນປະຈຸບັນ ແລະ ນະໂຍບາຍທີ່ມີຢູ່ສຳລັບຂັ້ນບ້ານ, ລວມທັງທິດທາງຂອງສະຫະພັນແມ່ຍິງເມືອງທີ່ແນະນຳໃຫ້ແມ່ ຍິງຂັ້ນບ້ານ ນັ້ນ, ເຮັດໃຫ້ແມ່ຍິງ ບໍ່ມີໂອກາດຝຶກແອບ ການນຳໃຊ້ຄວາມອາດສາມາດ ແລະ ສິດທິ ຂອງເຂົາເຈົ້າ.

ວິທີການ ຂອງແຜນງານມີຄວາມຄາດຫວັງສູງໂພດ, ເຊັ່ນ ເວລາໃຫ້ແມ່ຍິງມາເປັນຄະນະກຳມະການ ຕ່າງໆຢູ່ຂັ້ນບ້ານ, ລວມທັງເວລາປະຊຸມທີ່ໃຫ້ຮ່ວມກັບຜູ້ຊາຍໂດຍກົງ, ແມ່ນ ຢາກ ໃຫ້ ແມ່ ຍິງ ເວົ້າໄດ້ ແລະ ເຮັດໄດ້ ຄືກັບ ຜູ້ຊາຍ, ເຊິ່ງມັນບໍ່ເໝາະສົມ ທີ່ຈະຫວັງ ສູງແບບ ນັ້ນ ເພາະແມ່ ຍິງ ບໍ່ເຄີຍໄດ້ຮັບໂອກາດແບບນັ້ນມາແຕ່ດົນນານແລ້ວ, ແລະ ຈະໃຫ້ເຂົາເຈົ້າ ສາມາດປ່ຽນ ໄດ້ ໂລດນັ້ນບໍ່ສາມາດເປັນໄປໄດ້.

ມີການນຳໃຊ້ວິທີແບບມີ “ ໂກຕາ“ ຈຳນວນແມ່ຍິງທີ່ລະບຸໄວ້ວ່າຕອ້ງເຂົ້າຮວ່ມເທົ່ານີ້ຄົນ ຫລື ຕອ້ງ ເປັນຄະນະກຳມະການຕ່າງໆ ເທົ່ານີ້ຄົນ (ຢ່າງໜ້ອຍ) ແຕ່ບໍ່ມີ ວິທີການ ເພື່ອສ້າງຄວາມເຂັ້ມແຂງໃຫ້ ແມ່ຍິງ.

## ຄວາມສ່ຽງ:

ວິທີການເຮັດວຽກຂອງແຜນງານທີ່ປະຕິບັດຢູ່ໃນປັດຈຸບັນມີແຕ່ຈະເຮັດໃຫ້ສະພາບການ ຂອງ ແມ່ຍິງຮ້າຍແຮງລົງຕື່ມອີກ, ຖ້າບໍ່ມີການປ່ຽນແປງດັດສົມຄວາມເຂົ້າໃຈຄືນໃໝ່ ກ່ຽວ ກັບ ເລື້ອງ ບົດບາດ ຍິງ-ຊາຍ.

- ຈົນຮອດດຽວນີ້, RLIP-RDMA ຍັງຖືວ່າ ເລື່ອງບົດບາດຍິງ-ຊາຍ ເປັນເລື່ອງ“ ປີ່ນອອ້ມ ” / ຖືກ ວາງໄວ້ຂ້າງນອກຂອງແຜນງານ, ແລະ ແມ່ນ ວຽກຂອງສະຫະພັນແມ່ຍິງເທົ່ານັ້ນ; ຄວນ ປ່ຽນ ແປງຄວາມເຂົ້າໃຈນີ້.

| |
|---|
| ***ຂໍ້ແນະນໍາອັນແຂງແຮງຂອງ ສະຫະປະຊາຊາດ ຄະນະກໍາມະການສົນທິສັນຍາ ຊີດໍ ປີ 2005, ລະບຸໄວ້ວ່າ*** :<br>“ຄະນະກໍາມະການ ມີຄວາມກັງວົນໃຈເປັນຢ່າງຍິ່ງ ກ່ຽວກັບ ໂຄງຮ່າງການຈັດຕັ້ງທີ່ບໍ່ ສອດຄ່ອງ (inadequate), ແລະ ກ່ຽວກັບ ການມີແຫລ່ງການເງິນ ຂອງ ຄະນະກໍາມະ ການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ (NCAW) ເພື່ອ ເຮັດໃຫ້ເລື້ອງບົດບາດ ຍິງ-ຊາຍ ເປັນກະແສຫລັກ ແລະ ເພື່ອໃຫ້ມີການປະຕິບັດ ນະໂຍບາຍທີ່ມີຄວາມສະ ເໝີພາບຂອງບົດບາດ ຍິງ-ຊາຍ; ກັງວົນໃຈ ເຊັ່ນດຽວກັນ ທີ່ມອບພັນທະໜັກໜ່ວງນີ້ ໃຫ້ ສະຫະພັນແມ່ຍິງ, ທີ່ເປັນພຽງອົງການຈັດຕັ້ງມະຫາຊົນທີ່ບໍ່ມີອໍານາດການຕັດສິນ ໃຈ.<br><br>ຄະນະກໍາມະການແນະນໍາໃຫ້ລັດພາຄີປັບປຸງກົນໄກແຫ່ງຊາດທີ່ສະໜອງບຸກຄະລາ ກອນທີ່ເໝາະສົມ ແລະ ແຫລ່ງການເງິນ ພ້ອມທັງ ສ້າງຕັ້ງກົນໄກທີ່ປັບປຸງ ເພື່ອເອົາ ບົດບາດ ຍິງ-ຊາຍ ເປັນກະແສຫລັກໃນທຸກກະຊວງ ແລະ ຢູ່ທຸກລະດັບ. ໃນຂະນະທີ່ ຮັບຮູ້ວຽກງານອັນສໍາຄັນຂອງແມ່ຍິງໃນການສ້າງຄວາມກ້າວໜ້າໃຫ້ຖານະຂອງ ແມ່ ຍິງ ນັ້ນ, ຄະນະກໍາມະການແນະນໍາໃຫ້ລັດພາຄີບໍ່ມອບພັນທະການປະຕິບັດສົນທິສັນ ຍາຂອງຕົນໃຫ້ແກ່ອົງການຈັດຕັ້ງມະຫາຊົນພຽງອົງການດຽວ. ຄະນະກໍາມະການແນະ ນໍາໃຫ້ລັດພາຄີສ້າງຕັ້ງພາກສ່ວນຮັບຜິດຊອບຊີ້ນໍາຄວບຄຸມ (supervisory) ຢູ່ທຸກຂັ້ນ ເພື່ອດູແລຕິດຕາມການປະຕິບັດແຜນການຍຸດທະສາດແຫ່ງຊາດສໍາລັບຄວາມກ້າວໜ້າ ຂອງແມ່ຍິງ, ສໍາລັບ ໄລຍະ ປີ 2005 ຫາປີ 2010.” |

- ຕາບໃດ ທີ່ເລື້ອງບົດບາດ ຍິງ-ຊາຍ ຍັງບໍ່ເປັນກະແສຫລັກ, ແຜນງານກໍຈະບໍ່ບັນລຸເປົ້າໝາຍ (ຈຸດປະສົງລວມຂອງຕົນ). ດັ່ງນັ້ນ, ພວກແມ່ຍິງຊົນເຜົ່າຄວນໄດ້ຮັບການແນະນໍາຝຶກແອບໃຊ້ສິດ ທິຂອງເຂົາເຈົ້າ ກ່ຽວກັບ ວິທີການເຮັດວຽກຂອງນະໂຍບາຍຕ່າງໆທີ່ມີສໍາລັບເຂົາເຈົ້າ, ລວມທັງ

ການແນະນຳຈາກສະຫະພັນແມ່ຍິງຂັ້ນເມືອງ. ເຂົາເຈົ້າຄວນມີກິດຈະກຳທີ່ເປັນຂອງເຂົາເຈົ້າສະເພາະ ເພື່ອຈະສ້າງຄວາມຊຳນານ ແລະ ຄວາມໝັ້ນໃຈຂອງເຂົາເຈົ້າ.

- ບໍ່ຄວນສ້າງຄວາມຫວັງໄວ້ສູງວ່າແມ່ຍິງຈະສາມາດເຮັດໄດ້ຄືຜູ້ຊາຍໂລດໃນວິທີການແບບມີ "ໂກຕາ" ເປັນຈຳນວນແມ່ຍິງທີ່ຕ້ອງເຂົ້າຮ່ວມແທນທີ່ຈະເບິ່ງຕາມຄວາມສາມາດນຳພາຂອງ ແມ່ຍິງ.

- ມັນເປັນແນວຄິດທີ່ດີທີ່ RLIP-RDMA ຈະມີທີ່ປຶກສາຈາກອົງການ DED ມາເຮັດເລື່ອງບົດບາດຍິງ-ຊາຍຂອງແຜນງານ. ແຕ່ວ່າໄລຍະເວລາພຽງ 8-10 ເດືອນ ນັ້ນສັ້ນໂພດເພື່ອຈະຊ່ວຍປັບປຸງໃຫ້ແມ່ຍິງໄດ້ຮັບຜົນປະໂຫຍດຢ່າງແທ້ຈິງ ແລະ ໄດ້ຮັບຜົນກະທົບທີ່ເປັນທຳ.

# 6. ຂໍ້ແນະນຳ

## 6.1. ຂໍ້ແນະນຳລວມ ສຳລັບ RLIP-RDMA

1. RLIP-RDMA ຈຳເປັນຕ້ອງມີທິດທາງເອົາໃຈໃສ່ໃຫ້ຫລາຍເພື່ອເຮັດວຽກແບບເປັນ ວິທີການ ທີ່ອີງໃສ່ ສິດທິ ຂອງແມ່ຍິງ ແລະ ຜູ້ຊາຍ ເປັນພື້ນຖານ ( rights-based) ໂດຍອີງໃສ່ ຫລັກການພື້ນຖານຂອງ CEDAW, ທີ່ລັດຖະບານລາວໄດ້ເຊັນຮັບເປັນລັດພາຄີ; ແລະ ໄດ້ສົນຕະຍາບັນ ສົນທິ ສັນຍາ CEDAW ແລະ ພັດທະນາເຂົ້າໃນກົດໝາຍແລ້ວຈຳນວນໜຶ່ງ.

2. RLIP-RDMA ຈຳເປັນຕ້ອງມີຄວາມມຸ່ງໝັ້ນ (ຖືເປັນພັນທະ - commitment ) ຂອງຕົນ ທີ່ຈະ ເອົາເລື່ອງ ບົດບາດ ຍິງ-ຊາຍ ເປັນກະແສຫລັກ ໃນວຽກທັງໝົດຂອງແຜນງານ. ແຜນງານຄວນຝຶກແອບປະຕິບັດຄວາມມຸ່ງໝັ້ນນີ້ຂອງຕົນນັບແຕ່ເວລານີ້ໂລດ ( ໂດຍບໍ່ລໍ ຖ້າໃຫ້ມີການວ່າຈ້າງ ທີ່ປຶກ ສາຈາກ DED ເປັນທີ່ປຶກສາໄລຍະສັ້ນ ຫລື ເປັນທີ່ປຶກສາໄລຍະຍາວ ເສຍກ່ອນ.)

3. ຖ້າເປັນໄປໄດ້, RLIP-RDMA ຕ້ອງວ່າຈ້າງຄົນທ້ອງຖິ່ນ, ໂດຍສະເພາະແມ່ຍິງຊົນເຜົ່າຈາກທ້ອງ ຖິ່ນເຂດເປົ້າໝາຍຂອງແຜນງານ, ທີ່ສາມາດເວົ້າພາສາລາວໄດ້, ທຳອິດໃຫ້ເປັນພະນັກງານຊ່ວຍພະນັກງານຊຸມຊົນ (ແລ້ວເລື່ອນຊັ້ນເປັນພະນັກງານຊຸມຊົນ) ເພື່ອສ້າງຄວາມສາມາດໃຫ້ທ້ອງຖິ່ນ, ເພື່ອຄວາມຍືນຍົງສຳລັບການພັດທະນາ ແລະ ສຳລັບ ການລິເລີ່ມການນຳເອົາເລື້ອງຂຶ້ນມາສະເໜີ ໃນໂຄງການເພື່ອຫາທາງແກ້ໃຂ ກ່ຽວກັບ ຄວາມບໍ່ສະເໝີພາບຂອງຊົນເຜົ່າ ແລະ ຂອງບົດບາດ ຍິງ-ຊາຍ.

4. RLIP-RDMA ຄວນເຮັດວຽກສົ່ງເສີມຕາມວິທີການສົ່ງເສີມແບບ LEA ທີ່ກະຊວງກະສິກຳໄດ້ອະນຸມັດໃຊ້ທົ່ວປະເທດແລ້ວ. ມັນເປັນວິທີການສົ່ງເສີມທີ່ສາມາດເຮັດວຽກແບບເປັນກຸ່ມຜລິດຂອງ ແມ່ຍິງ, ຂອງຜູ້ຊາຍ, ແລະ ຂອງຄົນທຸກ ແບບແຍກກັນໄດ້.

### 6.1.1. ຂໍ້ແນະນຳ ທີ່ຄວນປະຕິບັດໄດ້ໂລດ:

5. ທວນຄືນ ( ດັດແປງ) ໜ້າທີ່ງານ ( Job Description) ຂອງທີ່ປຶກສາທຸກຄົນ ແລະ ເພີ່ມໜ້າທີ່ການເອົາ ບົດບາດ ຍິງ-ຊາຍ ເປັນກະແສຫລັກ (Gender mainstreaming) ຢູ່ໃນວຽກງານ ຂອງເຂົາເຈົ້າ. ການທວນຄືນການປະຕິບັດໜ້າທີ່ງານຂອງທີ່ປຶກສາແຕ່ລະຄົນ ຕ້ອງກວມເອົາ ເລື້ອງການປະຕິບັດເລື້ອງບົດບາດ ຍິງ-ຊາຍ ນີ້ສະເພາະ. (ເບິ່ງລວມໃສ່ກັບຂໍ້ 3.2.)

6. ຕົວຊີ້ບອກ (internal indicators fpr setting purposes) ທັງຫລາຍ ຕ້ອງກວດຄືນ ແລະ ກຳນົດໃໝ່ເພື່ອໃຫ້ມີເປົ້າໝາຍ ເລື່ອງ ບົດບາດ ຍິງ-ຊາຍ ທີ່ແຍກຕາມເພດຢ່າງຊັດເຈນ.

   a. ຕົວຊີ້ບອກສຳລັບທຸກກິດຈະກຳຂອງທຸກຂະແໜງການຕ້ອງດັດແປງເພື່ອສະທ້ອນໃຫ້ເຫັນວ່າ 70% ຂອງກິດຈະກຳວາງແຜນທັງໝົດໄດ້ນຳເອົາເລື່ອງ ບົດບາດ ຍິງ-ຊາຍເຂົ້າໃສ່.

7. ແບບຟອມການເກັບກຳຂໍ້ມູນ (Profiles ຕ່າງໆ), ຟອມການສຳຫລວດ, ອື່ນໆ) ຕ້ອງສະທ້ອນໃຫ້ເຫັນຄວາມແຕກຕ່າງໃນຂໍ້ມູນທີ່ແຍກຕາມເພດ.

**8. ຄວນຢຸດເຊົາ**: ການໃສ່ ຊື່ຫົວໜ້າຄອບຄົວ ທີ່ເປັນແຕ່ເພດຊາຍ. ຄອບຄົວ ແມ່ນ ມີ 2 ຄົນ (ມີ ຍິງ ແລະ ຊາຍ) ຈຶ່ງເປັນ ຄອບຄົວ, ທັງສອງເປັນຫົວໜ້າຄອບຄົວ.

9. ຮັບປະກັນ ໃນການເຮັດບົດລາຍງານກິດຈະກຳທັງຫລາຍໃຫ້ເປັນລະບົບ ທີ່ຂໍ້ມູນໃຈ້ແຍກ ຕາມ ເພດ ຍິງ ແລະ ຊາຍ.

10. ຮັບປະກັນໃຫ້ ປື້ມສະມາຊິກທະນາຄານ ບ້ານມີ ສອງຊື່ ແລະ ສອງລາຍເຊັນ ແລະ ສອງເລກລະຫັດບັດ ( ຂອງ ຜົວ ແລະ ເມັຽ) ທີ່ມີສິດເທົ່າທຽມກັນໃນການນຳໃຊ້ປື້ມສະມາຊິກ.

11. ຊັກຊວນ ແລະ ຊ່ວຍເຫລືອ ຂັ້ນເມືອງ ເຮັດໃບຕາດິນ (ດັດແປງ) ເພື່ອໃຫ້ມີ ຊື່ຜົວ ແລະ ເມັຽ ຢູ່ບ່ອນໃດ ທີ່ຍັງບໍ່ຖືກຕ້ອງ. ໃນເວລາສຳຫລວດ ສັງເກດເຫັນວ່າ ຢູ່ 2 ບ້ານຂອງ ເມືອງ ໄຊຍະບູລີນັ້ນມີທັງສອງຊື່ ຜົວ ແລະ ເມັຽ.

12.ພະນັກງານຊຸມຊົນຢູ່ຂັ້ນບ້ານ, ຮ່ວມກັບ ສະຫະພັນແມ່ຍິງຂັ້ນບ້ານ ແລະ ຂັ້ນເມືອງ, ຕ້ອງສ້າງຂະບວນການສະໜອງຂໍ້ມູນ ໃຫ້ ແມ່ຍິງ ແລະ ຜູ້ຊາຍ ຮູ້ສິດທິ ຂອງເຂົາເຈົ້າໃນການ ນຳໃຊ້ ໃບຕາດິນທີ່ມີນັ້ນ.

13. ທຸກໆ ຄັ້ງທີ່ຕ້ອງນັດຊາວບ້ານເຂົ້າຮ່ວມຝຶກອົບຮົມແລະ ປະຊຸມ ຢູ່ຂັ້ນບ້ານ, ຕ້ອງຮັບປະກັນ ວ່າແມ່ຍິງຈາກຄອບຄົວທຸກ ແລະ ທຸກແທ້ໆ ໄດ້ເຂົ້າຮ່ວມຮັບເອົາຄວາມຮູ້ຈາກການອົບຮົມ ເຫລົ່ານັ້ນ, ຕ້ອງແຈ້ງເຂົາເຈົ້າລ່ວງໜ້າກ່ອນ ເພື່ອເຂົາເຈົ້າຈະໄດ້ຕຽມເວລາໄວ້ ແລະ ຮັບປະກັນວ່າການຈັດຝຶກອົບຮົມ ຫລື ປະຊຸມຕອ້ງແມ່ນ ເວລາທີ່ແມ່ຍິງສາມາດເຂົ້າຮ່ວມໄດ້.

14. ພາສາ ທີ່ໃຊ້ສື່ສານ, ເຕັກນິກການສື່ສານ ໃນເວລາ ຝຶກອົບຮົມ ຫລື ປະຊຸມ ຄວນປັບປຸງ, ເຮັດການອົບຮົມແບບເຮັດຕົວຈິງໂລດ( on-job– training ), ພາເຮັດຕົວຈິງ ບໍ່ແມ່ນ ເຮັດຕົວ ຈິງໃຫ້ເບິ່ງໃນຫອ້ງປະຊຸມຢູ່ກັບບ້ານ (ທີ່ເວົ້າວ່າ “ເຮັດຢູ່ກັບທີ່”), ແຕ່ຕ້ອງແມ່ນການພາເຂົາເຈົ້າ ລົງຕົນລົງມືເຮັດແທ້ໆ; ຖ້າຈຳເປັນຕ້ອງໃຊ້ນາຍພາສາແປ ໃຫ້ພວກແມ່ຍິງ ຫລື ຝຶກໃຫ້ກຸ່ມແມ່ຍິງສະເພາະ, ກໍຕ້ອງເຮັດ.

15. ພະນັກງານຊຸມຊົນ ຕ້ອງໄດ້ເຂົ້າຮ່ວມການປະຊຸມປະຈຳເດືອນຂອງ ສະຫະພັນແມ່ຍິງ ຢູ່ຂັ້ນບ້ານ, ແລະ ຄວນເປັນຜູ້ກະຕຸ້ນ[3] ໃຫ້ທີ່ປະຊຸມນັ້ນເຫັນບັນຫາຂອງເຂົາເຈົ້າຫລາຍຂຶ້ນ, ແລະ ແນໃສ່ເນື້ອໃນທີ່ສົນທະນາເພື່ອຫາທາງແກ້ໃຂບັນຫາ. ສັງເກດເຫັນວ່າ ສະຫະພັນແມ່ຍິງຢູ່ຂັ້ນບ້ານ ໄດ້ຮັບຄຳແນະນຳຈາກສະຫະພັນແມ່ຍິງເມືອງໃຫ້ປະຊຸມທຸກໆວັນທີ 15 ຂອງແຕ່ ລະເດືອນ, ດັ່ງນັ້ນ ພະນັກງານຊຸມຊົນຄວນສະເໜີໃຫ້ແມ່ຍິງບ້ານເຫລົ່ານັ້ນປະຊຸມຕາມວັນທີ ທີ່ລຽນຕໍ່ໆກັນ ເພື່ອພະນັກງານຊຸມຊົນເອງຈະສາມາດເຂົ້າຮ່ວມການປະຊຸມຂອງແມ່ຍິງ ຢູ່ ທຸກໆບ້ານໄດ້[4].

---

[3] ຄວນເຂົ້າໃຈວ່າ ກະຕຸ້ນ ບໍ່ແມ່ນ ການອຳນວຍ ຄວາມສະດວກ, ເຊິ່ງແປຈາກພາສາ ອັງກິດ ທີ່ວ່າ facilitate ນັ້ນຕ້ອງເຂົ້າໃຈວ່າແມ່ນກະຕຸ້ນໃຫ້ຄົນເຫັນບັນຫາ ແລະ ຊອກຫາວິທີແກ້ໃຂ, ບໍ່ຄວນ ແປ ວ່າແມ່ນ ການອຳນວຍຄວາມສະດວກ, ເພາະວ່າ ຖ້າເຂົ້າໃຈວ່າ ເປັນ ການອຳນວຍຄວາມ ສະດວກ ນັ້ນ, ມັນຈະອາດກາຍເປັນການໃຫ້ບໍລິການ (ເຮັດການຮັບໃຊ້).

[4] ແຜນງານ RLIP-RDMA ເຄີຍຈັດຝຶກອົບຮົມ TOT ໃຫ້ພະນັກງານຊຸມຊົນແລ້ວ, ດັ່ງນັ້ນ ພະນັກງານຊຸມຊົນ ກໍຄວນຮູ້ແລ້ວວ່າ ເຮັດການກະຕຸ້ນແມ່ນເຮັດແນວໃດ. ການຝຶກອົບຮົມເລື້ອງແນວຄວາມຄິດຂອງການພັດທະນາ ໃນເດືອນ ພະ ຈິກ 2006 ກໍມີເອກະສານແຈກໃຫ້ພະນັກງານຜູ້ເຂົ້າຮັບອົບຮົມແລ້ວ ກ່ຽວກັບ ການເປັນຜູ້ພາກຸ່ມສົນທະນາ, ອັນນັ້ນແມ່ນວິທີການ-ຂັ້ນຕອນ-ແລະ ທັດສະນະ ຂອງຜູ້ພາກຸ່ມສົນທະນາ ຫລື ເວົ້າອີກຄວາມໜຶ່ງ ແມ່ນ ການເປັນຜູ້ກະຕຸ້ນ (facilitator = ຜູ້ກະຕຸ້ນ, ຜູ້ພາຄິດ, ຜູ້ພາວິເຄາະບັນຫາ ເພື່ອຊອກຫາການແກ້ໃຂ ແບບມີສ່ວນຮ່ວມກັບກຸ່ມ)

16. ຍາມໃດ ທີ່ພະນັກງານຊຸມຊົນ ຫລື ພະນັກງານວິຊາການ ເຮັດວຽກເປັນກຸ່ມຢູ່ຂັ້ນບ້ານ (ເຊັ່ນ: ວຽກປູກຝັງ, ລ້ຽງສັດ, ປ່າໄມ້) ຕ້ອງພະຍາຍາມຈັດກຸ່ມແມ່ຍິງຕ່າງຫາກສະເພາະ, ຍິ່ງຖ້າວ່າມັນເປັນກິດຈະກຳທີ່ແມ່ຍິງເຮັດເປັນຕົ້ນຕໍ. ໃນກຸ່ມ ແມ່ຍິງ , ແລະ ທັງໃນກຸ່ມຜູ້ຊາຍ ຕ້ອງມີຄອບຄົວທຸກຈີນເຂົ້າຮ່ວມນຳ.

17. ຄວນ ປະສານງານໃຫ້ດີຂຶ້ນກວ່າເກົ່າ ເພື່ອ ບໍ່ໃຫ້ມີການປະຊຸມຫລາຍໂພດຢູ່ຂັ້ນບ້ານ, ເຊິ່ງມັນກາຍເປັນການລົບກວນບໍ່ໃຫ້ຊາວບ້ານມີເວລາພຽງພໍສຳລັບເຮັດການຜລິດລ້ຽງຊີວິດຂອງເຂົາເຈົ້າ. ຄວນຈັດໃຫ້ມີຕາຕະລາງໄປເຮັດວຽກຢູ່ຂັ້ນບ້ານ, ເຊັ່ນ ໃຫ້ເວລາແກ່ຊາວບ້ານ ເພື່ອເຮັດວຽກໃນການຜລິດຢູ່ໄຮ່ຢູ່ນາຢູ່ສວນ ເດືອນລະ 20 ມື້ຕິດຕໍ່ກັນ, ແລະ ໃຊ້ເວລາ 10 ມື້ ຕໍ່ເດືອນເທົ່ານັ້ນ ເພື່ອ ເຮັດວຽກລວມຮ່ວມກັບຄົນນອກບ້ານ ຫລື ຮັບການຝຶກອົບຮົມ, ຫລື ຮຽນໜັງສື (ຄວນໃຫ້ຊຸມຊົນແຕ່ລະບ້ານມີສ່ວນຮວ່ມຕັດສິນໃຈ ວ່າຈະຕົກລົງເລື້ອງນີ້ ແນວໃດດີ).

18. ຈັດໃຫ້ມີການຝຶກອົບຮົມເລື່ອງ ຊີດໍ (ສົນທິສັນຍາ ວ່າດ້ວຍ ການລົບລ້າງທຸກຮູບແບບ ການຈຳແນກຕໍ່ແມ່ຍິງ) ໃຫ້ພະນັກງານອາວຸໂສທີ່ກ່ຽວຂ້ອງ, ໃຫ້ພະນັກງານຊຸມຊົນ.

## 6.2. ຂໍ້ແນະນຳ ສຳລັບ ຕຳແໜ່ງ ທີ່ປຶກສາຂອງ DED:

19. ຄວນພິຈາລະນາໂດຍດ່ວນ ວ່າ ທີ່ປຶກສາໄລຍະສັ້ນ ຈາກ DED ( 8-10 ເດືອນ) ນັ້ນເປັນຕຳແໜ່ງທີ່ປຶກສາ (T/A) ໄລຍະຍາວ ແລະ ມີຜູ້ຊວ່ຍອີກ 1 ຄົນ. ຖ້າຕ້ອງມີທີ່ປຶກສາໄລຍະສັ້ນກ່ອນ (ເພາະຊອກຫາທີ່ປຶກສາໄລຍະຍາວບໍ່ທັນໄດ້ນັ້ນ) ຄວນເປັນທີ່ປຶກສາໄລຍະສັ້ນທີ່ປະຈຳເຕັມເວລາຢູ່ກັບແຜນງານ, ອາດເຮັດເປັນສອງໄລຍະ ຄື ໄລຍະ 4 ເດືອນ, ແລ້ວເປັນໄລຍະ 2 ເດືອນ, ຕາມເວລາທີ່ຈະຕົກລົງກັນກັບທີ່ປຶກສາ.

ເຫດຜົນຂອງຂໍ້ແນະນຳນີ້ ຍ້ອນເຫັນວ່າ ມີການຂາດຄວາມເຂົ້າໃຈໃນການປະຕິບັດຫລາຍ ແລະ ບໍ່ມອງເຫັນເປັນເລື້ອງສິດທິມະນຸດຂອງແມ່ຍິງ, ດັ່ງນັ້ນ ຂັ້ນຕອນ ການເອົາ ບົດບາດ ຍິງ-ຊາຍ ເປັນກະແສຫລັກ ນັ້ນຈຳເປັນຕ້ອງມີ ຊ່ຽວຊານ ດ້ານບົດບາດ ຍິງ-ຊາຍ ມາຢູ່ນຳຕະຫລອດ ຢ່າງໜ້ອຍ 2 ປີ, ພາຍຫລັງ ທີ່ມີທີ່ປຶກສາໄລຍະສັ້ນສຳເລັດໜ້າທີ່ງານຂອງຜູ້ກ່ຽວແລ້ວ.

20. ຈຸດປະສົງລວມໃນຕຳແໜ່ງ ຂອງ ທີ່ປຶກສາ ດ້ານ ບົດບາດ ຍິງ-ຊາຍ ແມ່ນເພື່ອໃຫ້ຄຳປຶກສາແກ່ໝົດທຸກຂະແໜງການວິຊາການ, ສະຫະພັນແມ່ຍິງ ແຂວງ ແລະ ເມືອງ, ເພື່ອປະຕິບັດການ ເອົາບົດບາດ ຍິງ-ຊາຍ ເປັນ ກະແສຫລັກ (ເພື່ອສົ່ງເສີມການໃຊ້ສິດຂອງແມ່ຍິງ) ໃນວຽກງານຂອງ ແຜນງານ, ຢ່າງໜ້ອຍໃນທຸກກິດຈະກຳທີ່ ແຜນງານ ແລະ ຊາວບ້ານຮ່ວມກັນຕົກລົງ. ຄວນຈັດ ຫລື ສະ ໜອງການຝຶກອົບຮົມໃຫ້ພະນັກງານຜູ້ຕົ້ນຕໍ (ຕົວຫລັກ) ທຸກຄົນ.

ຄວນຫລີງເຫັນວ່າ ທີ່ປຶກສາ DED ບໍ່ແມ່ນຜູ້ຮັບຜິດຊອບ ເລື້ອງບົດບາດ ຍິງ-ຊາຍ ພຽງຢ່າງດຽວ ສຳລັບແຜນງານ RLIP-RDMA. ຜູ້ກ່ຽວຈະຮັບຜິດຊອບ ເປັນຜູ້ກະຕຸ້ນ ຄົນອື່ນໆທັງໝົດ ໃຫ້ເຂົ້າໃຈ ແລະ ໃຫ້ເຫັນວ່າ ຈະເຮັດແນວໃດ ໃນທາງປະຕິບັດ ທີ່ນຳເອົາ ບົດບາດ ຍິງ-ຊາຍ ເຂົ້າໃນວຽກຂອງ ເຂົາເຈົ້າ; ແລະ ສະໜອງການສະໜັບສະໜູນຫລາຍກວ່າເກົ່າໃຫ້ແກ່ແມ່ຍິງຊົນເຜົ່າຜູ້ໜ້ອຍ ດ້ວຍ ການນຳໃຊ້ວິທີການ *ແບບມາດຕະການພິເສດຊົ່ວຄາວ* (ເປັນຄຳສັບໃນສົນທິສັນຍາວ່າ ດ້ວຍ ການ ລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ).

**21.. ໜ້າທີ່ງານເພີ່ມເຕີມຂອງທີ່ປຶກສາ DED :**

21.1. ທຸກຂະແໜງການຕ້ອງໄດ້ຮັບການຊ່ວຍເຫລືອ ເພື່ອນຳເອົາເລື້ອງ ບົດບາດ ຍິງ-ຊາຍ ເຂົ້າໃນ ວຽກ monitoring, ໃນວຽກງານການລາຍງານ, ເພື່ອຮັບປະກັນວ່າມີການໄຈ້ແຍກ ຕາມເພດ ຍິງ ຊາຍ.

21.2. ທຸກຂະແໜງການຕ້ອງໄດ້ຮັບຄຳປຶກສາ ແລະ ການຊ່ວຍເຫລືອ ເພື່ອນຳເອົາເລື້ອງ ຊີດໍ ເຂົ້າ ໃນວຽກງານຂອງຕົນ.

21.3. ສະຫະພັນແມ່ຍິງແຂວງ / ເມືອງ ຕ້ອງໄດ້ຮັບການປຶກສາ ແລະ ການຊ່ວຍເຫລືອ ເພື່ອ ພັດທະ ນາລະບົບ ແຜນງານ monitoring ກ່ຽວກັບ ການໄດ້ຮັບຜົນປະໂຫຍດຂອງແມ່ຍິງ (ໂດຍ ມີການ ຊວ່ຍ ເຫລືອ ຂອງ ທີມ IKM ).

21.4. ທີ່ປຶກສາ DED ຕ້ອງຊ່ວຍສ້າງເຄືອຄ່າຍ (network) ຂອງໂຄງການທັງຫລາຍທີ່ພັດທະນາ ການຫລຸດຜ່ອນຄວາມທຸກຈົນ, ດ້ວຍຈຸດປະສົງ ເພື່ອແລກປ່ຽນປະສົບການ ໃນເລື້ອງ ບົດບາດ ຍິງ- ຊາຍ. ອາດເລີ່ມຕົ້ນກັບ ອົງການ CARE ທີ່ປະຕິບັດໂຄງການ PARUA[5] ແລະ ໂຄງການຂອງ ອົງ ການ SCA, ລວມທັງໂຄງການຕ່າງໆຂອງ RDMA ຢູ່ແຂວງ ພາກເໜືອຂອງລາວ, ແລະ ທີ່ປຶກສາ DED ຄວນມີສ່ວນຮ່ວມບາງຄັ້ງຄາວກັບເຄື່ອຄ່າຍ ຊີດໍ ທີ່ຢູ່ວຽງຈັນ.

22. ທີ່ປຶກສາ DED ຕ້ອງໃຫ້ຄຳປຶກສາ ແລະ ຊ່ວຍເຫລືອ ສະຫະພັນແມ່ຍິງເມືອງໃຫ້ເຂົ້າໃຈວ່າບົດ ບາດຂອງເຂົາເຈົ້າ ແມ່ນ ເປັນຜູ້ສະໜັບສະໜູນຢ່າງຫ້າວຫັນແກ່ແມ່ຍິງ ຂັ້ນບ້ານ, ດ້ວຍການອົບຮົມ ໃຫ້ແມ່ຍິງຂັ້ນບ້ານຮູ້ໃຊ້ສິດ, ຕົວຢ່າງ : ສາມາດອອກສຽງໃນເລື່ອງເສດຖະກິດ, ສັງຄົມ, ວັດທະນະ ທຳ, ເຊັ່ນ : ຈະຜລິດຫຍັງ ຫລື ເຮັດ ຫຍັງແນວໃດ ເພື່ອມີສະບຽງພຽງພໍ, ເຮັດແນວໃດສັງຄົມ ຈະຮັບຮູ້ສະຖານະພາບແມ່ຍິງທົ່ວໄປທັງໝົດ ທີ່ ລວມມີ ທັງ ແມ່ຮ້າງ, ແມ່ ໝ້າຍ, ສາວແກ່ບໍ່ແຕ່ງ ງານ, ຢ່າງເທົ່າທຽມກັບຜູ້ຊາຍ, ຈະເຮັດແນວໃດແມ່ຍິງຈະຫລຸດພົ້ນຈາກປະເພນີທີ່ບັງຄັບແມ່ຍິງ ຈົນເກີນໄປ,

5

ເຊັ່ນວ່າ : ຜົວບໍ່ປະແຕ່ເອົາເມັຽໃໝ່ມາຢູ່ນຳ, ຫລື ປະຜົວແລ້ວບໍ່ສາມາດກັບມາຢູ່ໃນ ເຮືອນຮ່ວມກັບພໍ່ແມ່ຄືນໄດ້ຕື່ມອີກ.

ທີ່ປຶກສາໄລຍະສັ້ນຂອງ DED ຄວນຊ່ວຍເຫລືອສະຫະພັນແມ່ຍິງເມືອງພັດທະນາຄູ່ມືການຝຶກອົບ ຮົມ ໃຫ້ແມ່ຍິງ, ຜູ້ຊາຍ ແລະ ຄະນະບ້ານ ຮູ້ໃຊ້ສິດ ທີ່ຖືກຕ້ອງຂອງເຂົາເຈົ້າໃນການພົວພັນນຳກັນແລະ ກັນລະຫວ່າງ ເພດ ແລະ ພາຍໃນບ້ານກັບພາຍນອກ, ຕົວຢ່າງ ການນຳໃຊ້ດິນ, ການເຮັດສັນຍາຊື້ຂາຍກັບພວກພໍ່ຄ້າແບບບໍ່ເສັຽປຽບ, ສາມາດຕໍ່ລອງໄດ້ແບບຖືກຕ້ອງຕາມສິດທິ.

22.1. ທີ່ປຶກສາ DED (ໂດຍຮ່ວມມືກັບ ທີ່ປຶກສາ ການຕະຫລາດ) ຕ້ອງຊ່ວຍເຫລືອ ສະຫະພັນແມ່ຍິງແຂວງ, ເມືອງ ໃຫ້ມີຄວາມຊຳນານໃນການກະຕຸ້ນ ເພື່ອຊ່ວຍເຫລືອກຸ່ມແມ່ຍິງພາຍໃນບ້ານ (ເຊັ່ນ ກຸ່ມຜລິດ, ກຸ່ມຫາລາຍໄດ້, ກຸ່ມການຕະຫລາດ, ກຸ່ມຊ່ວຍເຫລືອຕົນເອງ, ອື່ນໆ).

22.2. ທີ່ປຶກສາ DED ຕ້ອງໃຫ້ຄຳປຶກສາ ແລະ ຊວ່ຍເຫລືອສະຫະພັນແມ່ຍິງແຂວງ, ເມືອງ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ເພື່ອດຳເນີນການປະຕິບັດການຕ່າງໆ ທີ່ກຳນົດໄວ້ ໃນບົດລາຍງານການສຳຫລວດຂອງ IFAD ກ່ຽວກັບ ເລື່ອງບົດຍາດຍິງ-ຊາຍ.

## 6.3. ຂໍ້ແນະນຳ (ເພື່ອປະຕິບັດໃຫ້ໄດ້ຜົນອອກຍາວນານ):

23. ສະຫະພັນແມ່ຍິງ ທຸກໆຂັ້ນທັງໝົດຄວນມີບົດບາດທີ່ ເຂັ້ມແຂງກ່ວາທີ່ເປັນຢູ່ໃນປັດຈຸບັນນີ້ ໃນການໂຄສະນາຊັກຊວນ ແມ່ຍິງ ແລະ ຜູ້ຊາຍ ປະຕິບັດ ຫລັກການພື້ນຖານ (ແລະ 30 ມາດຕາ) ຂອງສົນທິສັນຍາຊີດໍ. ຈັດການຝຶກອົບຮົມເລື້ອງນີ້, ລວມທັງ TOT, ທີ່ອາດຈະຕ້ອງປະສານນຳສະຫະພັນແມ່ຍິງຂັ້ນແຂວງ, ແມ່ຍິງ ຂັ້ນສູນກາງ / ສູນຂໍ້ມູນຂ່າວສານພັດທະນາ ບົດບາດ ຍິງ- ຊາຍ, ຫລື ທີ່ປຶກສາຈາກພາຍນອກທີ່ມີປະສົບການເລື້ອງ ຊີດໍ.

24. ດັ່ງທີ່ບົດລາຍງານຂອງ UNOPS ໄດ້ຂຽນໄວ້ວ່າ "ທະນາຄານບ້ານ" ແມ່ນກິດຈະກຳທີ່ເໝາະສົມທີ່ສຸດສຳລັບແມ່ຍິງ[6] ເພື່ອແມ່ຍິງ ; ແຕ່ບໍ່ມີການສະທ້ອນໃຫ້ເຫັນຢູ່ໃນຕົວຈິງທີ່ແຜນງານ ແມ່ນສະໜັບສະໜູນທະນາຄານບ້ານ. ການເງິນຈຸລະພາກ ແມ່ນເຄື່ອງມືສຳຄັນອັນໜຶ່ງ ເພື່ອປັບປຸງ ໆແລະພັດທະນາ ຄວາມໝັ້ນໃຈຂອງແມ່ຍິງ, ແລະ ເພື່ອປັບປຸງສະຖານະພາບທາງເສດຖະກິດ-ສັງ ຄົມຂອງແມ່

[6] Grameen Bank ໃນປະເທດບັງກະລາເດັດເຄີຍໄດ້ຮັບລາງວັນໂນແບວ ແລ້ວເພາະທະນາຄານ ເຂົາເຈົ້າ ມີແຕ່ໃຫ້ແມ່ຍິງບໍລິຫານ, ເປັນຜູ້ຝາກ ແລະ ຜູ້ຢືມເງິນ. ເຂົາເຈົ້າກໍ່ແມ່ນພວກແມ່ຍິງ ບໍ່ມີລະດັບ "ການສຶກສາຄືກັນ", ແຕ່ກໍ ສາມາດນຳພາ ບໍລິຫານທະນາ ຄານ ບ້ານໄດ້ຢ່າງມີຜົນສຳເລັດ. ຢູ່ ອິນເດັຽ ກໍມີຫລາຍພັນທະນາຄານທີ່ແມ່ນແມ່ຍິງບໍລິຫານທະນາຄານເພື່ອແມ່ຍິງ.

ຍິງ, ເພາະມັນເປັນການຝຶກແອບໃຫ້ແມ່ຍິງຮູ້ນຳໃຊ້ສິດທິທັງໝົດຂອງເຂົາເຈົ້າໃນສັງຄົມ ແລະ ເປັນການປັບປຸງເງື່ອນໃຂການດຳລົງຊີວິດຂອງເຂົາເຈົ້າ.

24.1. ໃນເລື້ອງນີ້, ແມ່ຍິງທີ່ມີຄວາມສາມາດເປັນຜູ້ນຳພາໄດ້ (ທີ່ກຳນົດໂດຍຊາວບ້ານ ຍິງ ແລະ ຊາຍ) ຕ້ອງເປັນຜູ້ຢູ່ໃນຄະນະກຳມະການທະນາຄານບ້ານເທົ່າກັບຜູ້ຊາຍ, ຫລື ຕ້ອງມີແມ່ຍິງແບບນີ້ຫລາຍກວ່າມີຜູ້ຊາຍໃນຄະນະກຳມະການທະນະຄານບ້ານ (ບໍ່ວັດແທກດ້ວຍລະດັບການອ່ານໄດ້ຂຽນເປັນ).

24.2. ຢູ່ບ້ານໃດບ່ອນມີແມ່ຍິງຖືກຈຳແນກ (ຖືກດູໝິ່ນ) ຢ່າງໜັກໜ່ວງ, ມີສະຖານະພາບຕ່ຳຕອ້ຍຫລາຍ, ຕ້ອາສ້າງໃຫ້ມີເງື່ອນໄຂ ໃຫ້ແມ່ຍິງໄດ້ໃຊ້ສິດຂອງເຂົາເຈົ້າ ( ແມ່ຍິງ ມົ້ງ, ຢ້າວ, ຂະມຸ, ໄປຣ່). ແຜນງານ RLIP ຄວນສະໜັບສະໜູນໃຫ້ມີ "ໜ່ວຍງານ ສະເພາະແມ່ຍິງ" ປະຈຳທະນາຄານບ້ານ (ບອ່ນ ທີ່ມີທະນາຄານບ້ານ) ຫລື ສ້າງໃຫ້ມີ ທະນາຄານບ້ານສະເພາະ ແມ່ຍິງທັງໝົດເລີຍ; ແລະ ສະໜັບສະໜູນກິດຈະກຳການຫາລາຍໄດ້ຂອງແມ່ຍິງ, ໂດຍແມ່ຍິງ ແລະ ເພື່ອແມ່ຍິງ. (ອັນນີ້ກໍໄດ້ລະບຸໄວ້ໃນບົດລາຍງານການສຳຫລວດຂອງ IFAD).

25. ສະຫະພັນແມ່ຍິງຂັ້ນບ້ານ/ຂັ້ນເມືອງ ແລະ ພະນັກງານຊຸມຊົນ ຕ້ອງກະຕຸ້ນໃຫ້ແມ່ຍິງບ້ານຊ່ວຍເຫລືອກັນ, ໂດຍສະເພາະ ພວກແມ່ຍິງທຸກຍາກ ແລະ ທຸກແທ້ໆ (ເຊັ່ນ ຈັດເປັນກຸ່ມຊ່ວຍເຫລືອກັນຂອງເຂົາເຈົ້າ), ເຊັ່ນ : ການຊ່ວຍເຫລືອດ້ານຈິດໃຈ, ດ້ານແຮງງານ, ສະຫວັດດີການເລັກນ້ອຍ ແລະ ຊຸກຍູ້ໃຫ້ເຂົາເຈົ້າເຂົ້າຮ່ວມກຸ່ມການຜລິດຂອງແມ່ຍິງ.

26. ສະຫະພັນແມ່ຍິງເມືອງ/ບ້ານ ແລະ ພະນັກງານຊຸມຊົນ ຕ້ອງກະຕຸ້ນ ໃຫ້ມີວິທີການຊ່ວຍເຫລືອຄອບຄົວທຸກຍາກສາມາດສົ່ງລູກສາວໄປໂຮງຮຽນ (ລວມທັງ ລະດົມ ໃຫ້ຜູ້ຊາຍຊວ່ຍວຽກແມ່ຍິງ ທີ່ມີຫລາຍໂພດ.

27. RLIP-RDMA ຄວນໃຫ້ຄຳປຶກສາ ແລະ ຊ່ວຍຂະແໜງການສຶກສາ ປັບປຸງຫລັກສູດການສຶກສານອກລະບົບ ເພື່ອເຮັດໃຫ້ຫລັກສູດເໝາະສົມກັບຄວາມຕອ້ງການໃຊ້ຂອງ ແມ່ຍິງໃນທອ້ງຖິ່ນ, *(ກະຊວງສຶກສາອະນຸຍາດໃຫ້ມີຫລັກສູດທອ້ງຖິ່ນສະເພາະ 40% . ລັດຖະບານອະນຸຍາດໃຫ້ ສອນ ເປັນພາສາຊົນເຜົ່າ ຢູ່ໂຮງຮຽນ ປະຖົມໄດ້ ສຳລັບເຜົ່າໃດ ທີ່ມີ ໂຕໜັງສືຂອງເຂົາເຈົ້າ, ເບິ່ງໃນປຶ້ມແຜນພັດທະນາ ເສດຖະກິດ ສັງຄົມ ແຕ່ ປີ 2006 ຫາ 2010, ໜ້າ 140- 141). ຕົວຢ່າງ ຫລັກ ສູດທ້ອງຖິ່ນ ອາດມີຫລາກຫລາຍ ອີງຕາມ ແຕ່ ລະຊຸມຊົນກັບໂຮງຮຽນຈະຕົກລົງນຳກັນ, ເຊັ່ນ ຢູ່ ບາງແຂວງມີ ຫັລກສູດ ເລື້ອງທັກສະຊີວິດ (ວິຊາເຮັດການກໍ່ສ້າງ, ຈັກສານ), ອະນຸລັກພູມປັນຍາທ້ອງຖິ່ນ ( ເຊັ່ນ : ການປູກມອນລ້ຽງມ້ອນ, ສາວໄໝ ແລະ ຕ່ຳຫູກ ທີ່ຊຸມຊົນຖ່າຍທອດໃຫ້ນັກຮຽນ ແຕ່ ປ.3 ຂຶ້ນເມືອ), ອະນຸລັກເຄື່ອງດົນຕີ ພື້ນເມືອງ;*

27.1. ແມ່ຍິງອາດຕ້ອງການ ແລະ ຈະຮຽນໄດ້ໄວກວ່າ ຖ້າໄດ້ຮຽນນັບ ແລະ ໄລ່ເລກ ທີ່ຕິດພັນກັບ ການຊື້ຂາຍສາລີ, ພືດຜັກຂອງເຂົາເຈົ້າ;

27.2. ພິຈາລະນາ ໃຫ້ມີຫ້ອງການສຶກສາແມ່ຍິງໃຫຍ່ ຮ່ວມກັບແມ່ຍິງນ້ອຍ (ຜູ້ທຸກຍາກບໍ່ມີເວລາໄປ ໂຮງຮຽນສາມັນ);

27.3. ແລະ ຈັດເວລາສອນຕາມເວລາ ທີ່ເຂົາເຈົ້າມີ, ເຊິ່ງໃນປີໜຶ່ງເຂົາເຈົ້າອາດບໍ່ມີເວລາຮຽນໄດ້ ຮອດ 10 ເດືອນ ກໍບໍ່ຄວນຖືເປັນບັນຫາ, ເພາະຈຸດປະສົງແມ່ນ ຢາກໃຫ້ແມ່ຍິງໄດ້ຮຽນໜັງສື.

27.4. ພະນັກງານຊຸມຊົນ, ລວມທັງ ສະຫະພັນແມ່ຍິງບ້ານ ຄວນລະດົມອຳນາດການປົກຄອງບ້ານ ໃຫ້ລະດົມຜູ້ຊາຍຊ່ວຍວຽກຄອບຄົວຂອງແມ່ຍິງເພື່ອໃຫ້ແມ່ຍິງໄດ້ມີເວລາຮຽນ.

28. ຄະນະອຳນາດການປົກຄອງບ້ານ, ສະຫະພັນແມ່ຍິງບ້ານ ແລະ ແມ່ຍິງໃນບ້ານ ຕ້ອງໄດ້ຮັບການປູກ ຈິດສຳນຶກ ເພື່ອປົກປ້ອງ ແລະ ຊ່ວຍເຫລືອແມ່ຍິງທີ່ຖືກຜົວຕີ (ຖືກຄວາມຮຸນແຮງໃນຄອບຄົວ).

29. RLIP-RDMA ຄວນຈັດທັດສະນະສຶກສາຫລາຍຂຶ້ນກວ່າເກົ່າ, ເຊັ່ນ ຢ້ຽມຢາມ ລະຫວ່າງບ້ານຕໍ່ ບ້ານໃນເຂດ 5 ເມືອງຂອງແຜນງານ, ເພື່ອໃຫ້ແມ່ຍິງຊາວບ້ານໄດ້ເຫັນແມ່ຍິງພວກອື່ນ, ໄດ້ຮູ້ວ່າ ຜູ້ອື່ນມີກິດຈະກຳອັນໃດແດ່, ເຊິ່ງເຂົາເຈົາອາດຈະເກີດມີຄວາມສົນໃຈຫລາຍຢ່າງໄດ້. ສະຫະພັນແມ່ ຍິງບ້ານ/ ເມືອງ ແລະ ພະນັກງານຊຸມຊົນ ຄວນເປັນຜູ້ຈັດຕັ້ງເລື່ອງນີ້.

30. ກິດຈະກຳຕົ້ນຕໍສ່ວນໃຫຍ່ ຂອງແຜນງານ RLIP-RDMA ຕ້ອງຈັດເປັນບູລິມະສິດ ເພື່ອແມ່ຍິງ, ໂດຍສະເພາະ ແມ່ຍິງທຸກ ແລະ ທຸກແທ້ໆ. ມີແຕ່ ວິທີທາງນີ້ ຈະຊ່ວຍໃຫ້ ລັດຖະບານລາວປະຕິບັດ ຫລັກການພື້ນຖານຂອງ CEDAW ໄດ້.

**ແມ່ຍິງຕອ້ງໄດ້ ຮັບຜົນປະໂຫຍດ ທີ່ເປັນ ຂອງເຂົາເຈົ້າ,**
**ບໍ່ແມ່ນໄດ້ຮັບ ຈາກຜູ້ຊາຍ ທີ່ເປັນຜູ້ແບ່ງປັນ ໃຫ້ແມ່ຍິງ.**

31. ໃນທີ່ສຸດ ຄວນຕະໜັກໄວ້ສະເໜີວ່າ ການພັດທະນາສະຖານະພາບແມ່ຍິງ ເປັນເລື້ອງ ທີ່ໃຊ້ ເວລາ, ໃຈເຢັນ ແລະ ພະຍາຍາມສູງຕະຫລອດ ເປັນປົກກະຕິ ແລະ ເປັນລະບົບ, ຂັ້ນຕອນກໍຈະ ຊ້າກວ່າ ການ ພັດທະນາຜູ້ຊາຍ ເພາະ ຜ່ານມາຕັ້ງແຕ່ດົນແຕ່ນານມາແລ້ວ ແມ່ຍິງຕົກ ຢູ່ໃນສະຖາ ນະພາບຕໍ່າຕ້ອຍ, ຈະປ່ຽນແປງໄດ້ກໍຕໍ່ເມື່ອ ຜູ້ຊາຍ ທັງຫລາຍເອງກໍຕັດສິນໃຈ ໃຫ້ຄວາມຮ່ວມ ມືເທົ່ານັ້ນ.

**ຕາຕະລາງເວລາການເຮັດວຽກຂອງທີມທີ່ປຶກສາ ແລະ ພາກສ່ວນທີ່ໄດ້ພົບພໍ້**

| ວັນທີ | ກິດຈະກຳ/ປະຊຸມ | ຜູ້ຄົນແລະພາກສວ່ນທີ່ໄດ້ພົບພໍ້[1] |
|---|---|---|
| 5.06 | ດຣ. ຣິຕາ ເກເບີຣກ໌ ມາຮອດວຽງຈັນ | |
| | ປະຊຸມທີມທີ່ປືກສາ | |
| | ພົບກັບ ຫວົໜ້າ GTZ ແຜນງານ RDMA | ດຣ. ອູຣິສ໌ ຊາແບລກິສແຊນລາ, ຜູ້ປະສານງານ GTZ ປະຈຳປະເທດລາວ |
| 6.06 | ກະຕຽມ ໄປສະໜາມ | |
| | ເດີນທາງໄປ ໄຊຍະບູລີ ຜ່ານ ຫລວງພະບາງ | |
| 7.06 | ເຂົ້າຮ່ວມການປະຊຸມປະຈຳປີເລື້ອງ ແຜນການ/ງົບປະມານຂອງແຜນ ງານ RLIP-RDMA | |
| | ສະເໜີຫຍໍ້ ກ່ຽວກັບ ການປະເມີນ | ດຣ. ເຢັນສ໌ ກະລາບິນສະກີ, ຫົວໜ້າທີມ RDMA ໄຊຍະບູລີ |
| 8.06 | ປະຊຸມກັບ ສະຫະພັນແມາຍິງແຂວງ ແລະ ສະຫະພັນແມ່ຍິງ ຂອງ 5 ເມືອງ | ທ່ານ ນິງລັກ ໄຊຍະວຸດ, ຮອງປະທານ ສມຍ ແຂວງ, ທ່ານ ສັງວຽນ ປິ່ນທິບ ປະທານ ສມຍ ໄຊຍະບູລີ, ທ່ານ ບົວຄຳ ຮອງປະທານ ສມຍ ເມືອງເງິນ, ທ່ານ ຈັນທີ ຄຳວົງຈັນ ຮອງປະທານ ສມຍ ເມືອງທົ່ງສາ, ທ່ານ ທົງຄຳ ຍົດບຸນ ຮອງປະທານ ສມຍ ເມືອງຊຽງຮ່ອນ, ທ່ານ ບົວຊຽວ ຮອງ ສມຍ ເມືອງ ຄອບ |
| | ພົບກັບ ຜູ້ຕາງໜ້າ PPCU ແລະ DPCU ຮ່ວມກັບ ຫົວໜ້າຄະນະບໍລິ ຫານແຜນງານ ຂອງ RLIP | ທ່ານ ຈັດຕະວາ ແກ້ວຄຳເພັດ, ຫົວໜ້າຄະນະບໍລິຫານ ແຜນງານ RLIP; ທ່ານ ຄຳພຸດ ອິນທະວົງ ຮອງຫົວໜ້າ ຄະນະບໍລິຫານແຜນງານ RLIP, ທ່ານ ຄຳໝັ້ນ ຮອງຫົວໜ້າ PPCU: ທ່ານຄຳເຜີຍ ຮອງຫົວໜ້າ, DPCU ໄຊຍະບູລີ; ທ່ານພູວັງ ກອງຊັບ, ຫົວໜ້າ DPCU ເມືອງ ທົ່ງສາ; ທ່ານໄຊຊະນະ, ຫົວໜ້າ DPCU ເມືອງ ເງິນ, ທ່ານຈັນເພັງ, ຫົວໜ້າ DPCU ເມືອງຄອບ; ທ່ານ ຊ່ຽນ, ຫົວໜ້າ DPCU ເມືອງຊຽງຮ່ອນ. |
| 9.06 | ຢ້ຽມຢາມບ້ານ: ໂພນໂຮມ, ຮ່ວມກັບ ທ່ານ ແກ້ວອຸດອນ, ຫົວໜ້າ CD | ອຳນາດການປົກຄອງບ້ານ, ສມຍ ບ້ານ, ແມ່ຍິງເກົ່າ ແລະ ແມ່ຍິງທຸກຈົນ ແລະ ລຳບາກຢູ່ໃນບ້ານ. |

[1] Persons Met are shown with full names and positions only at the first meeting with them.

| | | |
|---|---|---|
| | ເມືອງ, ແລະ ທ່ານ ຄຳເຜື້ອງ CD, ແລະ ທ່ານ ວັນນະພອນ ທໍ້ ຈາກສະຫະພັນແມາຍິງເມືອງໄຊຍະບູຣີ. | |
| | . | |
| | | |
| 10.06 | ຢ້ຽມຢາມບ້ານ: ປາກຫງວ, ຮ່ວມກັບ CDW, ທ່ານ ວິໄລວານ | ອຳນາດການປົກຄອງບ້ານ, ສນຍ ບ້ານ, ແມ່ຍິງເກົ່າ ແລະ ແມ່ຍິງທຸກຈົນ ແລະ ລຳບາກຢູ່ໃນບ້ານ. |
| | ເດີນທາງໄປເມືອງຫົງສາ | |
| 11.06 | ຢ້ຽມຢາມບ້ານ: ນາປຸ່ງ, ຮ່ວມກັບ CDW ທ່ານພູເທບ ແລະ ທ່ານ ລັດສະໝີ. | ອຳນາດການປົກຄອງບ້ານ, ສນຍ ບ້ານ, ແມ່ຍິງເກົ່າ ແລະ ແມ່ຍິງທຸກຈົນ ແລະ ລຳບາກຢູ່ໃນບ້ານ, ກຸ່ມຜູ້ຊາຍ. |
| | ປະຊຸມຢູ່ RDMA/RLIP | ພະນັກງານ ທີມ CD ທັງໝົດ |
| 12.06 | ຢ້ຽມຢາມບ້ານ: ນາບາໂລ່ນ (ຄຸ້ມໜຶ່ງຂອງບ້ານດອນໃໝ່) ຮ່ວມກັບ CDW, ທ່ານລັດສະໝີ ແລະ ຈາກ ສນຍ ເມືອງ ທ່ານ ນາງຄຳຜູ | ອຳນາດການປົກຄອງບ້ານ, ສນຍ ບ້ານ, ແມ່ຍິງເກົ່າ ແລະ ແມ່ຍິງທຸກຈົນ ແລະ ລຳບາກຢູ່ໃນບ້ານ.. |
| | ປະຊຸມ ຢູ່ RDMA/RLIP | ທີ່ປຶກສາຂອງແຜນງານ: ທ່ານວຽງວິໄລ ສິຣິມຸງຄູນ (CD), ທ່ານສົມຈິດ ສິຣິມຸງຄູນ (ສຶກສາ.), ທ່ານບັນດິດ ສີສຸດາ (ການເງິນຈຸນລະພາກ), ທ່ານມະນີວົງ ດາໄວສັນຕິ (IKM), ທ່ານ ທິບພະພອນ ໄຊລາດ (NRM). |
| 13.06 | ຢ້ຽມຢາມບ້ານ: ກິ່ວມ່ວງ, ຮ່ວມກັບ CDWs ທ່ານ ດາວສອນ, ທ່ານພູເທບ ແລະ ຈາກສະຫະພັນແມ່ຍິງ ທ່ານ ຄຳຜູ | ອຳນາດການປົກຄອງບ້ານ, ສນຍ ບ້ານ, ແມ່ຍິງເກົ່າ ແລະ ແມ່ຍິງທຸກຈົນ ແລະ ລຳບາກຢູ່ໃນບ້ານ, ກຸ່ມຜູ້ຊາຍ. |
| | ທີມທີ່ປຶກສາກວດຄືນວຽກ ແລະ ພົບກັບພະນັກງານແຜນງານ | ທ່ານ ພັນສີ ເວີຍຢີ (ຜູ້ຊ່ວຍວຽກສົ່ງເສີມກະສິກຳ) |
| 14.06 | ພົບປະກັບທີ່ປຶກສາ (ຕໍ່) | ທ່ານ ເວໂຣນິກາ ອູຕະແຊັດສ໌ (ທີ່ປຶກສາ SME) |
| | ເດີນທາງໄປເມືອງເງິນ | |
| 15.06 | ຢ້ຽມຢາມບ້ານຫວ້ຍເຜີ້ງ, ຮ່ວມກັບ CD ຂັ້ນເມືອງ, ທ່ານ ອຳພອນ ສຸວັນນະວົງ, ແລະ CDW ທ່ານ ໄພວັນ ແລະ ທ່ານຄຳຢາດ, ແລະ ຈາກສະຫະພັນແມ່ຍິງເມືອງ ທ່ານ ບົວຄຳ. | ອຳນາດການປົກຄອງບ້ານ, ສນຍ ບ້ານ, ແມ່ຍິງເກົ່າ ແລະ ແມ່ຍິງທຸກຈົນ ແລະ ລຳບາກຢູ່ໃນບ້ານ, ກຸ່ມຜູ້ຊາຍ. |

| | | |
|---|---|---|
| | ຢ້ຽມຢາມບ້ານນ້ຳໂທນ ຮ່ວມກັບ CD ຂັ້ນເມືອງ, ທ່ານ ອຳພອນ ສຸວັນນະວົງ, ແລະ CDW ທ່ານ ໄພວັນ, ທ່ານຄຳຢາດ ແລະ ທ່ານ ພອນໄຊ, ແລະ ຈາກສະຫະພັນແມ່ຍິງເມືອງ ທ່ານ ບົວຄຳ. | ອຳນາດການປົກຄອງບ້ານ, ສມຍ ບ້ານ, ແມ່ຍິງເກັ່ງ ແລະ ແມ່ຍິງທຸກຈົນ ແລະ ລຳບາກຢູ່ໃນບ້ານ, ກຸ່ມຜູ້ຊາຍ. |
| 16.06 | ປະຊຸມ ສະຫລຸບ ຮ່ວມກັບ ໗ CDWs ແລະ CD ຂັ້ນເມືອງ, ແລະ ຈາກສະຫະພັນແມ່ ຍິງເມືອງ ທ່ານ ບົວຄຳ. | |
| | ເດີນທາງກັບ ທົ່ງສາ. ຄົ້ນຄວ້າເອກະສານ. | |
| 17.06 | ທີມທີ່ປຶກສາກວດຄືນວຽກ ແລະ ສົນທະນາກວດຄືນວຽກ | |
| | ພົບກັບທີ່ປຶກສາການລ້ຽງສັດ | ທ່ານ ເພັງພິລາ. |
| 18.06 | ປະຊຸມຢູ່ RLIP/RDMA, ພົບກັບ ຫົວໜ້າທີ່ປຶກສາແຜນງານ, ແລະ ທີ່ປຶກສາການວາງແຜນເຂດ | ດຣ. ເຢັນສ໌ ກະລາບິນສະກີ ແລະ ທ່ານ ຄາຖາ ລາມາສ໌ |
| | ເດີນທາງກັບໄຊຍະບູລີ | |
| 19.06 | ກະຕຽມເນື້ອໃນການສະເໜີ | |
| 20.06 | ກະຕຽມເນື້ອໃນການສະເໜີ | |
| 21.06 | ກະຕຽມເນື້ອໃນການສະເໜີ | |
| 22.06 | ຈັດປະຊຸມດຳເນີນການສະເໜີຜົນອອກ ຢູ່ທີ່ປະຊຸມ | ພະນັກງານຂັ້ນແຂວງ, ພະນັກງານ RLIPR-DMA |
| | ເດີນທາງຮອດຫລວງພະບາງ | |
| 23.06 | ເດີນທາງຮອດວຽງຈັນ | |
| 24.06 | ສັງລວມເນື້ອໃນທັງໝົດຈາກພາກສະໜາມ, ແລະ ຄຳຄິດເຫັນໃນເວລາດຳເນີນການສະເໜີ ຢູ່ໄຊຍະບູລີ. | |
| 25.06 | ສະເໜີຫຍໍ້ ໃຫ້ຫົວໜ້າຄະນະບໍລິຫານແຜນງານ RLIP – RDMA ແລະ ຮອງຫົວໜ້າ DED | ດຣ. ເຢັນສ໌ ກະລາບິນສະກີ, ທ່ານ ຈັດຕະວາ ແກ້ວຄຳເພັດ, ທ່ານ ອາດຣີອານ ຊຸສູ້ເບັກ Schuhbeck, |

| | | |
|---|---|---|
| | ທີມທີ່ປຶກສາພົບປະກັບ ຜູ້ປະສານງານລະດັບຊາດຂອງຫ້ອງ UNIFEM CEDAW SEAP | ທ່ານ ສົມສຸກ ຊະນະນິກອນ |
| 26.06 | ຂຽນບົດລາຍງານ | |
| 27.06 | ຂຽນບົດລາຍງານ | |
| 28.06 | ຂຽນບົດລາຍງານ | |
| 29.06 | ຂຽນບົດລາຍງານ | |
| 30.06 | ຂຽນບົດລາຍງານ ແລະ ສຳເລັດບົດລາຍງານ | |
| | ດຣ. ຣິຕາ ເກເບີກຣ໌ ເດີນທາງກັບ. | |

ລາຍຊື່ຜູ້ເຂົ້າຮ່ວມການນຳສະເໜີຜົນຂອງການປະເມີນ ດ້ານບົດບາດຍິງ-ຊາຍ.

| ລ/ດ | ຊື່ ແລະ ນາມສະກຸນ | ຕຳແໜ່ງ/ໜ້າທີ່ | ມາຈາກພາກສ່ວນ |
|---|---|---|---|
| 1 | ທ. ຈັນຖະໜອມ | ຮອງຫົວໜ້າພະແນກ | ແຜນການ ແລະ ການລົງທຶນ. |
| 2 | ທ. ຄຳພຸດ ອິນທະວົງ | ຮອງຫົວໜ້າ | ແຜນງານແຂວງ |
| 3 | ທ. ຈັນເພັງ ຄຳມຸນທາ | ຫົວໜ້າຂະແໜງ | ພະແນກແຜນການ ແລະ ການລົງທຶນ. |
| 4 | ນ. ເທວີ ພັນລັກ | ປະທານສະຫະພັນແມ່ຍິງ | ສະຫະພັນແມ່ຍິງແຂວງ |
| 5 | ນ. ນິງລັກ | ປະສານງານ | ສະຫະພັນແມ່ຍິງແຂວງ |
| 6 | ນ. ທອງສຸກ | ວິຊາການ | ສະຫະພັນແມ່ຍິງແຂວງ |
| 7 | ທ. ທອງສັກ ພິມມະຈັນ | ຮອງຫົວໜ້າພະແນກ | ການຄ້າ |
| 8 | ນ. ປິ່ນແກ້ວ | ວິຊາການ | ພະແນກກະສິກຳ |
| 9 | ທ່ານ ກາບແກ້ວ ສີບຸນມາ | ຮອງພະແນກ | ພະແນກສຶກສາແຂວງ |
| 10 | ທ. ວຽງຄຳຈັນ | ຮອງພະແນກ | ຖະແຫລງຂ່າວ ແລະ ວັດທະນະທຳ |
| 11 | ທ. ພວງຄຳ ພິສາເກດ | ຮອງຫົວໜ້າພະແນກ | ຄົມມະນາຄົມ |
| 12 | ດຣ ຄຳຫລ້າ | ຮອງພະແນກ | ສາທາແຂວງ |
| 13 | ທ. ສີພະຈັນ | ວິຊາການ | ອົງການຊວ່ຍເຫລືອເດັກອິສະຕາລີ |
| 14 | ທ່ານ ໄລ ເພັດໄຊ | ຮອງເຈົ້າເມືອງ | ເມືອງເງິນ |
| 15 | ນ. ບົວຄຳ ທຳມະວົງ | ປະທານ ສະຫະພັນແມ່ຍິງ | ເມືອງເງິນ |
| 16 | ທ. ໄຊຊະນະ ສໍລາງກຸນ | ຫົວໜ້າແຜນງານຂັ້ນເມືອງ | ເມືອງເງິນ |
| 17 | ນ. ສີທອນ ມາສູ່ວັນ | ຮອງປະທານສະຫະພັນແມ່ຍິງ | ເມືອງເງິນ |
| 18 | ທ່ານ ທອງວັນ ຄືຢາງ | ເຈົ້າເມືອງ | ຄອບ |
| 19 | ນາງ ບົວຊຽວ | ຮອງປະທານສະຫະພັນແມ່ຍິງ | ຄອບ |
| 20 | ນາງສອນ ຄ່າຍຄຳ | ສະຫະພັນແມ່ຍິງບ້ານ | ຄອບ |
| 21 | ທ. ຈັນເພັງອູ່ທອງຄຳ | ຫົວໜ້າແຜນງານເມືອງ | ເມືອງຄອບ |
| 22 | ນ. ບົວພັນ ສັນຕິ | ວິຊາການສະຫະພັນແມ່ຍິງ | ເມືອງຄອບ |
| 23 | ທ່ານ ຈິນດາ | ຮອງເຈົ້າເມືອງ | ໄຊຍະບູລີ |
| 24 | ທ, ຄຳເພັຍ | ຮອງຫົວໜ້າແຜນງານ | ເມືອງໄຊຍະ |
| 25 | ນ. ວັນນະພອນ ທໍ່ | ຜູ້ປະສານງານ | ສະຫະພັນແມ່ຍິງເມືອງໄຊຍະ |
| 26 | ທ. ຄິດທະສັກ | ຕິດຕາມປະເມີນຜົນ | ເມືອງໄຊຍະ |
| 27 | ນ. ບົວຜັນຈັນທະວົງ | ສະຫະພັນແມ່ຍິງບ້ານ | ໂພນໂຮມ ເມືອງໄຊຍະບູລີ |
| 28 | ນ. ວັນ ເພັງຢາ | ປະທານສະຫະພັນແມ່ຍິງ | ເມືອງຊຽງຮ່ອນ |
| 29 | ນາງ ທົງຄຳ ຍົດບຸນ | ຮອງປະທານສະຫະພັນແມ່ຍິງ | ຊຽງຮ່ອນ |
| 30 | ນາງ ແສງ ປັນຍາທອງ | ສະຫະພັນແມ່ຍິງບ້ານ | ຊຽງຮ່ອນ |
| 31 | ບົວແພງ ອິນທະວົງ | ຕິດຕາມປະເມີນຜົນ | ແຜນງາເມືອງຊຽງຮ່ອນ |
| 32 | ນ.ບົວຄຳຈັນທະວິໄລ | ປະທານສະຫະພັນແມ່ຍິງ | ເມືອງຊຽງຮ່ອນ |
| 33 | ທ່ານ ພູມມາ ສີສະຫວັດ | ຮອງເຈົ້າເມືອງ | ທົ່ງສາ |
| 34 | ທ່ານ ພູວັງ ກອງຊັບ | ຫົວໜ້າແຜນງານເມືອງ | ທົ່ງສາ |
| 35 | ນ. ຈັນທີ | ຮອງປະມານສະຫະພັນແມ່ຍິງ | ເມືອງທົ່ງສາ |
| 36 | ນ. ຄຳຜູ ສະຫງວນສິດ | ຄະນະສະຫພັນແມ່ຍິງ | ເມືອງທົ່ງສາ |

| | | | |
|---|---|---|---|
| 37 | ທ. ບັນດິດ | ທີ່ປຶກສາ ທະນາຄານບ້ານ | ແຜນງານແຂວງ |
| 38 | ທ. ພວງ | ທີ່ປຶກສາ ຢາເສບຕິດ | ແຜນງານແຂວງ |
| 39 | ທ. ສິມຈິດ | ທີ່ປຶກສາ ການສຶກສາ | ແຜນານແຂວງ |
| 40 | ນ. ວິໄລນີກາ | ທີ່ປຶກສາດ້ານການຕະຫລາດ | ແຜນງານແຂວງ |
| 41 | ທ. ຄາຖາ | ທີ່ປຶກສາການວາງແຜນຂົງເຂດ | ແຜນງານແຂວງ |
| 42 | ທ. ທິບອຳພອນ | ທີ່ປຶກສາດ້ານການຄຸ້ມຄອງຊັບພະຍາກອນທຳມ | ແຜນງານແຂວງ |
| 43 | ທ. ເພັງພິລາ | ທີ່ປຶກສາດ້ານການລ້ຽງສັດ | ແຜນງານແຂວງ |
| 44 | ທ. ພັນສີ | ຜູ້ຊ່ວຍດ້ານກະສິກຳ | ແຜນງານແຂວງ |
| 45 | ນາງ ສີດາວອນ | ຜູ້ຊ່ວຍດ່ານການວາງແຜນນຳໃຊ້ທີດິນ | ແຜນງານແຂວງ |
| 46 | ດອນ | ວິຊາການຫອ້ງການແນວຫລັງ | ແຂວງ |
| 47 | ນ. ນາລີ ຊຸມພູມີ | ຕິດຕາມປະເມີນຜົນ | ແຜນງານແຂວງ |
| 48 | ທ. ຈັນ | IKM | PPCU |
| 49 | ທ. ອຳພອນ ສຸວັນນະວົງ | ພະນັກງານພັດທະນາຊຸມຊົນເມືອງ | ເມືອງເງິນ |
| 50 | ນ. ໄພວັນ | ພະນັກງານພັດທະນາຊຸມຊົນບ້ານ | ເມືອງເງິນ. |
| 51 | ທ. ແສງທອງ | ພະນັກງານພັດທະນາຊຸມຊົນເມືອງ | ເມືອງຫົງສາ |
| 52 | ທ. ດາວສອນ ມະນີວົງ | ພະນັກງານພັດທະນາຊຸມຊົນບ້ານ | ເມືອງຫົງສາ |
| 53 | ນ. ລັດສະໝີ | ພະນັກງານພັດທະນາຊຸມຊົນບ້ານ | ເມືອງຫົງສາ |
| 54 | ທ.ແກ້ວອຸດອນ | ພະນັກງານພັດທະນາຊຸມຊົນເມືອງ | ໄຊຍະບູລີ |
| 55 | ນ. ຄຳເຟືອງ ສະລາວີ | ພະນັກງານພັດທະນາຊຸມຊົນບ້ານ | ເມືອງໄຊຍະ |
| 56 | ທ. ວິໄລວານ | ພະນັກງານພັດທະນາຊຸມຊົນບ້ານ | ເມືອງໄຊຍະ |
| 57 | ທ. ຊົງມາວ | ພະນັກງານພັດທະນາຊຸມຊົນເມືອງ | ຄອບ |
| 58 | ນ. ສຸດາພອນ ໂພທິລັກ | ພະນັກງານພັດທະນາຊຸມຊົນບ້ານ | ຄອບ |
| 59 | ທ. ຂວັນໃຈ ລໍວັນໄຊ | ພະນັກງານພັດທະນາຊຸມຊົນເມືອງ | ຊຽຝຮອ່ນ |
| 60 | ນ. ສີສອນເພັດ | ພະນັກງານພັດທະນາຊຸມຊົນບ້ານ | ຊຽງຮອ່ນ |
| 61 | ທ ລຳມະທຸ | ວິຊາການທະນາຄານບ້ານ | ເມືອງຫົງສາ |
| 62 | | | |



Published by
Deutsche Gesellschaft für
Technische Zusammenarbeit (GTZ) GmbH

– German Technical Cooperation –

Rural Development in Mountainous Areas
of Northern Lao PDR (RDMA)

PO Box 9233
Vientiane, Lao PDR

T: +856 21 353605
F: +856 21 312408
E: rdma@gtzrural.org
I: www.gtzrural.org